<u>**ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ**</u>

**Copyright © 2017 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 7557 Rambler Road, Suite 1200, Dallas, TX 75231-2388.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປື້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY PRESS® Leadership Team

Executive Director, Baptist General Convention of Texas: David Hardage
Director, Great Commission Team: Delvin Atchison
Publisher, BAPTISTWAY PRESS®: Scott Stevens

Language Materials Team

Bible Study Writer for Lessons 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 4, 5, 6
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 7, 8, 9, 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7, 8, 9, 10
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 10, 11, 12, 13 and Easter
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10, 11, 12, 13 and Easter
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ບົດຮຽນທີ 1

## ການຊົງສ້າງໂລກຂອງພຣະເຈົ້າ: ຮູບຮ່າງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ປະຖົມມະການ ບົດທີ 1:1-13

**ພູມຫລັງຂອງພຣະຄັມພີ**: ປະຖົມມະການ ບົດທີ 1:1-13

**ຈຸດສຳຄັນສຳລັບບົດຮຽນນີ້**: ພຣະເຈົ້າງສຳແດງຣິດອຳນາດຂອງພຣະອົງ ໃນການຊົງສ້າງຈັກວານອັນນີ້

**ຄຳຖາມ ເພື່ອການຄົ້ນຄວ້າ**: ການຊົງສ້າງມີຄວາມສຳຄັນຢ່າງໃດກ່ຽວກັບຣິດອຳນາດຂອງພຣະເຈົ້າ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອສຳແດງເຖິງຣິດອຳນາດຂອງພຣະເຈົ້າໃນການຊົງສ້າງຈັກວານນີ້ໂດຍພຣະຄຳຂອງພຣະອົງເອງ.

### ຄຳນຳ

ຖ້າທ່ານຫາກເປັນຜູ້ນຶ່ງທີ່ມັກເຮັດອາຫານ, ຈົ່ງຄິດຫາອາຫານຢ່າງນຶ່ງທີ່ທ່ານຊຳນານທີ່ສຸດ. ການປຸງແຕ່ງແມ່ນແນ່ນອນຕ້ອງມີຫລາຍບາດກ້າວ. ທ່ານຈະຕ້ອງໄດ້ລະມັດລະວັງໃນສ່ວນປະສົມທີ່ຈະນຳມາເຮັດທ່ານຈະຕຽມທຸກຢ່າງແລ້ວກໍມາວາງໄວ້ທີ່ຂ້າງໆ, ຫລັງຈາກນັ້ນທ່ານກໍຈະຕຽມໝໍ້ກະທະມາ ເພື່ອປະກອບສ່ວນຕ່າງໆເຂົ້າກັນ ແລ້ວກໍຖືວ່າສຳເຣັດແລ້ວ.

ນີ້ກໍແຕກຕ່າງກັບການຊົງສ້າງຂອງພຣະເຈົ້າໃນເວລາທີ່ພຣະອົງຊົງສ້າງຈັກວານໃນພຣະທັມປະຖົມມະການ. ເວລາພວກເຮົາເຮັດອາຫານ, ພວກເຮົາໄປຊອກຫາສິ່ງທີ່ມີຢູ່ແລ້ວມາປະກອບໃສ່ກັນ, ແລ້ວກໍໃສ່ຊື່ໄປຕ່າງໆນາໆ ເຊັ່ນ: ແກງ, ເອາະ, ຕົ້ມ, ແຈ່ວ.........ຢ່າງໃດກໍຕາມເມື່ອພຣະເຈົ້າສ້າງຈັກວານນີ້, ພຣະອົງບໍ່ໄດ້ເອົາວັດຖຸອັນໃດມາຈາກໃສ. ພຣະອົງຊົງສ້າງທຸກຢ່າງອອກມາຈາກຄວາມວ່າງເປົ່າ.

ພຣະເຈົ້າຄືທີ່ມາຂອງຈັກວານ, ດັ່ງນັ້ນແຫລະ ພຣະຄັມພີເຫລັ້ມນີ້ຈຶ່ງເລີ້ມຕົ້ນດ້ວຍການຊົງສ້າງ, ໃນປໂຍກແລກຈຶ່ງກ່າວວ່າ ໃນປະຖົມມະການ ພຣະເຈົ້າຊົງນິຣະມິດສ້າງຟ້າແລະແຜ່ນດິນໂລກ.(ປຖກ. 1:1) ພຣະອົງຊົງເປັນຢູ່ກ່ອນທຸກສິ່ງທຸກຢ່າງແລ້ວ ແລະພຣະອົງຊົງເປັນຢູ່ຢ່າງນັ້ນຕລອດມາ. ພຣະອົງຊົງສະຖິດຢູ່ໃນໂລກ, ຢູ່ເໜືອໂລກ, ພຣະອົງບໍ່ມີຂອບເຂດ, ບໍ່ມີສິ່ງໃດທີ່ຈະຜູກມັດພຣະອົງໄວ້ໄດ້ ແລະບໍ່ມີສິ່ງໃດທີ່ຈະກີດກັ້ນອຳນາດຂອງພຣະອົງໄວ້ໄດ້.

ຕົ້ນເດີມແລ້ວ ພຣະທັມປະຖົມມະການແມ່ນເວລາທີ່ພຣະເຈົ້າຊົງເອີ້ນບອກຄົນເຮັບເຣີໃຫ້ເປັນແສງສະວ່າງໃຫ້ແກ່ທຸກຊົນຊາດ. ພວກເຂົາເຈົ້າທັງຫລາຍກໍເຊື່ອຟັງຕາມກົດບັນຍັດຂອງອັບຣາຮາມເພື່ອຈະໄດ້ຮັບພຣະພອນຕາມໆກັນມາ ແລະກໍຍັງສັ່ງໄວ້ວ່າ ນີ້ຄືພຣະເຈົ້າອົງທ່ຽງແທ້ (ປຖກ. 12:3) ພຣະຄັມພີປະຖົມມະການຈຶ່ງເປັນໝາກຫົວໃຈຂອງຊົນຊາດອິສຣາເອນຕລອດມາ ຄື ເຢໂຮວາອົງດຽວ (ພບຍ. 6:4,5)

**1. <u>ການຊົງສ້າງດ້ວຍຣິດອຳນາດ</u>**: (ປະຖົມມະການ 1:1-2)

ກ່ອນແຜ່ນດິນໂລກນີ້ຈະເປັນຮູບຮ່າງຂຶ້ນມາ, ພຣະເຈົ້າຊົງມີຢູ່ແລ້ວ. ໂດຍຜ່ານການຊົງສ້າງຂອງພຣະອົງ: ພຣະອົງຊົງເປັນຢູ່ຕລອດໄປ ຜ່ານມາ, ປັດຈຸບັນແລະອະນາຄົດ. ແຜ່ນດິນໂລກປາສຈາກຮູບຮ່າງ, ວ່າງເປົ່າຢູ່, ຄວາມມືດຢູ່ເໜືອນ້ຳ ແລະພຣະວິນຍານຂອງພຣະເຈົ້າກໍປົກຄຸມຢູ່ເໜືອໜ້ານ້ຳນັ້ນ. (ປຖກ. 1:2) ມີພຣະເຈົ້າພຽງຜູ້ດຽວທີ່ເປັນຢູ່, ພຣະອົງເປັນຜູ້ຄອບຄອງທັງໝົດແລະເປັນຜູ້ຮັບຜິດຊອບທັງໝົດ. ພຣະອົງຮູ້ເຖິງສ່ວນສຳຄັນຕ່າງໆທັງໝົດໃນໂລກນີ້.

ພຣະອົງບໍ່ໄດ້ຢຸດຢັ້ງຢູ່ໃນການສ້າງ ພຣະວິນຍານຂອງພຣະອົງຢູ່ທີ່ໃດພຣະອົງກໍຊົງສ້າງໄປເລື້ອຍໆ. ໃນປັດຈຸບັນນີ້ ພຣະອົງກໍຍັງຊົງສ້າງ, ສ້າງມະນຸດ: ສ້າງແລ້ວກໍສ້າງອີກ. ພຣະເຈົ້າຍັງມີໜ້າທີ່ວາງລະບຽບການໃນການເດີນຂອງມວນມະນຸດ ແລະພຣະອົງກໍບໍ່ເຄີຍປະລະໜ້າທີ່ຂອງພຣະອົງ. ພຣະອົງຊົງຄຸ້ມຄອງໂລກນີ້ຕລອດໄປ.

ການເຄື່ອນໄຫວຂອງພຣະອົງຢູ່ໃນຕົວຂອງພວກເຮົາທຸກຄົນ ຄືພຣະອົງຈະນຳພາພວກເຮົາໃຫ້ເຖິງຈຸດໝາຍ. ພຣະອົງເປັນຜູ້ຈັດຕຽມເປົ້າໝາຍ ເພື່ອໃຫ້ພວກເຮົານຳພາລູກຫລານໃຫ້ສືບທອດຕໍ່ໆໄປ. ພຣະອົງຊົງຮູ້ຫລາຍກວ່າທີ່ພວກເຮົາຮູ້ ເພາະພຣະອົງຊົງມີສາຍຕາກວ້າງໄກກວ່າພວກເຮົາ. ພວກເຮົາຄວນທຳໃຈໃຫ້ສະບາຍ ທີ່ພວກເຮົາໄດ້ຮູ້ວ່າພຣະເຈົ້າຊົງຮູ້ຈັກພວກເຮົາດີ, ພຣະອົງຢູ່ນຳພວກເຮົາໃນທຸກວັນນີ້ ພຣະເຈົ້າເໜືອສັພທຸກສິ່ງ.

**<u>2. ພຣະເຈົ້າຊົງສ້າງແສງສະວ່າງ</u>: (ປະຖົມມະການ** 1:3-5)

ສິ່ງທຳອິດທີ່ພຣະເຈົ້າຊົງສ້າງຄືແສງສະວ່າງ. ຈົ່ງເກີດຄວາມສະວ່າງ ຄວາມສະວ່າງກໍເກີດຂຶ້ນ. ພຣະອົງໄດ້ຊົງສ້າງໂດຍພຣະຄຳຂອງພຣະອົງ. ພຣະອົງບໍ່ໄດ້ສ້າງເໝືອນກັບມະນຸດສ້າງບ້ານເຮືອນຢູ່ໃນໂລກນີ້, ຕ້ອງຊອກຫາເສົາ, ຊອກຫາຫລັງຄາ… ພຽງແຕ່ພຣະອົງຊົງກ່າວ ແລ້ວສິ່ງນັ້ນກໍເກີດຂຶ້ນຕາມຄຳສັ່ງ. ນີ້ກໍສະແດງເຖິງອຳນາດ, ສະແດງເຖິງການເຊື່ອຟັງຂອງທັມຊາດ. ເມື່ອພຣະອົງຊົງສັ່ງ ທຸກສິ່ງຢ່າງໃນໂລກນີ້ແມ່ນເຊື່ອຟັງພຣະອົງທັງໝົດ. ພວກເຮົາກໍແມ່ນສ່ວນນ້ອຍໆອັນນຶ່ງທີ່ຕ້ອງເຊື່ອຟັງໂດຍບໍ່ມີເງື່ອນໄຂ. ຄຳສັ່ງທີ່ພຣະອົງສັ່ງໃນພຣະຄັມພີ ແມ່ນຄຳສັ່ງສຸດທ້າຍຂອງພຣະຜູ້ສ້າງພວກເຮົາ.

ຖ້າຈະເບິ່ງໃຫ້ຄັກໆແລ້ວ, ແສງສະວ່າງແມ່ນຮູບພາບຂອງພຣະເຈົ້າທີ່ພຣະອົງນຳພາຄົນຂອງພຣະອົງໃນໂລກນີ້, ພວກເຮົາກຳລັງເດີນຕາມແສງສະວ່າງຂອງພຣະອົງທຸກວັນ. ແສງສະວ່າງຂອງພຣະອົງບໍ່ເໝືອນແສງສະວ່າງທີ່ມາຈາກດວງອາທິດ, ມາຈາກດວງເດືອນ ຫລືມາຈາກດວງດາວທີ່ພຣະອົງຊົງສ້າງຂຶ້ນໃນວັນທີສີ່. ເມື່ອພຣະອົງສ້າງແລ້ວຊົງເຫັນວ່າດີ ແລະຄວາມດີນັ້ນແຫລະຄືຄວາມສະວ່າງຂອງພຣະເຈົ້າທີ່ນຳພາຊີວິດປະຈຳວັນຂອງລູກໆຂອງພຣະອົງ.

## 3. <u>ພຣະເຈົ້າຊົງສ້າງຟ້າແລະນ້ຳທະເລ</u>: (ປະຖົມມະການ 1:6-8)

ໃນວັນທີສອງຂອງການຊົງສ້າງນີ້, ພຣະເຈົ້າຊົງແຍກນ້ຳແລະແຜ່ນດິນອອກຈາກກັນ. ເປັນຄຳສັ່ງຂອງພຣະເຈົ້າເໝືອນເດີມ ແລ້ວພຣະອົງກໍເອີ້ນຊື່ພາກພື້ນນັ້ນວ່າຟ້າ. (ປຖກ. 1:8)

ພຣະເຈົ້າຊົງມີຄວາມແນວແນ່ໃນພຣະທັຍຂອງພຣະອົງໄວ້ແລ້ວວ່າ  ຈະສ້າງອີກຫລາຍສິ່ງຫລາຍຢ່າງ ດັ່ງນັ້ນ ກ່ອນຈະສ້າງ ພຣະອົງກໍໄດ້ຈັດຕຽມທີ່ຢູ່ ທີ່ໄປ ທີ່ມາ ໃຫ້ແກ່ສິ່ງເຫລົ່ານັ້ນ.  ພຣະອົງຍັງສືບຕໍ່ໃຊ້ພຣະຄຳ ແລະຣິດອຳນາດໃນການຊົງສ້າງໂດຍເປັນລຳດັບໆໄປ. ການຊົງສ້າງຕ່າງໆແມ່ນພຣະອົງຊົງມີເປົ້າໝາຍທີ່ດີ. ພວກເຮົາອາດຈະບໍ່ໄດ້ຮັບທຸກສິ່ງຢ່າງຕາມຄວາມຕ້ອງການຂອງເຮົາໃນທັນທີທັນໃດ, ແຕ່ພຣະອົງກໍຊົງກະທຳການດີເພື່ອທຸກຢ່າງໃນຊີວິດ.

## 4. <u>ພຣະເຈົ້າຊົງສ້າງແຜ່ນດິນໂລກ</u>: (ປະຖົມມະການ 1:9-13)

ຄຳສັ່ງຕໍ່ໄປຄື: ນ້ຳຢູ່ໃຕ້ຟ້ານີ້ຈົ່ງມາຮວມກັນທີ່ດຽວ ນີ້ກໍໝາຍຄວາມວ່ານ້ຳຈະຕ້ອງໄຫລໄປຫາທີ່ຕ່ຳ ແລ້ວພຣະອົງກໍເອີ້ນວ່າທະເລ,  ແລະສ່ວນທີ່ສູງຂຶ້ນເໜືອນ້ຳນັ້ນພຣະອົງກໍເອີ້ນວ່າແຜ່ນດິນ. ແລ້ວພຣະເຈົ້າກໍບອກວ່າດີ. (ປະຖົມມະການ 1:9-10)   ຕໍ່ມາພຣະອົງກໍຊົງສັ່ງວ່າພືດພັນຕ່າງໆນາໆ ຈົ່ງເກີດຂຶ້ນມາ.  ຜັກຫຍ້າ ຕົ້ນໄມ້ທີ່ມີເມັດ ຕົ້ນໄມ້ທີ່ອອກໝາກຜົນຕາມຊະນິດຂອງມັນກໍເປັນດັ່ງນັ້ນ. ພຣະເຈົ້າເຫັນວ່າດີ ແລະນີ້ກໍເປັນວັນທີສາມ.

ການເລີ່ມຕົ້ນຂອງຕົ້ນໄມ້ກໍຄືຈະເຣີນເຕີບໂຕ ແລ້ວກໍຈະມີໝາກຜົນຕາມລະດູການຂອງມັນ.  ດັ່ງນັ້ນຄວາມຈະເຣີນເຕີບໂຕຂອງຄຣິສຕຽນຈຶ່ງເປັນເຫດຜົນໃຫຍ່ທີ່ສຳຄັນຂອງພຣະເຈົ້າ.  ບົດທີ່ຈະມາໃນຕໍ່ໄປຄືປະຖົມມະການ ບົດທີ 3 ແມ່ນຈະເວົ້າເຖິງເຣື່ອງຕົ້ນໄມ້ແຫ່ງຊີວິດ ຊຶ່ງເປັນເຣື່ອງທີ່ຈະເວົ້າເຖິງເນື້ອໜັງ ແລະຈິດວິນຍານ.  ພຣະເຈົ້າບໍ່ເຄີຍມີພຣະປະສົງທີ່ຈະທຳລາຍພວກເຮົາທີ່ເປັນມະນຸດ ພຣະອົງຕ້ອງການໃຫ້ພວກເຮົາກັບຄືນມາຫາສວນເອເດນແລະຕົ້ນໄມ້ແຫ່ງຊີວິດ.

ທີ່ຄຣິສຕຽນຈະເຕີບໃຫຍ່ໄດ້ກໍຕ້ອງອາສັຍພລັງອຳນາດຂອງພຣະເຈົ້າທີ່ທຳງານຢູ່ພາຍໃນຕົວຂອງພວກເຮົາເທົ່ານັ້ນ. ເໝືອນດັ່ງພຣະອົງຊົງສ້າງຕົ້ນໄມ້ແລະພືດພັນຕ່າງໆ. ພຣະອົງສ້າງພວກເຮົາເພື່ອໃຫ້ໃຫຍ່ແລະຜລິດໝາກຜົນ. (ໂຢຮັນ 15:1-8)  ພວກເຮົາຈະເຫັນເຖິງໝາກຜົນແຫ່ງພຣະວິນຍານທີ່ພຣະອົງຊົງເຮັດໃຫ້ເຕີບໂຕດ້ວຍພລັງອຳນາດຂອງພຣະອົງ (ຄາລາເຕັຍ 5:22-23) ຖ້າຂາດຈາກພລັງອຳນາດຂອງພຣະວິນຍານບໍຣິສຸດແລ້ວ ຊີວິດຂອງພວກເຮົາກໍຈະຂາດຄວາມໝາຍ ບໍ່ມີທາງທີ່ຈະຈະເຣີນເຕີບໂຕໄດ້.

## <u>ຄວາມໝາຍແລະພາກປະຕິບັດ</u>

ພຣະເຈົ້າຂອງພວກເຮົາເປັນຜູ້ມີພລັງອຳນາດຫລາຍ. ພຣະອົງຊົງສ້າງທຸກຢ່າງດ້ວຍພຣະຄຳຂອງພຣະອົງ ສິ່ງທີ່ຢູ່ເລິກທີ່ສຸດຂອງນ້ຳທະເລ ຫລືທີ່ສູງສຸດໃນທ້ອງຟ້າ. ພຣະອົງຍັງສືບຕໍ່ສ້າງພວກເຮົາ ແລະກໍຍັງຄອງບັນລັງໃຈຂອງພວກເຮົາທຸກຄົນ. ແສງສະວ່າງຂອງພຣະອົງຍັງນຳພາພວກເຮົາໃນການດຳເນີນຊີວິດ ໃນໂລກນີ້. ພຣະອົງບໍ່ມີທີ່ສິ້ນສຸດ, ພຣະອົງຄຸ້ມຄອງໂລກນີ້ຕລອດໄປດ້ວຍພຣະວິນຍານບໍຣິສຸດຂອງພຣະອົງ.

**ຄຳຖາມ:**

1. ພິຈາຣະນາເບິ່ງການຊົງສ້າງໂລກຂອງພຣະເຈົ້າ, ທ່ານເຫັນພຣະຫັດຂອງພຣະເຈົ້າເຮັດຢ່າງໃດ?

2. ໃນປະຖົມມະການ ບົດ 1:2 ໄດ້ອະທິບາຍເຖິງເງື່ອນໄຂໃນການຊົງສ້າງຈັກວານ ຄວາມວ່າງເປົ່າ, ຄວາມມືດ. ໃຫ້ພິຈາຣະນາເບິ່ງດູວ່າ ເມື່ອທ່ານຕົກຢູ່ໃນສະພາບນີ້ທ່ານຈະຄິດຢ່າງໃດ? ພຣະເຈົ້າມີສ່ວນຮ່ວມຢ່າງໃດແດ່ບໍ່ ເພື່ອຈະປ່ຽນແປງສິ່ງເຫລົ່ານີ້?

3. ໃນວັນແລກ ພຣະອົງໄດ້ຊົງສ້າງແສງສະວ່າງ. ຕັ້ງແຕ່ເລີ້ມຕົ້ນຈົນເຖິງສຸດທ້າຍ ແສງສະວ່າງແມ່ນພຣະລັກສະນະຂອງພຣະເຈົ້າ, ແມ່ນຄວາມຊອບທັມຂອງພຣະເຈົ້າ, ແລະກໍແມ່ນຄວາມບໍຣິສຸດຂອງພຣະເຈົ້າ. ທ່ານຈະເປັນແສງສະວ່າງຂອງພຣະເຈົ້າຢູ່ໃນໂລກແຫ່ງຄວາມມືດຂອງໂລກນີ້ໄດ້ຢ່າງໃດ? (ມັດທາຍ 5:14-16)

4. ໃນວັນທີສອງ ພຣະເຈົ້າໄດ້ແຍກນ້ຳເພື່ອຈະສ້າງແຜ່ນດິນ ພຣະອົງຊົງຕັ້ງຂອບເຂດຂອງສິ່ງເຫລົ່ານີ້ຢ່າງໃດ? ເພື່ອໃຫ້ທຸກຢ່າງຢູ່ໄດ້ຕາມຊະນິດຂອງຕົນ.

5. ໃນວັນທີສາມພຣະເຈົ້າຊົງສ້າງພືດແລະຕົ້ນໄມ້. ຈົ່ງຄິດເບິ່ງວ່າ ພືດແລະຕົ້ນໄມ້ເຕີບໂຕ, ເກີດໝາກຜົນຢ່າງໃດ? ສິ່ງເຫລົ່ານີ້ສະແດງເຖິງອັນໃດ?

6. ໃນບົດຮຽນນີ້ພຣະເຈົ້າໄດ້ວາງຮາກຖານໃນການຊົງສ້າງຊີວິດ. ພຣະເຈົ້າຊົງຈັດຕຽມຢ່າງໃດ ແລະຊົງມີພຣະປະສົງຢ່າງໃດຕໍ່ມະນຸດ?
(….ແຕ່ງງານ...ມີລູກ.....ທຳງານ.....ປ່າວປະກາດ...ແລະຕໍ່ໆໄປ.....)

*ບພ*

# ບົດຮຽນທີ 2
## <u>ການຊົງສ້າງຂອງພຣະເຈົ້າ:ສ້າງຕື່ມ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້</u>**: ປະຖົມມະການ 1:14-25; 2:1-3

**<u>ພູມຫລັງຂອງພຣະຄັມພີ</u>**: ປະຖົມມະການ 1:14-25; 2:1-3

**<u>ຈຸດສໍາຄັນສໍາລັບບົດຮຽນນີ້</u>**: ພຣະເຈົ້າຊົງເພີ້ມເຕີມໂລກນີ້ໃນການຊົງສ້າງໂດຍພຣະຄໍາ ຫລັງຈາກນັ້ນພຣະອົງກໍຊົງພັກຜ່ອນ.

**<u>ຄໍາຖາມເພື່ອການຄົ້ນຄວ້າ</u>**: ແມ່ນຫຍັງຄືການສ້າງທີ່ໂດດເດັ່ນແລະເປົ້າໝາຍສູງທີ່ສຸດຂອງພຣະເຈົ້າ?

**<u>ຈຸດປະສົງຂອງບົດຮຽນນີ້</u>**: ເພື່ອໃຫ້ພິຈາຣະນາເຖິງຈຸດປະສົງຂອງພຣະເຈົ້າໃນການຊົງສ້າງດ້ວຍພຣະຄໍາ ແລະການຊົງພັກຜ່ອນ.

### <u>ຄໍານໍາ</u>

ໃນບົດຮຽນຜ່ານມາ, ພວກເຮົາໄດ້ເຫັນການສ້າງໂລກສ້າງຈັກວານຂອງພຣະເຈົ້າຄືສ້າງເປັນຮູບຮ່າງໃນໄລຍະສາມມື້. ມື້ທີນຶ່ງສ້າງການແຍກແສງສະວ່າງແລະຄວາມມືດ. ມື້ທີສອງ ພຣະອົງສ້າງທ້ອງຟ້າແລະນ້ໍາທະເລ ແລະມື້ທີສາມພຣະອົງສ້າງແຜ່ນດິນ, ພືດພັນແລະຕົ້ນໄມ້ຕ່າງໆ. ພາຍໃນສາມມື້ພຣະອົງຊົງສ້າງທຸກຢ່າງແບບມີເປົ້າໝາຍ. ພຣະອົງຊົງຮູ້ດີວ່າວັນຕໍ່ໄປພຣະອົງຈະຊົງສ້າງອັນໃດ.

ກ່ອນຈະສ້າງເຮືອນຫລັງນຶ່ງ ນັກວິສວະກອນຕ້ອງໄດ້ເອົາດິນໄປກວດກາເສັຽກ່ອນວ່າດິນຈະຮັບນ້ໍາໜັກໄດ້ຫລາຍສໍ່າໃດ. ຫລັງຈາກນັ້ນຈຶ່ງມາສໍາຣວດໜ້າດິນ, ແລະແລ້ວກໍຈຶ່ງຫາທາງລະບາຍນ້ໍາ ເພື່ອຈະວາງ ພື້ນຖານຂອງເຮືອນຢ່າງແໜ້ນໜາ. ຕໍ່ມາກໍຈະແມ່ນພວກທີມກໍ່ສ້າງມາຕຽມວາງເສົາ, ຄານ, ພື້ນ...ເພື່ອຈະຊ່ວຍໃຫ້ພື້ນຖານໃຫ້ເຂັ້ມແຂງ. ຫລັງຈາກນັ້ນອີກກໍຈະສ້າງຕໍ່ຂຶ້ນໄປຈົນສໍາເຣັດ.

ທໍານອງດຽວກັນ, ພຣະເຈົ້າກໍຊົງວາງຮາກຖານໃນການສ້າງໂລກເຊັ່ນກັນ. ພຣະອົງສ້າງຈັກວານ, ສ້າງນ້ໍາ ແລະສ້າງດິນ. ພຣະເຈົ້າຊົງຕຽມໂລກເພື່ອຈະສ້າງຊີວິດຂຶ້ນໃນໂລກນີ້. ຄົນແລະສັດຈະບໍ່ສາມາດມີຊີວິດຢູ່ໄດ້ຫາກປາສຈາກການຈັດຕຽມສິ່ງຕ່າງໆກ່ອນ. ຈຸດປະສົງຂອງພຣະເຈົ້າຊ່າງຍິ່ງໃຫຍ່ຫລາຍແທ້ໆ ພວກເຮົາທັງຫລາຍຄວນຈະເອົາເປັນຕົວຢ່າງ.

### 1. <u>ພຣະເຈົ້າຊົງສ້າງດວງສະວ່າງ</u>: (ປະຖົມມະການ 1:14-19)

ພຣະເຈົ້າຍັງສືບຕໍ່ສໍາແດງສິ່ງທີ່ເກີດຂຶ້ນໃນສວັນແລະແຜ່ນດິນໂລກ. ເມື່ອມາເຖິງວັນທີສີ່ພຣະອົງຊົງຢຸດຈາກການສ້າງແຜ່ນດິນແລະພືດຜັກຕົ້ນໄມ້ ແລ້ວກໍຄືນມາສ້າງຕາເວັນ, ເດືອນ ແລະ ດາວ ໃຫ້ຢູ່ຕາມຈຸດຂອງມັນ. ບາງຄົນອາດຈະມີຄວາມສັບສົນແດ່ໃນວັນທີນຶ່ງ ແລະວັນທີສີ່. ໃຫ້ພວກເຮົາສັງເກດວ່າ

ໃນວັນທີນຶ່ງພຣະເຈົ້າຊົງສ້າງຄວາມສະວ່າງ ແຕ່ວ່າຍັງບໍ່ທັນມີ ດວງຕາເວັນ, ເດືອນ ແລະໝູ່ດາວ. ແຕ່ກໍບໍ່ໜ້າສົງໃສເລີຍ ພຣະເຈົ້າສ້າງດວງຕາເວັນກໍເພື່ອໃຫ້ມີແສງສ່ອງລົງມາໃສ່ໂລກແລະກໍມີຄວາມອົບອຸ່ນ. ສຳລັບເດືອນແລະດາວກໍໃຫ້ຢູ່ໃນກາງຄືນ ຊຶ່ງຈະໃຫ້ໂລກນີ້ໄດ້ຮັບຄວາມຊຸ່ມເຢັນ.

ການໝຸນວຽນຂອງຕາເວັນ, ດວງເດືອນແລະດວງດາວພວກນີ້ໄດ້ກາຍມາເປັນ ວັນ ເດືອນ ເປັນ ລະດູແລະປີຕໍ່ໆໄປ. ເມື່ອມາເຖິງຈຸດນີ້ແລ້ວຜູ້ຂຽນຍັງໄດ້ບັນທຶກຕໍ່ໄປວ່າພຣະອົງໄດ້ສ້າງລະດູການຄື: ລະດູໃບໄມ້ຫລົ່ນ, ລະດູໜາວ, ລະດູໃບໄມ້ປົ່ງ ແລະລະດູຮ້ອນ, ລະດູພວກນີ້ຈະໝູນວຽນໄປໃນຄົບຮອບປີເພື່ອໃຫ້ຖືກກັບສະພາບການກັບສິ່ງທີ່ພຣະອົງຈະສ້າງຂຶ້ນໃນຕໍ່ໄປ.

## 2. <u>ພຣະເຈົ້າຊົງສ້າງສັພສິ່ງເພື່ອໃຫ້ໂລກນີ້ໜ້າຢູ່:</u> (ປະຖົມມະການ 1:20-23)

ໃນວັນທີຫ້າຂອງການຊົງສ້າງ ພຣະເຈົ້າໄດ້ເລີ້ມເຮັດໃຫ້ທ້ອງຟ້າ ອາກາດ ແລະພື້ນແຜ່ນດິນເຕັມໄປດ້ວຍສັດສາວາສິ່ງ ບໍ່ວ່າຈະຢູ່ໃນອາກາດຫລືຢູ່ໃນໃຕ້ນ້ຳ. ໃນການສ້າງໂຄງຮ່າງນີ້ ຜູ້ຂຽນໄດ້ບັນທຶກວ່າພຣະອົງຊົງສ້າງແບບຄຽງຄູ່ກັນໄປ. ໃນວັນນີ້ພຣະອົງຊົງສ້າງນ້ຳ ຊຶ່ງເຕັມໄປດ້ວຍສິ່ງທີ່ມີຊີວິດ, ແລະສັດນ້ຳຂນາດໃຫຍ່.

ທັນໃດນັ້ນພຣະອົງກໍຊົງສັ່ງອີກວ່າ ຈົ່ງໃຫ້ມີນົກເຕັມທົ່ວທ້ອງອາກາດຕາມຊະນິດຂອງໃຜຂອງລາວ ແລະພຣະເຈົ້າກໍຊົງເຫັນວ່າດີ. ນີ້ຄືຄຳອວຍພອນຂອງພຣະເຈົ້າ: ຈົ່ງອອກລູກແລະຫລານ ແລະທະວີຂຶ້ນຈົນເຕັມທະເລ ແລະຈົ່ງໃຫ້ນົກທະວີຈຳນວນຂຶ້ນຈົນເຕັມໂລກ. ເວລາແລງແລະເວລາເຊົ້າຜ່ານໄປ ນີ້ກໍເປັນວັນທີຫ້າ.

ເວລາພວກເຮົາຫາກເຫັນນົກບິນຢູ່ເທິງອາກາດ, ແລະເຫັນຝູງປາລອຍໄປຕາມນ້ຳ ກໍເຮັດໃຫ້ພວກເຮົາຄິດເຖິງພຣະຜູ້ສ້າງຂອງພວກເຮົາຂຶ້ນມາທັນທີ. ໂອ, ເປົ້າໝາຍຂອງພຣະອົງກໍຄືວ່າ ພຣະອົງຊົງສ້າງນ້ຳທະເລເພື່ອຝູງປູປາທັງຫລາຍ ແລະທ້ອງຟ້າອາກາດກໍແມ່ນເພື່ອຝູງນົກທັງຫລາຍ. ພວກເຮົາທັງຫລາຍມັກກະວົນກະວາຍ, ເຣື່ອງການຊ່ວຍເຫລືອ, ເຣື່ອງການຢູ່ກິນ, ພຣະເຈົ້າຈຶ່ງກ່າວໃນຕອນນຶ່ງໃນມັດທາຍ 6:26 ວ່າ: ຈົ່ງເບິ່ງນົກໃນອາກາດ ມັນບໍ່ໄດ້ຫວ່ານ ບໍ່ໄດ້ກ່ຽວ ບໍ່ໄດ້ສະສົມໄວ້ໃນເລົ້າສາງ ແຕ່ພຣະບິດາຂອງທ່ານທັງຫລາຍຜູ້ຊົງສະຖິດໃນສວັນຊົງລ້ຽງນົກໄວ້ ທ່ານທັງຫລາຍຈະບໍ່ປະເສີດກວ່ານົກບໍ. ພວກເຮົາຄວນຈະອາງໃຈໃນອຳນາດຂອງພຣະອົງ.

## 3. <u>ພຣະເຈົ້າຊົງສ້າງສິ່ງຕ່າງໆແລະມະນຸດ:</u> (ປະຖົມມະການ 1:24-25)

ເມື່ອສ້າງຟ້າອາກາດສຳລັບນົກແລະນ້ຳທະເລເພື່ອປາໃຫຍ່, ປານ້ອຍແລະສິ່ງຕ່າງໆ ແລະອວຍພອນແກ່ສັດເຫລົ່ານັ້ນ ຈົ່ງມີລູກໃຫ້ດົກທະວີມາກຂຶ້ນເທິງແຜ່ນດິນແລະທົ່ວໄປ. ການຊົງສ້າງຂອງພຣະເຈົ້າຍັງຄົງສືບຕໍ່ໄປ ຊົງສ້າງດ້ວຍພຣະຄຳ: ແຜ່ນດິນຈົ່ງເກີດມີສັດທີ່ມີຊີວິດຕາມຊະນິດຂອງມັນ ສັດໃຊ້ງານ ສັດເລືອຄານ ສັດປ່າ ສິ່ງເຫລົ່ານັ້ນແມ່ນເກີດຂຶ້ນມາຕາມຄຳຕັດສັ່ງຂອງພຣະອົງ. ພຣະເຈົ້າສ້າງທຸກຢ່າງຂຶ້ນມາຕາມເປົ້າໝາຍຂອງພຣະອົງເອງ ເພື່ອໂລກຈັກກວານນີ້ຈະມີສັນຕິສຸກ.

ບັດນີ້ພຣະອົງຊົງຢຸດ. ສັດບາງຢ່າງທົນຕໍ່ອາກາດຮ້ອນ, ສັດບາງຢ່າງທົນຕໍ່ອາກາດເຢັນ ແລະສັດບາງຢ່າງກໍຢູ່ໄດ້ໃນອາກາດອຸ່ນ. ສັດບາງໂຕກໍຫາກິນກາງຄືນ, ບາງໂຕກໍຫາກິນກາງວັນ. ສັດບາງຊະນິດກໍກິນພືດເປັນອາຫານ, ບາງຊະນິດກໍກິນສັດ, ກິນເນື້ອເປັນອາຫານ. ສັດບາງຊະນິດທີ່ເປັນສັດນ້ອຍໆເກືອບຈະເບິ່ງບໍ່ເຫັນ ແຕ່ມັນກໍກິນເລືອດຂອງມະນຸດ. ພຣະເຈົ້າສ້າງສັດເຫລົ່ານີ້ຂຶ້ນມາໂດຍມີພຣະປະສົງ ແມ່ນວ່າພວກເຮົາຈະແນມເຫັນຫລືບໍ່ເຫັນກໍຕາມ.

ການຊົງສ້າງທຸກຢ່າງໃນປະຖົມມະການ, ແມ່ນຄຸນຄ່າຂອງການຊົງສ້າງທັງໝົດຂອງພຣະເຈົ້າ. ທຸກຄັ້ງທີ່ພຣະເຈົ້າຊົງສ້າງຂຶ້ນມາພຣະອົງຊົງເຫັນວ່າດີ. (ດັ່ງຈະເຫັນໃນ ຂໍ້ 4,10,12,18,21 ແລະ25) ພວກເຮົາໄດ້ເຫັນໃນບົດຮຽນທີ່ຜ່ານມາແລ້ວ ພຣະອົງຊົງສ້າງທຸກຢ່າງດ້ວຍການຕັດສັ່ງ ທຸກຢ່າງກໍເກີດມີມາແລະທຳງານໄປຕາມໜ້າທີ່ຂອງມັນເອງ.

ພວກເຮົາລອງມາຄິດເລິກໄປນຳກັນເບິ່ງດູ, ພຣະເຈົ້າຈະສ້າງສິ່ງໃດ ເພື່ອຈະໃຫ້ສິ່ງທັງຫລາຍທີ່ພຣະອົງສ້າງໄດ້ສະທ້ອນໃຫ້ເຫັນພຣະອົງຜູ້ຊົງສ້າງ.
**<u>ໝາຍເຫດ</u>**: ພວກເຮົາຈະໄດ້ກັບມາຮຽນ ປະຖົມມະການ 1:26-28 ໃນບົດຮຽນທີ 4)

## 4. <u>ພຣະເຈົ້າຊົງສ້າງວັນຊະບາໂຕ:ວັນພັກຜ່ອນ</u> (ປະຖົມມະການ 2:1-3)

ໃນວັນສຸດທ້າຍຂອງການຊົງສ້າງ, ພຣະອົງຊົງສຳເຣັດວຽກງານຂອງພຣະອົງທີ່ມີເປົ້າໝາຍໄວ້ແລ້ວນັ້ນ. ສິ່ງທີ່ພຣະອົງຊົງສ້າງເພື່ອໃຫ້ສະທ້ອນເຖິງພຣະລັກສະນະຂອງພຣະອົງກໍຮຽບຮ້ອຍໄປ. ແລະແລ້ວພຣະອົງກໍຊົງພັກຜ່ອນ. ຄຳວ່າພັກຜ່ອນນັ້ນແມ່ນຄວາມໝາຍດຽວກັບຄຳວ່າ ຊະບາໂຕ. ພຣະອົງບໍ່ເຄີຍມີຄຳວ່າອິດເມື່ອຍ, ພລັງອຳນາດຂອງພຣະອົງຊົງເຕັມລົ້ນທຸກເວລາ ພຽງແຕ່ພຣະອົງຊົງຢຸດສ້າງແລ້ວກໍຊື່ນຊົມໃນການຊົງສ້າງຜ່ານມາໃນຫົກວັນເທົ່ານັ້ນ.

ລະບຽບແບບແຜນໃນການຢຸດພັກແມ່ນພຣະອົງຊົງຢຸດການກະທຳທຸກຢ່າງ ແລະພຣະອົງກໍຊົງຕັ້ງໄວ້ໃຫ້ເປັນວັນບໍຣິສຸດ (ສັກສິດ). ຢ່າງໃດກໍຕາມ ເມື່ອພວກເຮົາຫາກເຫັນການຊົງສ້າງຂອງພຣະເຈົ້າແລ້ວພວກເຮົາກໍຈະເຫັນເໝືອນພຣະອົງ. ທ່ານໄດ້ເຄີຍສັງເກດອາຫານທີ່ເຮົາກິນບໍ່, ທ່ານເຄີຍໄດ້ສົມຜັດກິ່ນອັນຫອມຫວນຂອງດອກໄມ້ທີ່ພຣະອົງຊົງສ້າງບໍ່, ພວກເຮົາເຄີຍໄດ້ນັ່ງເບິ່ງຕາເວັນຂຶ້ນຫລືຕາເວັນຕົກບໍ່? ລອງຢຸດທຸກຢ່າງຫາຍໃຈບາດແຮງໆ ແລ້ວກໍໄປນັ່ງສັງເກດເບິ່ງສິ່ງເຫລົ່ານີ້ດູ, ທ່ານຈະເຫັນວ່າການຊົງສ້າງຂອງພຣະເຈົ້ານັ້ນສຸດຍອດສ່ຳໃດ.

ໃນພຣະບັນຍັດ 10 ປະການ ພຣະເຈົ້າກໍຍັງໄດ້ຂຽນໄວ້ໃນຂໍ້ທີ 4 ວ່າ: ຢ່າສ້າງແບບຈຳລອງໃຫ້ກັບຕົນເອງເປັນຮູບສິ່ງນຶ່ງສິ່ງໃດທີ່ຢູ່ໃນສວັນເທິງແຜ່ນດິນໂລກ ຫລືໃນພື້ນທະເລເລິກ. (ອົພຍົບ 20:4) ຈົ່ງລະລຶກເຖິງວັນຊະບາໂຕ ຈົ່ງເຮັດໃຫ້ວັນຊະບາໂຕເປັນວັນບໍຣິສຸດ. (ອົພຍົບ 20:8)

**<u>ຄວາມໝາຍແລະພາກປະຕິບັດ</u>**

ພຣະເຈົ້າຊົງເພີ້ມຕື່ມໂລກນີ້ດ້ວຍສິ່ງທີ່ມີຊີວິດຊີວາ ແລະສິ່ງຈໍາເປັນຕ່າງໆໃຫ້ແກ່ພວກເຂົາທັງໝົດ. ພວກເຮົາເປັນສິ່ງທີ່ພຣະອົງຊົງສ້າງພວກເຮົາຕ້ອງປົກປັກຮັກສາຊ່ວຍພຣະອົງ. ພຣະອົງເປັນຕົວຢ່າງໃຫ້ແກ່ພວກເຮົາໃນການທໍາງານແລະການພັກຜ່ອນ ແລະການປະຕິບັດວັນຊະບາໂຕຢ່າງໃດ.

**<u>ຄໍາຖາມ:</u>**

1. ນອກຈາກມະນຸດແລ້ວ, ພຣະເຈົ້າຊົງສ້າງໂລກນີ້ຢ່າງໃດ?

2. ວັນທີ 4 ຂອງການຊົງສ້າງແມ່ນສ້າງດວງຕາເວັນ, ດວງເດືອນ ແລະໝູ່ດາວຕ່າງໆ. ທ່ານມີຄວາມເຫັນຢ່າງໃດກ່ຽວກັບການສ້າງແສງສະວ່າງໃນວັນທີ 1 (ໃຫ້ຄວາມຄິດເຫັນ)

3. ໃນວັນທີ 5 ພຣະເຈົ້າຊົງສ້າງນໍ້າທະເລແລະສັດຕ່າງໆ. ຈົ່ງໃຫ້ຊື່ນໍ້າທະເລມາຈັກ 2 ຊື່. ຈົ່ງບອກຊື່ນົກທີ່ໃຫຍ່ກວ່າໝູ່ທີ່ສຸດໃນໂລກ 2 ຊື່. ສັດພວກນີ້ພຣະເຈົ້າມີພຣະປະສົງຫຍັງກັບພວກເຂົາ?

4. ໃນວັນທີ 6 ພຣະເຈົ້າຊົງສ້າງສັດຕ່າງໆ ໄວ້ເທິງແຜ່ນດິນ. ສັດ 2 ຢ່າງທີ່ທ່ານມັກຊື່ຫຍັງແດ່? ພຣະເຈົ້າຊົງມີພຣະປະສົງຫຍັງນໍາສັດພວກນີ້?

5. ບໍ່ເໝືອນກັບ 6 ວັນທີ່ຜ່ານມາ. ໃນວັນທີ 7 ພຣະເຈົ້າໄດ້ຊົງອວຍພຣະພອນ ແລະກໍາໃສ່ຊື່ວັນນັ້ນວ່າວັນຊະບາໂຕ (ວັນສັກສິດ) ວັນຊະບາໂຕໝາຍຄວາມວ່າຢ່າງໃດ?

6. ທ່ານເຄີຍໄດ້ກ້າວໄປສູ່ການພັກຜ່ອນຈາກງານບໍ່? ແລະໃນວັນນັ້ນທ່ານເຄີຍໄດ້ເຮັດໃຫ້ເປັນວັນສັກສິດຂອງພຣະເຈົ້າບໍ?

*ບພ*

# ບົດຮຽນທີ 3
## ການຊົງສ້າງຂອງພຣະເຈົ້າ: ດ້ວຍສີມື

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ປະຖົມມະການ 2:4-17

**ພູມຫລັງຂອງພຣະຄັມພີ**: ປະຖົມມະການ 2:4-17

**ຈຸດສຳຄັນສຳລັບບົດຮຽນນີ້**: ການອອກແບບສວນເອເດນທີ່ສົດສວຍງົດງາມເພື່ອຈະຕຽມຈັດໃຫ້ສິ່ງທີ່ຖືກສ້າງໄດ້ໃຊ້ຊີວິດຢູ່ຢ່າງສະບາຍ.

**ຄຳຖາມເພື່ອການຄົ້ນຄວ້າ**: ແມ່ນຫຍັງຄືຄວາມຮັບຜິດຊອບຂອງພວກເຮົາຕໍ່ສິ່ງທີ່ພຣະເຈົ້າຊົງສ້າງແລະຕໍ່ຄຳແນະນຳຂອງພຣະອົງ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະອະທິບາຍໃຫ້ສິ່ງທີ່ພຣະອົງຊົງສ້າງຮັບຮູ້ວ່າພຣະອົງຊົງສ້າງແລະຮັບເອົາຄຳແນະນຳ ທີ່ພຣະອົງຊົງມອບໃວ້.

### ຄຳນຳ

ໃນພາສາກຣີກໄດ້ໃຊ້ຄຳວ່າ ປະຖົມມະການນີ້ເພື່ອເປີດໜ້າທຳອິດຂອງປຶ້ມ. ແນ່ນອນຄຳນີ້ແມ່ນແປວ່າເລີ້ມຕົ້ນ. ໃນພາສາອັງກິດແມ່ນ Genesis ຫລືອີກຄຳນຶ່ງວ່າ Origin ຊຶ່ງມີຄວາມໝາຍວ່າຕົ້ນເດີມ, ຂອງເດີມ. ຜູ້ຂຽນເໝືອນກັບຂຽນປະວັດສາດຍ້ອນຫລັງ, ເພື່ອຈະໄດ້ສະດງໃຫ້ເຫັນວ່າຄວາມເປັນມາຕ່າງໆຂອງການຊົງສ້າງ.

ຕົວຢ່າງເລື່ອງລາວຄວາມເປັນມາຂອງປະເທດລາວເຮົາ ກໍໄດ້ມີຄົນບັນທຶກໄວ້ໃນຄວາມເປັນມາ ພວກເຮົາຈຶ່ງຈະຮູ້ປະວັດ. ປະເທດລາວເກີດມາຢ່າງໃດ, ແລະຄົນລາວເດີມມີມູນເຊື້ອຢ່າງໃດ?

ການສຶກສາປະວັດຄວາມເປັນມາຂອງສິ່ງໃດສິ່ງນຶ່ງ ພວກເຮົາກໍຕ້ອງໄດ້ອາສັຍຜູ້ທີ່ບັນທຶກລ່ວງໜ້າໄວ້ກ່ອນແລ້ວ. ໃນນີ້ຜູ້ບັນທຶກໄດ້ອະທິບາຍຢ່າງຈະແຈ້ງ, ການສຳແດງໃນບົດທີຜ່ານມາແມ່ນເຫັນໄດ້ຢ່າງລະອຽດໃນການຊົງສ້າງສິ່ງຕ່າງໆ. ສອງບົດຮຽນທີ່ຜ່ານມາພວກເຮົາໄດ້ສຶກສາເຣື່ອງການຊົງສ້າງຈັກວານຂອງພຣະເຈົ້າພາຍໃນຫົກວັນ. ຜ່ານມາໃນປະຖົມມະການບົດທີນຶ່ງ ການຊົງສ້າງຂອງພຣະເຈົ້າແມ່ນມີແຕ່ສິ່ງທີ່ໃຫຍ່, ສຳຄັນ, ຕາມຈຸດປະສົງ ແລະດ້ວຍພລັງອຳນາດຂອງພຣະອົງ.

ເມື່ອມາເລີ້ມຕົ້ນໃນບົດທີ 2:4 ນີ້ແມ່ນການບັນທຶກການຊົງສ້າງ. ໃນວັນທີ່ພຣະເຈົ້າຊົງສ້າງແຜ່ນດິນແລະຟ້າສວັນ ຕົ້ນໄມ້ຕາມທົ່ງນາຍັງບໍ່ທັນເກີດຂຶ້ນເທິງແຜ່ນດິນ ແລະພືດຕາມທົ່ງນາກໍຍັງບໍ່ທັນງອກເພາະຝົນຍັງບໍ່ທັນຕົກ. ພຣະເຈົ້າຊົງຕ້ອງການໃຫ້ພວກເຮົາໄດ້ພົບແຕ່ຂອງດີໆທັງນັ້ນ.

## 1. <u>ອາກາດທີ່ເຮັດໃຫ້ພວກເຮົາມີຊີວິດ:</u> (ປະຖົມມະການ 2:5-7)

ຜູ້ບັນລະຍາຍຍັງໄດ້ບັນລະຍາຍເຖິງການຊົງສ້າງໃນວັນທີ 6. ພຣະເຈົ້າໄດ້ສ້າງແສງສະວ່າງ, ນ້ຳ, ແຜ່ນດິນ, ຕົ້ນໄມ້ ແລະສັດທີ່ມີຊີວິດທັງຫລາຍ. ຜູ້ຂຽນໄດ້ບັນລະຍາຍເພີ້ມເຕີມຢູ່ໃນຂໍ້ 5 ແລະ 6 ວ່າພືດພັນຕ່າງໆ ມີເຕັມທົ່ວທີ່ງນາແລ້ວ ແຕ່ພຣະເຈົ້າຍັງບໍ່ທັນສົ່ງຝົນລົງມາ. ພືດພັນຈະເກີດໄດ້ກໍຕໍ່ເມື່ອມີຝົນຕົກລົງມາຮອຍຮຳ.

ມາເຖິງຂໍ້ 7 ພຣະເຈົ້າຊົງປັ້ນມະນຸດດ້ວຍຝຸ່ນຂີ້ດິນ ແລ້ວກໍເປົ່າອາກາດໃສ່ຮູດັງຂອງຄົນນັ້ນ ແລ້ວຄົນນັ້ນກໍຫາຍໃຈແລ້ວກໍມີຊີວິດ. ໃນການເລີ້ມຕົ້ນໃນການຫາຍໃຈນີ້ ຄົນເຮົາກໍເລີ້ມມີຈິດວິນຍານ ແລະກໍເປັນຕົວຕົນຂອງໃຜລາວຕັ້ງແຕ່ເວລານັ້ນມາ. ພຣະເຈົ້າຊົງສ້າງສັດນ້ຳ (ປຖກ. 1:20-21) ພຣະເຈົ້າຊົງສ້າງສັດບົກໃສ່ແຜ່ນດິນ (ປຖກ. 1:24) ແລະນົກ (ປຖກ. 1:30) ທຸກຢ່າງກໍເປັນໄປຕາມຊະນິດຂອງມັນ. ຜູ້ຂຽນຍັງໄດ້ບັນທຶກອີກວ່າການຊົງສ້າງມະນຸດນີ້ ແມ່ນການຊົງສ້າງທີ່ສຳຄັນແລະມີຄຸນຄ່າຫລາຍ ເພາະມະນຸດໄດ້ມີການຊົງສ້າງແບບພິເສດ ຄືສ້າງຕາມແບບພຣະລັກສະນະຂອງພຣະຜູ້ສ້າງເອງ. ຜູ້ສ້າງຢາກໃຫ້ສິ່ງທີ່ສ້າງໃນວັນນີ້ມີສາຍສຳພັນກັບຕົນເອງ.

## 2. <u>ສວນເອເດນ:</u> (ປະຖົມມະການ 2:8-14)

ທີ່ເອເດນພຣະເຈົ້າໄດ້ສ້າງສວນແຫ່ງນຶ່ງ ແລ້ວກໍໃສ່ຊື່ສວນນັ້ນວ່າ ສວນເອເດນ. ໃນທີ່ນັ້ນກໍມີ ແມ່ນ້ຳຢູ່ 4 ສາຍ: ສາຍທີນຶ່ງຊື່ວ່າ ປີຊອນ, ເປັນແມ່ນ້ຳທີ່ໄຫລຮອບຮາວີລາ. ສາຍທີສອງຊື່ວ່າ ກີໂຮນ. ສາຍທີສາມຊື່ວ່າ ໄທກຣີກ ແລະສາຍທີສີ່ຊື່ວ່າ ຢູຟຣາຕີສ. ແມ່ນ້ຳສີ່ສາຍນີ້ຊ່ວຍເຮັດໃຫ້ສວນເອເດນມີຄວາມອຸດົມສົມບູນດ້ວຍສັດບົກແລະສັດນ້ຳ. ສ່ວນແມ່ນ້ຳສາຍເລັກສາຍນ້ອຍກໍຍັງມີຫລາຍອີກຢູ່.

ຜູ້ຊາຍທີ່ພຣະເຈົ້າຊົງສ້າງນັ້ນພຣະອົງໃຫ້ຊື່ວ່າ ອາດາມ. ຊຶ່ງໝາຍຄວາມວ່າ ຝຸ່ນດິນຫລືຂີ້ດິນ. ພຣະເຈົ້າໃສ່ຊື່ນີ້ພຣະອົງກໍມີສອງເຫດຜົນ: (1) ພຣະອົງສ້າງເຂົາມາຈາກດິນ, ເວລາເຂົາຕາຍໄປແລ້ວເຂົາກໍຕ້ອງກັບໄປຫາດິນ. (2) ເຖິງແມ່ນວ່າພຣະອົງຈະສ້າງພວກເຮົາກໍຕາມ ພວກເຮົາກໍຈະຢູ່ໃນໂລກນີ້ຊົ່ວຄາວ (1ກຣທ. 15:53) ພວກເຂົາບໍ່ໄດ້ຖືກສ້າງເພື່ອມີຊີວິດຕລອດໄປເປັນນິດ. ພຣະເຈົ້າສ້າງພວກເຮົາດ້ວຍດິນ ແລ້ວພຣະອົງກໍເບິ່ງແຍງພວກເຮົາ ແຕ່ວັນນຶ່ງພວກເຮົາຕ້ອງຕາຍ.

## 2. <u>ພຣະເຈົ້າຊົງບອກໃຫ້ເຊື່ອຟັງ:</u> (ປະຖົມມະການ 2:15-17)

ຢ່າງໃດກໍຕາມ, ນັ້ນເປັນເຫດຜົນທີສອງວ່າເປັນຫຍັງພຣະເຈົ້າຈຶ່ງໃສ່ຊື່ຊາຍຄົນນັ້ນວ່າ ອາດາມ. ໃນຂໍ້ ທີ 15, ພຣະເຈົ້າຕັດສັ່ງອາດາມວ່າໃຫ້ທຳງານແລະເຝົ້າຮັກສາສວນເອເດນ. ພຣະເຈົ້າຕັດສັ່ງອີກວ່າ ຢ່າທຳລາຍຫລືຢ່າເຮັດໃຫ້ເປິະເປື້ອນ. ໂລກນີ້ພຣະເຈົ້າໄດ້ສ້າງໄວ້ຢ່າງສວຍງາມໃຫ້ພວກເຮົາແລ້ວ.

ໃນເມື່ອພຣະອົງໄດ້ສ້າງສິ່ງທີ່ງາມທີ່ສຸດແລ້ວ ພຣະອົງກໍຢາກໃຫ້ໂລກນີ້ສວຍງາມຕໍ່ໄປ. ຖ້າພວກເຮົາຫາກຮັກສາໂລກນີ້ບໍ່ໄດ້ ຕໍ່ໄປພວກເຮົາຈະບໍ່ໄປທຳລາຍແຜ່ນດິນສວັນຂອງພຣະອົງບໍ. ແຜ່ນດິນສວັນແມ່ນ

ຈຸດປະສົງແລະເປົ້າໝາຍຂອງພຣະອົງທີ່ຈະນຳພາພວກເຮົາໃຫ້ໄປເຖິງຈຸດນັ້ນ. ພຣະເຢຊູກ່າວແກ່ໂຈນຄົນນຶ່ງທີ່ຢູ່ເທິງໄມ້ກາງແຂນຂ້າງພຣະອົງວ່າ ເຮົາບອກຄວາມຈິງແກ່ເຈົ້າວ່າ ວັນນີ້ ເຈົ້າຈະຢູ່ກັບເຮົາໃນເມືອງສວັນ. (ລູກາ 23:43) ຍ້ອນຄວາມບາບຂອງພວກເຮົາທັງຫລາຍ ພວກເຮົາຈຶ່ງຖືກເນຣະເທດ (ຂັບໄລ່) ອອກຈາກສວນເອເດນ (ແຜ່ນດິນສວັນ) ໂດຍຜ່ານທາງພຣະເຢຊູ ເທົ່ານັ້ນພວກເຮົາຈຶ່ງຈະມີໂອກາດໄດ້ຊຳຣະລ້າງບາບ ເພື່ອໃຫ້ພວກເຮົາໄດ້ກັບມາມີສາຍສັມພັນກັບພຣະເຈົ້າຄືນໃໝ່. ໃນໂຢຮັນ ບົດທີ 17:4 ພຣະເຢຊູຊົງອະທິຖານກ່ອນຈະຖືກອາຍັດ (ຖືກຈັບ) ພຣະອົງອະທິຖານວ່າ ວຽກງານທີ່ພຣະອົງມອບໃຫ້ແກ່ຂ້ານ້ອຍນັ້ນ ຂ້ານ້ອຍໄດ້ກະທຳສຳເຣັດແລ້ວ ຂໍໃຫ້ເປັນທີ່ຖວາຍກຽດແກ່ພຣະອົງໃນໂລກ ເມື່ອພຣະເຢຊູສຳເຣັດວຽກງານເທິງໄມ້ກາງແຂນແລ້ວ, ພຣະອົງສ້າງການຄືນດີລະຫວ່າງພຣະເຈົ້າກັບມະນຸດແລ້ວ, ຈັດຕຽມເສັ້ນທາງເພື່ອພວກເຮົາຈະໄດ້ໄປສວັນໄປຢູ່ນຳພຣະອົງແລ້ວ ກໍເຫັນວ່າສົມບູນແລ້ວໃນພາຣະກິດໃນໂລກນີ້.

ຢາກຈະເພີ້ມເຕີມໃນການປ້ອງກັນຮັກສາໂລກທີ່ຢູ່ອ້ອມໆຂ້າງຂອງພວກເຮົາ. ພຣະເຈົ້າຊົງຮຽກເອີ້ນໃຫ້ພວກເຮົາທຳງານເພື່ອພຣະຄຣິດ. ເອເຟໂຊ 2:10 ເພາະວ່າເຮົາເປັນສີພຣະຫັດຂອງພຣະອົງທີ່ຊົງສ້າງຂຶ້ນໃນພຣະເຢຊູຄຣິດ ເພື່ອໃຫ້ປະກອບການດີ ຊຶ່ງພຣະເຈົ້າໄດ້ຊົງຄາດໝາຍໄວ້ລ່ວງໜ້າເພື່ອໃຫ້ເຮົາໄດ້ກະທຳ. ການທຳງານທີ່ໂປໂລກ່າວໃນທີ່ນີ້ກໍແມ່ນການປ່າວປະກາດນຳຄົນມາຫາພຣະເຈົ້າ. ໃນມັດທາຍ 9:37-38 ພຣະເຢຊູຊົງກ່າວເຖິງການເກັບກ່ຽວ, ພຣະອົງຊົງກ່າວແກ່ພວກສາວົກຂອງພຣະອົງ ໃນຂະນະທີ່ພຣະອົງຊົງທອດພຣະເນດເຫັນປະຊາຊົນທີ່ຖືກລົບກວນ ລັງແກ ແລະບໍ່ມີທີ່ເພິ່ງພາອາສັຍວ່າດັ່ງ ນີ້: ເຂົ້າທີ່ຈະກ່ຽວກໍມີຫລາຍ ແຕ່ຄົນງານຍັງມີໜ້ອຍຢູ່ ເຫດສັນນັ້ນຈົ່ງອ້ອນວອນຕໍ່ພຣະອົງຜູ້ເປັນເຈົ້າຂອງນາໃຫ້ສົ່ງຄົນງານມາເກັບກ່ຽວພືດຜົນຂອງພຣະອົງ.

ພວກເຮົາທັງຫລາຍຄວນຈະເນັ້ນໜັກສຸມຈິດໃຈໃສ່ການທຳງານຂອງພຣະອົງ. ພວກເຮົາຄວນຈະມີການຮັບຜິດຊອບໃນການຮຽກເອີ້ນຂອງພຣະອົງ ພຣະເຈົ້າຍັງສືບຕໍ່ການຮຽກເອີ້ນຢ່າງບໍ່ລົດລະ. ທ່ານໄດ້ຍິນສຽງຂອງພຣະອົງບໍ່?

## <u>ຄວາມໝາຍແລະພາກປະຕິບັດ</u>

ພຣະອົງຊົງສ້າງໂລກອັນສົດສວຍງົດງາມນີ້ ເພື່ອມະນຸດທັງຫລາຍຈະໄດ້ຊົມ ໄດ້ໃຊ້ແລະເພື່ອຈະໃຫ້ພວກເຂົາຮູ້ວ່າພຣະອົງຫ່ວງໃຍພວກເຂົາ. ພວກເຮົາຕ້ອງສະແດງດ້ວຍການເຊື່ອຟັງ ພຣະອົງຕຽມລາງວັນທີ່ດີເລີດໄວ້ເພື່ອພວກເຮົາທຸກຄົນແລ້ວ.

**ຄາລາເຕັຽ 1:10**

ເພື່ອທ່ານຈະໄດ້ປະພຶດຕາມຢ່າງທີ່ສົມຄວນຕໍ່ອົງພຣະຜູ້ເປັນເຈົ້າແລະທຳຕົນໃຫ້ເປັນທີ່ຊອບພຣະທັຍຂອງພຣະອົງ ໃຫ້ເກີດຜົນໃນການດີທຸກຢ່າງ ແລະຈະເລີນຂຶ້ນໃນຄວາມຮູ້ເຖິງພຣະເຈົ້າ ພວກເຮົາຕ້ອງທຳງານໃຫ້ກັບພຣະອົງ ບໍ່ແມ່ນຕາມກາລະໂອກາດ ຖ້າພວກເຮົາຫາກບໍ່ເຮັດທຸກເວລາ ຄົນອື່ນຈະເຫັນພຣະເຈົ້າໄດ້ຢ່າງໃດ? ພວກເຂົາຈະຮູ້ຈັກທາງໄປສວັນໄດ້ງາງໃດ? ພວກເຂົາຈະຮູ້ຈັກຜູ້ທີ່ສ້າງພວກເຂົາໄດ້ຢ່າງໃດ?

**ຄຳຖາມ**:

7. ເປັນຫຍັງການຊົງສ້າງໃນປະຖົມມະການບົດ 1ແລະ 2 ຈຶ່ງແຕກຕ່າງກັນ? ແຕກຕ່າງກັນຫຍັງແດ່? ທ່ານເຫັນສິ່ງທີ່ຄ້າຍຄືກັນບໍ່?

8. ຊີວິດມະນຸດຂອງພວກເຮົາເປັນຊີວິດທີ່ຊົ່ວຄາວ ແລ້ວກໍຕາຍໄປ. ສິ່ງນີ້ໄດ້ກະຕຸ້ນຈິດໃຈຂອງພວກເຮົາໃຫ້ເຫັນຫຍັງແດ່?

9. ພຣະເຈົ້າບໍ່ແມ່ນຜູ້ສ້າງທັມດາ ພຣະອົງເປັນຜູ້ອອກແບບຮ່າງກາຍຂອງພວກເຮົາດ້ວຍ. ພຣະອົງເຮັດໃຫ້ພວກເຮົາເປັນຕົວຕົນຂອງພວກເຮົາດ້ວຍ. ທ່ານພໍໃຈໃນຕົວຂອງທ່ານເອງບໍ່? ທ່ານຄິດວ່າຕົວຂອງທ່ານຄວນຈະເປັນຢ່າງໃດ?

10. ປະຖົມມະການ 2:9 ພຣະເຈົ້າໄດ້ສ້າງສວນເອເດນໄວ້ເພື່ອມະນຸດຢູ່. ລອງເວົ້າເຖິງສວນເອເດນເບິ່ງວ່າເປັນແນວໃດ?

11. ໃນອາທິດນີ້ ທ່ານຈະປະຕິບັດຕາມຄຳສັ່ງຂອງພຣະເຈົ້າໃນການຄຸ້ມຄອງໂລກຢ່າງໃດ?

12. ໃນອາທິດນີ້ ທ່ານຈະປະຕິບັດຕາມຄຳສັ່ງຂອງພຣະເຈົ້າໃນການປ່າວປະກາດຢ່າງໃດ?

*ບພ*

# ບົດຮຽນທີ 4
# <u>ພຣະເຈົ້າຊົງສ້າງມະນຸສໂລກ</u>

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ປະຖົມມະການ 1:26-28; 2:18-25

**ພູມຫລັງຂອງພຣະຄັມພີ**: ປະຖົມມະການ 1:26-28; 2:18-25

**ຈຸດສຳຄັນສຳລັບບົດຮຽນນີ້**: ພຣະເຈົ້າຊົງສ້າງມະນຸດຊາດຕາມພຣະລັກສະນະພາບຂອງພຣະອົງ ເພື່ອໃຫ້ມີຄວາມສຳພັນກັບພຣະອົງ ແລະຕໍ່ກັນແລະກັນ.

**ຄຳຖາມເພື່ອການຄົ້ນຄວ້າ**: ແມ່ນຫຍັງ ຫລືມີຄວາມໝາຍຢ່າງໃດຄຳວ່າ "ສ້າງຕາມພຣະລັກສະນະຂອງພຣະອົງ?"

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະເຂົ້າໃຈເຖິງຈຸດປະສົງຂອງພຣະເຈົ້າທີ່ພຣະອົງສ້າງຂ້າພະເຈົ້າມາຕາມພຣະລັກສະນະຂອງພຣະອົງ.

## <u>ຄຳນຳ</u>

ພຣະເຈົ້າໄດ້ສ້າງມະນຸດຊາດຕາມພຣະລັກສະນະຂອງພຣະອົງ ຄືພຣະອົງໄດ້ສ້າງທຸກໆຄົນຈາກຜົນສະທ້ອນຈາກພຣະລັກສະນະແລະບຸກຄະລິກຂອງພຣະອົງ. ໃນເມື່ອພວກເຮົາເປັນປະຊາກອນຂອງພຣະອົງຢ່າງນີ້ ພວກເຮົາມີຄວາມສັມພັນກັບພຣະອົງ ແລະຄົນອື່ນໄດ້ ໃຫ້ພວກເຮົາກາຍເປັນພາບສະທ້ອນຈາກພຣະລັກສະນະພາບຂອງພຣະເຈົ້າສາມພຣະພາກ ແຕ່ເປັນພຣະເຈົ້າອົງດຽວ.

ຂ້າພະເຈົ້າມັກກິນຍຳສລັດ ທັມມະດາແລ້ວຕ້ອງມີນ້ຳສລັດຣອດເພື່ອຈະໃຫ້ມີຣົດຊາດ. ນ້ຳສລັດທີ່ຂ້າພະເຈົ້າໃຊ້ເປັນປະຈຳເຫັນວ່າມີສອງຢ່າງບໍ່ເຂົ້າກັນເວລາເອົາມາປົນກັນ ອັນນຶ່ງຟູຂຶ້ນແລະອີກອັນນຶ່ງຈົມລົງໄປທາງພື້ນ. ແຕ່ຕ້ອງຈຳເປັນເອົາມາປົນກັນເພື່ອຢາກໃຫ້ມັນແຊບ. ຊີວິດຂອງອາດາມ ກັບເອວາເປັນເໝືອນກັນໃນບົດຮຽນນີ້ເພາະທັງສອງກໍແຕກຕ່າງກັນຄື ຄົນນຶ່ງເປັນຜູ້ຊາຍ ແລະອີກຄົນນຶ່ງເປັນຜູ້ຍິງ. ຜູ້ຍິງແລະຜູ້ຊາຍມີລັກສະນະ ບຸກຄະລິກ ຄວາມນຶກຄິດ ຄວາມຕ້ອງການບໍ່ຄືກັນ. ອາດາມຕ້ອງການມີຄວາມສັມພັນກັບມະນຸດ; ແລະພຣະເຈົ້າກໍສ້າງຄູ່ຄອງຜູ້ດີທີ່ສຸດໃຫ້ລາວ.

ເຫັນວ່າຊີວິດຂອງພວກເຮົາສົດຊື່ນແລະຖືກເພີ້ມເຕີມ ເພາະມີຄົນອື່ນເຂົ້າມາປະກອບສ່ວນ ຄົນນັ້ນອາດແມ່ນຜົວເມັຽ ລູກເຕົ້າ ພໍ່ແມ່ ເພື່ອນຝູງ ຫລືຄົນຜູ້ເຊື່ອນຳກັນ. ໃນບົດຮຽນນີ້ພວກເຮົາຈະໄດ້ສຶກສານຳກັນເຖິງຄວາມສຳຄັນທີ່ພວກເຮົາຕ້ອງການກັນແລະກັນ. ພຣະເຈົ້າສ້າງພວກເຮົາກໍເພື່ອເຫດຜົນພິເສດຢ່າງນີ້.

## 1. <u>ສ້າງຂຶ້ນຕາມພຣະລັກະນະຂອງພຣະເຈົ້າ</u>: ( ປະຖົມມະການ 1:26-28)

ປະຖົມມະການ 1:26 ເປັນການປະກາດວ່າພຣະເຈົ້າໄດ້ສ້າງມະນຸດຕາມພຣະລັກສະນະຂອງພຣະອົງ. ເປັນໜ້າສົນໃຈທີ່ພຣະເຈົ້າກ່າວວ່າ "ພວກເຮົາ" ໝາຍເຖິງມະນຸດຊາດທັງໂລກ. ໃນພຣະທັມຕອນນີ້ຄຳວ່າ "ພວກ" ເຮົາໝາຍເຖິງພຣະເຈົ້າສາມພຣະພາກ: ພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ. ການຊົງ

ສ້າງຂອງພຣະເຈົ້ານັ້ນພວກເຮົາໄດ້ເຫັນພຣະລັກຊະນະຂອງພຣະອົງ ເພາະມະນຸດເປັນພາບສະທ້ອນຈາກພຣະອົງ.

ພຣະເຈົ້າໄດ້ສ້າງມະນຸດຄົນທຳອິດ ແລະທຸກຄົນຕາມພຣະລັກສະນະອັນສັກສິດຂອງພຣະອົງ ເຖິງແມ່ນພວກເຮົາເປັນຄົນແຕກຕ່າງກັນເປັນພິເສດ ແຕ່ພຣະອົງໄດ້ສ້າງມະນຸດໃຫ້ສເມີພາບກັນຄື ຕາມພຣະລັກສະນະຂອງພຣະອົງທຸກຄົນ ຈະເປັນເພດໃດກໍຕາມ. ປະຖົມມະການ 1:27. ປື້ມປະຖົມມະການໄດ້ເວົ້າເຖິງຄວາມສເມີພາບ ເພາະພຣະເຈົ້າໄດ້ສ້າງຜູ້ຊາຍແລະຜູ້ຍິງຕາມພຣະລັກສະນະຂອງພຣະອົງ.

ເປັນໜ້າເສັ້ງດາຍໃນສັງຄົມທຸກວັນນີ້ໄດ້ກ່າວວ່າຊີວິດຂອງພວກເຮົາບໍ່ສຳຄັນອັນໃດ, ແຕ່ໃນພຣະຄັມພີສອນຢ່າງແຈ່ມແຈ້ງວ່າ: ພວກເຮົາເປັນຄົນພິເສດ ບໍ່ໄດ້ໝາຍຄວາມວ່າເວລາເຮົາໄດ້ຮັບລາງວັນ, ໄດ້ຊັຍຊະນະເລີດ, ຫລືໄດ້ຂຶ້ນຊັ້ນ...ພວກເຮົາບໍ່ເປັນຜູ້ສຳຄັນເມື່ອເປັນຄົນດີ ມີສິນທັມ ແລະອື່ນ... ແຕ່ພວກເຮົາເປັນຄົນພິເສດເພາະພຣະເຈົ້າໄດ້ສ້າງພວກເຮົາໃຫ້ເປັນຢ່າງນັ້ນ ພວກເຮົາເປັນຄົນທີ່ມີຄ່າຕໍ່ພຣະເຈົ້າ.

ການທີ່ຖືກສ້າງຕາມພຣະລັກສະນະຂອງພຣະເຈົ້າໝາຍຄວາມວ່າ ພວກເຮົາມີພາບຂອງພຣະເຈົ້າ. ພວກເຮົາສາມາດມີຄວາມສັມພັນກັບພຣະອົງ ແລະກັບຄົນອື່ນໆໄດ້ຢ່າງເລິກເຊິ່ງ ແລະມີຄວາມໝາຍ. ພວກເຮົາສາມາດຕັດສິນໃຈເອງ ແລະເລືອກທາງເດີນໃນຊີວິດໄດ້. ພວກເຮົາເປັນຕົວແທນພຣະນາມ, ຄຸນຄ່າ, ແລະບຸກຄະລິກລັກສະນະຂອງພຣະເຈົ້າຕໍ່ຄົນອື່ນ. ພຣະເຈົ້າສ້າງພວກເຮົາຂຶ້ນມາເພື່ອໃຫ້ຄົນອື່ນເຫັນພາບຂອງພຣະເຈົ້າໃນຊີວິດເຮົາ. ດັ່ງນັ້ນ, ໃຫ້ທ່ານກວດເບິ່ງການກະທຳຂອງທ່ານໃນອາທິດແລ້ວນີ້ ວ່າສິ່ງທີ່ທ່ານເຮັດນັ້ນໄດ້ເປັນຜົນສະທ້ອນຈາກພາບຂອງພຣະເຈົ້າແທ້ຫລືບໍ່? ທ່ານຈະເຮັດແນວໃດເພື່ອໃຫ້ເປັນຜູ້ແທນພຣະນາມອັນດີຂອງພຣະເຈົ້າໃນອາທິດຈະມາເຖິງນີ້.

ໃນປື້ມປະຖົມມະການ 1:26-27 ໄດ້ກ່າວວ່າພຣະເຈົ້າສາມພຣະພາກໄດ້ຕັ້ງພຣະທັຍສ້າງມະນຸດເພື່ອໃຫ້ເປັນຜູ້ປົກຄອງຮັກສາໂລກນີ້. ເໝືອນກັບບິດຊຽນແລ້ວໄປນີ້ວ່າ ພວກເຮົາເປັນຜູ້ແທນພຣະເຈົ້າແລະຣາຊອານາຈັກຂອງພຣະອົງໃນໂລກ (ມັດທາຍ 6:10). ພຣະເຈົ້າໄດ້ຊົງສ້າງມະນຸດຂຶ້ນມາໃຫ້ມີສິດທິແລະມີຄວາມຮັບຜິດຊອບສູງທີ່ຈະຮັກສາໂລກນີ້. ມະນຸດເປັນຄົນພິເສດສຸດໃນທຸກສິ່ງທີ່ພຣະເຈົ້າໄດ້ສ້າງມາ ຄືພຣະເຈົ້າໄດ້ມອບສິ່ງທີ່ພຣະອົງຊົງສ້າງມາໃຫ້ຢູ່ໃນການດູແລຂອງມະນຸດ. ເມື່ອສ້າງທຸກສິ່ງແລ້ວພຣະເຈົ້າໄດ້ປະກາດວ່າບໍ່ພຽງແຕ່ດີເທົ່າ ແຕ່ດີເລີດ. (1:31).

## 2. <u>ຊອກຫາຄູ່ຄອງ</u>: (ປະຖົມມະການ 2:18-20)

ພຣະເຈົ້າໄດ້ມອບໃຫ້ອາດາມເປັນຜູ້ປົກຄອງເບິ່ງແຍງໂລກນີ້ ແລະໄດ້ບອກໃຫ້ອາດາມເປັນຜູ້ໃສ່ຊື່ສິ່ງທີ່ພຣະອົງໄດ້ສ້າງຂຶ້ນມາ. ອາດາມຈຶ່ງໄດ້ໃສ່ຊື່ໃຫ້ສັດເທິງອາກາດ ໃນທະເລ ແລະເທິງດິນແຕ່ລະໂຕເປັນລຳດັບໄປ. ຢ່າງໃດກໍຕາມກ່ອນອາດາມຈະໃສ່ຊື່ແຕ່ລະຢ່າງເພິ່ນກໍໄດ້ສັງເກດເບິ່ງລັກສະນະຂອງມັນກ່ອນແລະຊອກຄູ່ໃຫ້ພວກເຂົາ. ພຣະເຈົ້າໄດ້ສອນອາດາມສອງຢ່າງ. ນຶ່ງ, ພຣະເຈົ້າຕ້ອງການໃຫ້ອາດາມຮູ້ເຖິງສິ່ງເລິກລັບໃນການຊົງສ້າງຂອງພຣະອົງ. ມີນັກວິທະຍາສາດໄດ້ຄຳນວນວ່າໃນໂລກນີ້ວ່າມີສັດ, ຕົ້ນໄມ້ ແລະສິ່ງທີ່ມີຊີວິດ 8.7 ລ້ານຊະນິດ ໝາຍຄວາມວ່າມີຫລາຍຢ່າງອາດາມຕ້ອງໃສ່ຊື່ໃຫ້.

ພວກເຮົາໄດ້ຮັບໃຊ້ພຣະເຈົ້າພຣະຜູ້ສ້າງ, ພຣະອົງຕ້ອງການໃຫ້ອາດາມຮູ້ແນ່ວ່າລາວຖືກສ້າງຂຶ້ນມາແຕກຕ່າງກັບສິ່ງທີ່ຊົງສ້າງທັງຫລາຍ. ອາດາມສາມາດຕິດຕໍ່ພົວພັນກັບພຣະເຈົ້າໄດ້, ບໍ່ເໝືອນພວກສັດທັງ

ຫລາຍ ຕາມທີ່ພຣະເຈົ້າໄດ້ມີພຣະທັຍເອົາໄວ້. ອາດາມຕ້ອງການໃຫ້ພຣະເຈົ້າປະທານອີກຄົນນຶ່ງໃຫ້ລາວເປັນຜູ້ມີຄວາມສາມາດຕິດຕໍ່ກັບພຣະເຈົ້າເໝືອນກັບລາວເອງ.

ອາດາມບໍ່ສາມາດຊອກເອົາຄູ່ຈາກສິ່ງອື່ນທີ່ພຣະເຈົ້າໄດ້ສ້າງ (2:20). ອາດາມຮັກສັດທັງຫລາຍ ແຕ່ເຫັນວ່າຍັງມີຂອບເຂດໃນການມີຄວາມສັມພັນກັນ. ສັດບໍ່ສາມາດອະທິຖານ ໃຫ້ຄວາມປຶກສາ ແລະຊ່ອຍລາວໃຫ້ຮູ້ຈັກພຣະປະສົງຫລືແຜນການຂອງພຣະເຈົ້າ. ເຖິງແມ່ນອາດາມມີຄວາມຮັກຕໍ່ສັດຕ່າງໆ ແຕ່ກໍຍັງຂາດຄວາມສັມພັນບໍ່ເໝືອນມະນຸດໃຫ້ກັນແລະກັນ.

ພຣະເຈົ້າໄດ້ເຮັດໃຫ້ຄວາມເຫງົາໃຈໝົດໄປໂດຍປະທານມະນຸດໃຫ້ເປັນຜູ້ຊ່ອຍຊູໃຈ. ໃນພຣະຄັມພີໄດ້ໃສ່ຊື່ ເອວາ ແປວ່າຜູ້ຊ່ອຍໃນປະຖົມມະການ 2:18. ອາດາມມີຄວາມຕ້ອງການ ແລະພຣະເຈົ້າໄດ້ປະທານຜູ້ຊ່ອຍໃຫ້ເພື່ອໃຫ້ຄວາມຕ້ອງການຂອງລາວສົມຫວັງ. ນັ້ນແມ່ນເຫດຜົນທີ່ພຣະເຈົ້າໄດ້ສ້າງເອວາຂຶ້ນມາ.

ໃຫ້ເຂົ້າໃຈວ່າທ່ານບໍ່ໄດ້ຢູ່ຄົນດຽວໃນໂລກນີ້ ເຖິງແມ່ນທ່ານຈະເປັນຄົນມີອາຍຸເທົ່າໃດ ຫລືຢູ່ໃນສະພາບໃດ ພຣະເຈົ້າໄດ້ສ້າງທ່ານເພື່ອໃຫ້ມີຄວາມສັມພັນກັບຄົນອື່ນ. ໃຫ້ທອນຄຶດເບິ່ງດູວ່າມີໃຜແດ່ໄດ້ເຮັດໃຫ້ຊີວິດຂອງທ່ານດີຂຶ້ນໃນການເປັນຄຣິສຕຽນ ຄົນນັ້ນອາດແມ່ນຄົນໃນຄອບຄົວ, ໝູ່ເພື່ອນ ຫລືຄົນໃນໂບດດຽວກັນ. ການທີ່ມີຄວາມສັມພັນກັບຄົນອື່ນເຮັດໃຫ້ທ່ານມີຊີວິດຢ່າງມີຄວາມສຸກແລະເປັນປໂຍດແນວໃດ?

## 3. <u>**ໄດ້ພົບຄູ່ຄອງ-ຜູ້ຊ່ອຍ**</u>: (ປະຖົມມະການ 2:21-25)

ພຣະເຈົ້າໄດ້ເຮັດໃຫ້ອາດາມນອນຫລັບສນິດ ແລະພຣະອົງໄດ້ເອົາເນື້ອສ່ວນນຶ່ງຈາກຂ້າງ ບາງປຶ້ມໄດ້ແປວ່າ "ກະດູກຂ້າງ" ຊຶ່ງເປັນເຣື່ອງເລົ່າກັນວ່າຜູ້ຊາຍມີກະດູກຂ້າງຫລຸດຜູ້ຍິງ. ພຣະເຈົ້າບໍ່ໄດ້ເອົາກະດູກມາເຮັດຜູ້ຍິງ ແຕ່ພຣະອົງໄດ້ເອົາສິ່ງທີ່ພຣະອົງໄດ້ສ້າງຜູ້ຊາຍຂຶ້ນມາ. ມີສິດຍາພິບານຫລາຍຄົນມັກກ່າວວ່າ, "ພຣະເຈົ້າບໍ່ໄດ້ເອົາສິ່ງຈາກຫົວມາສ້າງເປັນຜູ້ຍິງເພື່ອບໍ່ໃຫ້ຜູ້ຍິງສູງເທົ່າຜູ້ຊາຍ, ຫລືພຣະອົງບໍ່ໄດ້ເອົາສິ່ງຈາກຕີນເພື່ອໃຫ້ຜູ້ຍິງຕ່ຳກວ່າຜູ້ຊາຍ; ແຕ່ພຣະອົງເອົາສິ່ງມາຈາກຂ້າງເພື່ອໃຫ້ເທົ່າທຽມກັນຄຽງຄູ່ກັນໄປ." ພຣະເຈົ້າໄດ້ເອົາ DNA ຈາກຜູ້ຊາຍມາສ້າງເປັນຜູ້ຊ່ອຍຊຶ່ງເປັນຄວາມສເມີພາບໃນພຣະລັກສະນະຂອງພຣະເຈົ້າ.

ອາດາມໄດ້ທຽບຜູ້ທີ່ພຣະເຈົ້າສົງສ້າງຂຶ້ນໃໝ່ໆກັບສັດທັງຫລາຍ. ເວລາອາດາມໄດ້ໃສ່ຊື່ລາວທີ່ສັງເກດເຫັນຮູບຮ່າງເນື້ອໜັງຄືຕົນເອງ. ດັ່ງນັ້ນ ລາວຈຶ່ງເອີ້ນຜູ້ຊ່ອຍວ່າ "ຍິງ-ຊາຍ" ຫລືເພດຍິງ. ໃນພາສາເຮັບເຣີຄຳວ່າຜູ້ຊາຍແມ່ນ "ອິສ" ຜູ້ຍິງແມ່ນ "ອິສຊາ." ອາດາມກ່າວວ່າ "ຜູ້ຍິງຄົນນີ້ຄືເຮົາ" ແລະລາວກໍດີໃຈຫລາຍເພາະມີຄູ່ຄອງ ເປັນຜູ້ຊ່ອຍໃນສວນເອເດນຂອງພຣະເຈົ້າ. ພຣະເຈົ້າໄດ້ຊົງອວຍພຣະພອນໃຫ້ເຂົາເຈົ້າໃຫ້ມີຄວາມສຸກໃນຊີວິດ.

ໃນປະຖົມມະການ 2:24 ຜູ້ຂຽນໄດ້ສລູບວ່າ ການເຂົ້າຮ່ວມລະຫວ່າງອາດາມແລະເອວາເປັນພື້ນຖານຂອງການແຕ່ງງານຄືທັງສອງຕ້ອງຈາກພໍ່ແມ່ເພື່ອເຂົ້າເປັນຄອບຄົວທີ່ພຣະເຈົ້າຊົງສ້າງຂຶ້ນມາໃໝ່ນີ້. ນີ້ບໍ່ໄດ້ໝາຍຄວາມວ່າລູກຜູ້ອອກໄປນັ້ນໝົດສິດເປັນລູກ ແຕ່ເພື່ອມີຄວາມສັມພັນພິເສດ. ພາສາເຮັບເຣີວ່າ "ດາບາ" ແປວ່າ "ເຂົ້າຮ່ວມກັນ ຫລືເຂົ້າຕິດກັນ" ໝາຍເຖິງທັງສອງເຂົ້າກັນເໝືອນຢາງກາວ.

ສິ່ງສຳຄັນຕ້ອງເຂົ້າໃຈວ່າທັງສອງເຂົ້າກັນເປັນ "ນຶ່ງດຽວ" ແຕ່ຍັງຄົງເປັນແຕ່ລະບຸກຄົນຢູ່ ເໝືອກັບນ້ຳມັນໃນນ້ຳຢຳສລັດ ແລະວິນີເກີ ທີ່ໄດ້ຊ່ອຍກັນເຮັດໃຫ້ມີຣົດແຊບດີຂຶ້ນ. ການເຂົ້າກັນຢ່າງນີ້ເປັນເຣື່ອງປຽບທຽບຄວາມຮັກຂອງພຣະເຈົ້າຕໍ່ປະຊາກອນຂອງພຣະອົງ ແລະເໝືອນຄວາມຮັກຂອງອົງພຣະຄຣິດຕໍ່ຄຣິສຕະຈັກ.

ບົດນີ້ໄດ້ສລູບວ່າອາດາມແລະເອວາເປັນຄົນບໍຣິສຸດ ເພາະເຂົາເຈົ້າພາກັນເປືອຍກາຍຢູ່ ແລະຍັງບໍ່ຮູ້ລະອາຍ. ການເປືອຍກາຍແລະບໍ່ມີຄວາມອາຍໝາຍເຖິງຄວາມປອດ ບໍຣິສຸດ ກ່ອນຄວາມບາບໄດ້ເຂົ້າມາໃນໂລກ. ທາງນອກ(ປະເປືອຍ) ທາງໃນ(ຮູ້ສຶກຜິດ) ທັງສອງອາດາມແລະເອວາໄດ້ຢືນຢູ່ຕໍ່ພຣະພັກຂອງ ພຣະເຈົ້າຜູ້ມີຄວາມເມດຕາ. ເຫັນວ່າຜູ້ຂຽນຕ້ອງການໃຫ້ເຂົ້າໃຈໃນຕອນນີ້ກ່ອນຈະໄດ້ສຶກສາບົດທີ 3 ຊຶ່ງເປັນໜ້າເສົ້າໃຈທີ່ຄວາມບາບໄດ້ເຂົ້າມາທຳລາຍຄວາມບໍຣິສຸດຂອງມະນຸສໂລກ. ໂດຍອີງພຣະຄຣິດ ພວກເຮົາສາມາດມີຊີວິດຢູ່ດ້ວຍການສາລະພາບຄວາມຜິດບາບນັ້ນ ແລະຄືນດີກັບພຣະຜູ້ສ້າງ ແລະພຣະຜູ້ຊ່ອຍ. (1 ໂຢຮັນ 1:5:10).

## ຄວາມໝາຍແລະພາກປະຕິບັດ

ພຣະເຈົ້າໄດ້ສ້າງພວກເຮົາມາຕາມພຣະລັກສະນະຂອງພຣະອົງຜູ້ຢູ່ໃນສວັນ ເໝືອນກັບລູກໃສ່ເກີບພໍ່ ແລະປະຕິບັດຕົນຕາມທີ່ເຫັນພໍ່ເຮັດ. ໂດຍເຫດນີ້ພວກເຮົາທັງຫລາຍໄດ້ເປັນອັນນຶ່ງດຽວກັບທຸກຄົນໃນໂລກ ຄືພວກເຮົາມີຄຸນຄ່າສເມີກັນ ແລະມີຊີວິດສົມກັບຖືກສ້າງຂຶ້ນມາຕາມພຣະປະສົງຂອງພຣະເຈົ້າສາມພຣະພາກ. ພວກເຮົາບໍ່ໄດ້ຢູ່ໂດດດຽວ ຈຳເປັນຕ້ອງສແວງຫາຜູ້ມີຄວາມເຊື່ອນຳກັນໃຫ້ດຳລົງຊີວິດເໝືອນອົງພຣະຄຣິດ. ການຢູ່ຮ່ວມກັນນີ້ຊ່ອຍພວກເຮົາໃຫ້ເປັນແສງສະທ້ອນຂອງອົງພຣະຄຣິດຕໍ່ໂລກໄດ້ດີຂຶ້ນ ແລະເຮັດໃຫ້ຄົນອື່ນເຂົ້າມາຫາພຣະຜູ້ທີ່ສ້າງເຂົາເຈົ້າຂຶ້ນມາ.

## ຄຳຖາມ:

1. ພຣະເຈົ້າສ້າງມະນຸດທຸກຄົນຕາມພຣະລັກສະນະຂອງພຣະອົງ. ທ່ານໄດ້ເຫັນພາບນັ້ນໃນຊີວິດຂອງຄົນອື່ນແນວໃດ?
2. ອາດາມມີຄວາມຕ້ອງການຜູ້ຊ່ອຍ. ທ່ານເດ ມີໃຜກາຍເປັນຜູ້ຊ່ອຍຂອງທ່ານ? ທ່ານເຄີຍບອກຄົນນັ້ນວ່າທ່ານຮູ້ຈັກຄຸນຄ່າທີ່ລາວເປັນຜູ້ຊ່ອຍທ່ານບໍ່?
3. ທ່ານຄິດແນວໃດທີ່ພຣະເຈົ້າເອົາພາກສ່ວນຈາກຂ້າງຂອງອາດາມມາສ້າງເປັນຜູ້ຍິງ?
4. ຜູ້ຊາຍແລະຜູ້ຍິງເບິ່ງເຫັນຊີວິດແຕກຕ່າງກັນ. ທ່ານມີປະສົບການຢ່າງນີ້ໃນຊີວິດກັບຄົນຕ່າງປະເພດບໍ່? ຄວາມແຕກຕ່າງແນວນີ້ເຮັດໃຫ້ທ່ານຄິດຍາກໃຈບໍ່? ແລະມັນໄດ້ເຮັດໃຫ້ຊີວິດຂອງທ່ານດີຂຶ້ນແນວໃດ?
5. ເປັນດ້ວຍເຫດໃດອາດາມແລະເອວາບໍ່ມີຄວາມລະອາຍເມື່ອຕົນເອງໄດ້ເປືອຍກາຍຢູ່? ນີ້ບອກເຮົາວ່າຄວາມບາບໄດ້ທຳລາຍກາຍພາຍນອກແລະໃຈຂອງພວກເຮົາແນວໃດ?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ບົດຮຽນທີ 5
## <u>ມີທາງເລືອກທີ່ບໍ່ເຊື່ອຟັງພຣະເຈົ້າ</u>

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ປະຖົມມະການ 3:1-7

**ພູມຫລັງຂອງພຣະຄັມພີ:** ປະຖົມມະການ 3:1-7

**ຈຸດສໍາຄັນສໍາລັບບົດຮຽນນີ້:** ຄວາມບາບໄດ້ເຂົ້າມາໃນໂລກຊຶ່ງເປັນການເລືອກເອົາຈາກມະນຸດຄົນທໍາອິດທີ່ບໍ່ເຊື່ອຟັງ.

**ຄໍາຖາມເພື່ອການຄົ້ນຄວ້າ:** ຄວາມບາບໄດ້ເຂົ້າມາໃນໂລກໃນສມັຍກ່ອນ ແລະທຸກວັນນີ້ຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮູ້ຈັກວ່າຄວາມບາບໄດ້ເຂົ້າມາໃນໂລກໄດ້ຢ່າງໃດ ແລະມັນມີຜົນອັນໃດໃນຊີວິຂອງຂ້າພະເຈົ້າ.

### <u>ຄໍານໍາ</u>

ໃນເມື່ອພວກເຮົາມີທາງເລືອກທີ່ຈະເຊື່ອຟັງ ຫລືບໍ່ເຊື່ອຟັງພຣະເຈົ້າ ມະນຸດເຮົາມັກເຮັດຕາມໃຈ ແທນທີ່ຈະຍອມໃຫ້ພຣະເຈົ້ານໍາພາ. ຂ້າພະເຈົ້າໄດ້ບອກໃຫ້ລູກຊາຍອາຍຸ 16 ປີເອົາຂີ້ເຫຍື້ອໄປຖິ້ມ ລາວກໍເລີ້ມມັດຖົງຂີ້ເຫຍື້ອນັ້ນທັນທີ ອີກບໍ່ດົນກໍຢຸດ ແລະຫັນມາບອກຂ້າພະເຈົ້າວ່າ, "ແມ່! ເຈົ້າບໍ່ສາມາດບັງຄັບໃຫ້ຂ້ອຍເອົາຂີ້ເຫຍື້ອໄປຖິ້ມ." ຂ້າພະເຈົ້າເລີຍເຮັດຕາມລາວເວົ້າໂດຍກ່າວວ່າ, "ລູກຜູ້ໃຫຍ່ແລະມີແຮງ ແມ່ບໍ່ສາມາດບັງຄັບລູກເຮັດອັນນຶ່ງອັນໃດໄດ້ດອກ. ແມ່ສາມາດບັງຄັບລູກພຽງດ້ານໃຊ້ເງິນຄໍາເທົ່ານັ້ນ."

ລາວຍິ້ມແລະກ່າວວ່າ, "ລູກຮັກແລະນັບຖືແມ່, ລູກຈະເລືອກທາງເອົາຂີ້ເຫຍື້ອອອກໄປຖິ້ມ." ຂ້າພະເຈົ້າເລີຍຍົກຍ້ອງລາວໃນການຕັດສິນໃຈແນວນັ້ນ. ໃນເມື່ອພຣະເຈົ້າໄດ້ຫ້າມບໍ່ໃຫ້ກິນໝາກໄມ້ຕົ້ນກາງສວນເອເດນນັ້ນ, ການຝ່າຝືນບໍ່ໄດ້ເກີດຂຶ້ນບາດດຽວ. ອາດາມແລະເອວາມີສັນຕິສຸກ ແລະເປັນອັນນຶ່ງດຽວໃນສວນເອເດນ. ພຣະເຈົ້າໄດ້ຈັດຫາທຸກສິ່ງທີ່ເຂົາເຈົ້າຕ້ອງການ ອາດາມເອວາບໍ່ມີເຫດຜົນອັນໃດທີ່ເຂົາເຈົ້າຈະບໍ່ຍອມເຊື່ອຟັງພຣະເຈົ້າ ຈົນເຂົາເຈົ້າໄປພົບກັບທາງເລືອກເອົາຕາມໃຈ.

### 1. <u>ບັນຫາກໍາລັງເລີ້ມເຂົ້າມາ</u>: (ປະຖົມມະການ 3:1-3)

2000 ປີມານີ້ ນັກປາດໄດ້ມີຄວາມຊໍານານຫລາຍ ຄຣິສຕຽນໄດ້ຮັບການເປີດເຜີຍຈາກພຣະເຈົ້າຄືຂ່າວປະເສີດໄດ້ມາທາງອົງພຣະເຢຊູ. ພຣະຄັມພີໃໝ່ໄດ້ສ່ອງແສງສວ່າງໃຫ້ພວກເຮົາເຂົ້າໃຈເຖິງພຣະຄັມພີເດີມຫລາຍຂຶ້ນ, ເຣື່ອງຈິດວິນຍານເຊັ່ນ ເທວະດາ ແລະມານຊາຕານ ທຸກວັນນີ້ຜູ້ທີ່ເຊື່ອເຂົ້າໃຈເຖິງວຽກງານຂອງມານຄືມັນໄດ້ປ່ຽນແປງຄວາມຈິງ ແລະມັນຢາກທໍາລາຍສິ່ງພຣະເຈົ້າຮັກ.

ຄົນໃນສມັຍທີ່ອ່ານພຣະຄັມພີເດີມ ບໍ່ໄດ້ເຂົ້າໃຈເຖິງເຣື່ອງພຣະເຈົ້າດີເໝືອນກັບຄົນໃນສມັຍທີ່ອ່ານພຣະຄັມພີໃໝ່. ພວກເຂົາໄດ້ເລີ້ມຈາກເລກສູນເຖິງເຣື່ອງພຣະເຈົ້າແລະດ້ານວິນຍານຈິດ. ພວກເຮົາໃນສມັຍນີ້ເບິ່ງຂ້າມເຖິງສິ່ງເຮົາເຂົ້າໃຈໃນເຣື່ອງພຣະເຈົ້າ ນີ້ອາດເປັນວຽກງານຂອງມານທີ່ທັກທານບໍ່ໃຫ້ພວກຄົນເຂົ້າ

ໃຈເຣື່ອງພຣະເຈົ້າ. ເວລາຜູ້ຂຽນປຶ້ມປະຖົມມະການນີ້ ພວກອິສເອັນບໍ່ໄດ້ເຂົ້າໃຈດີວ່າຜູ້ມີອຳນາດໃຫຍ່ແລະເປັນສັດຕູຂອງພຣະເຈົ້າຜູ້ເປັນຕົວແທນຂອງຄວາມຊົ່ວ. ປະວັດຂອງທ່ານໂຢບກໍເຫັນໄດ້ວ່າເປັນເຣື່ອງເກົ່າແກ່ໃນພຣະຄັມພີ, ພາສາເຮັບເຣີວ່າ ຊາຕານ (ແປວ່າຜູ້ຫາເຣື່ອງ) ອາດເຊັ່ນນັ້ນຫລາຍກວ່າເປັນສັພນາມ. ນີ້ໄດ້ບອກໃຫ້ຮູ້ເຖິງວິນຍານຊົ່ວ.

ເມື່ອອ່ານປະຖົມມະການ 3 ຄຣິສຕຽນໃນທຸກວັນນີ້ເຂົ້າໃຈວ່າງູເປັນສັດທີ່ມານຊົງໃຊ້ເພື່ອທົດລອງ. ແນວໃດກໍຕາມສິ່ງທີ່ຄຣິສຕຽນທຸກວັນນີ້ເຂົ້າໃຈນັ້ນບໍ່ແມ່ນຄວາມເຂົ້າໃຈຂອງຜູ້ຂຽນຂຶ້ນທຳອິດ ຜູ້ຂຽນຮູ້ໜ້າທີ່ຂອງງູດີຄືເປັນສັດປ່າທີ່ພຣະເຈົ້າໄດ້ສ້າງຂຶ້ນ. ຜູ້ອ່ານພຣະຄັມພີເດີມບໍ່ເຂົ້າໃຈເຖິງຄວາມສຳພັນຂອງງູແລະພຍາມານແຕ່ປະການໃດ.

ເປັນຄວາມຈິງທີ່ຜູ້ຂຽນໄດ້ບອກເຖິງລັກສະນະຂອງງູວ່າ ສລາດ ແຕ່ບໍ່ເຫັນວ່າມັນມີອຳນາດອັສຈັນແຕ່ຢ່າງໃດເລີຍ. ສລາດເໝືອນກັບທີ່ໄດ້ເຫັນໃນປຶ້ມສຸພາສິດ 1:4, 8:5, ແລະ 15:5. ແລະໃນບ່ອນອື່ນເຊັ່ນໃນພຣະຄັມພີໂຢບ 5:12, 15:5 ແລະອົບພະຍົບ 21:14, ຄຳເວົ້າຢ່າງນີ້ໄດ້ໃຊ້ໃນທາງກົງກັນຂ້າມ ໝາຍເຖິງຜູ້ຕໍ່ຕ້ານພຣະເຈົ້າ, ເວົ້າຊົ່ວ, ຫລືຫລອກລວງ ການເປັນຄົນຂ້າຄົນ.

ໃນພຣະຄັມພີຕອນນີ້ ຜູ້ອ່ານບໍ່ກັງວົນເມື່ອອ່ານເຖິງເຣື່ອງງູ. ພວກເຮົາບໍ່ຮູ້ຈັກວ່າມີການສົນທະນາກັນມາກ່ອນລະຫວ່າງສັດໃນສວນເອເດນ, ແຕ່ເຫັນວາເອວາບໍ່ໄດ້ແປກໃຈເມື່ອເຫັນງູເວົ້ານຳ. ການທົດລອງຄັ້ງທຳອິດໄດ້ເກີດຂຶ້ນນັ້ນຄິດວ່າເປັນຂອງທັມມະດາ ໃຜໆບໍ່ຄິດວ່າມັນອາດຈະເປັນຜົນຮ້າຍຈົນເຖິງເວລາໄດ້ຕົກເປັນເຍື່ອຢ່າງໜ້າເສັ້ຽດາຍ. <u>ໝາຍເຫດ</u>: ງູບໍ່ໄດ້ຕົວະເຣື່ອງພຣະເຈົ້າ ແຕ່ມັນຕັ້ງຄຳຖາມເຮັດໃຫ້ຜູ້ຟັງສົງສັຍຄວາມດີ ແລະສິ່ງພຣະເຈົ້າປະທານໃຫ້. ຖ້າຈະເວົ້າຕາມພາສາທຸກວັນນີ້ແມ່ນ ມັນໄດ້ແນະນຳວ່າ, “ເຮົາໄດ້ຍິນວ່າພຣະເຈົ້າຈະບໍ່ໃຫ້ເຈົ້າຢູ່ໃນເຂດແດນຂອງພຣະອົງ? ມີຕົ້ນໄມ້ຫລາຍຊະນິດເຕັມໄປ ແລະພຣະອົງຈະບໍ່ໃຫ້ພວກເຈົ້າເປັນເຈົ້າຂອງ?” ເອວາໄດ້ຕອບເປັນຄຳເຕືອນວ່າບັນຫາອາດກຳລັງຈະເກີດຂຶ້ນ. ຜູ້ຍິງໄດ້ຕອບດ້ວຍການເພີ້ມຄຳເວົ້າຂອງພຣະເຈົ້າ (ເຈົ້າບໍ່ຕ້ອງຈັບ [ຕົ້ນໄມ້], ຫລືເຈົ້າຕ້ອງຕາຍ”) ນັ້ນເປັນການປ່ຽນພຣະຄຳຂອງພຣະເຈົ້າ. ຜູ້ຂຽນບໍ່ໄດ້ເວົ້າວ່າແນວນັ້ນແຕ່ມັນເປັນຄວາມຄິດຂອງນາງ ເພາະເວລາພຣະເຈົ້າໄດ້ອອກຄຳສັ່ງຕໍ່ອາດາມ ຜູ້ຍິງນັ້ນບໍ່ໄດ້ເກີດມາເທື່ອ. ແນວໃດກໍຕາມຄຳຕອບຢ່າງນັ້ນເປັນສິ່ງທີ່ນັກຍົກຕົນເອງຂຶ້ນ. ຄຳຕອບນັ້ນບໍ່ແມ່ນສິ່ງທີ່ພຣະເຈົ້າສັ່ງ, ນາງໄດ້ອອກຄວາມຄິດເພື່ອຈະຊ່ອຍພຣະເຈົ້າ.

## 2. <u>**ປີ້ນຄວາມຈິງ**</u>: (ປະຖົມມະການ 3:4-5)

ງູໄດ້ຕອບຜູ້ຍິງດ້ວຍປີ້ນຄຳເວົ້າໜ້ອຍນຶ່ງວ່າ ການກັດກິນໝາກໄມ້ນັ້ນບໍ່ເຮັດໃຫ້ຕາຍໂລດດ້ານຮ່າງກາຍ, ແຕ່ດ້ານຈິດວິນຍານແລ້ວເປັນຜົນຮ້າຍ. ມະນຸດຜູ້ຝ່າຝືນຄຳສັ່ງຂອງພຣະເຈົ້າໄດ້ສ້າງທະເລກວ້າງລະຫວ່າງຕົນເອງແລະພຣະເຈົ້າ ຜູ້ເປັນບໍ່ເກີດແຫ່ງຊີວິດ. ເວລາໄດ້ຖືກຕັດອອກຈາກພຣະອົງກໍເໝືອນໄດ້ແຍກຈາກພຣະເຈົ້າຜູ້ເປັນຕົ້ນຕໍທີ່ໃຫ້ແກ່ທຸກຢ່າງພ້ອມດ້ວຍຊີວິດ.

ງູໄດ້ກ່າວວ່າພຣະເຈົ້າເປັນຜູ້ເຫັນແກ່ຕົວຄືຮັກສາຄວາມຮູ້ນັ້ນໄວ້ຜູ້ດຽວ ມັນບໍ່ໄດ້ເວົ້າເຖິງເຣື່ອງອາຫານ. ຜູ້ທົດລອງໄດ້ເນັ້ນເຖິງຄວາມຮູ້ຄື ຄວາມດີແລະຄວາມຊົ່ວເປັນການທຽບລະຫວ່າງພຣະເຈົ້າແລະມະນຸດ ເຖິງແມ່ນວ່າພຣະເຈົ້າຜູ້ບໍ່ມີຂອບເຂດແລະຈຳກັດ. ຈະບໍ່ມີຜູ້ໃດເທົ່າທຽມພຣະອົງໄດ້ເດັດຂາດ ເພາະພຣະອົງເປັນພຣະຜູ້ສ້າງອົງຍິ່ງໃຫຍ່ ຜູ້ມີອຳນາດໃນໂລກຈັກກະວານຕລອດການ.

ເປັນໜ້າແປກໃຈທີ່ງູໄດ້ກ່າວວ່າ ຜູ້ຊາຍກັບຜູ້ຍິງແຕກຕ່າງກັນ ແຕ່ລັກສະນະເໝືອນພຣະເຈົ້າ (1:27). ພຣະເຈົ້າໄດ້ສ້າງພວກເຂົາຂຶ້ນມາໃຫ້ມີລັກສະນະເໝືອນພຣະອົງ ຄືມີຜົນແຫ່ງພຣະວິນຍານ: ຄວາມຮັກ, ຄວາມຍິນດີ, ສັນຕິສຸກ, ຄວາມອົດທົນ, ຄວາມເມດຕາ ແລະຄວາມສຸພາບພ້ອມດ້ວຍຄວາມສາມາດໃຫ້ຄິດ ແລະພິຈາຣະນາເພື່ອຈະຢູ່ຮ່ວມກັບຄົນອື່ນໄດ້. ການມີລັກສະນະຂອງພຣະເຈົ້າແມ່ນມີສິດທີຈະເລືອກເອົາ ຫລືເຮັດສິ່ງນີ້ງສິ່ງໃດໄດ້ຕາມມັກເໝືອນກັບພຣະອົງຢ່າງຄົບຖ້ວນ.

## 3. <u>ເນື້ອເຣື່ອງການທົດລອງ</u>: (ປະຖົມມະການ 3:6)

ເປັນເຣື່ອງໜ້າສົນໃຈທີ່ມານໄດ້ທົດລອງຜູ້ຍິງເຖິງເຣື່ອງຄວາມຮູ້ສຶກ (ໝາກໄມ້ນັ້ນເປັນອາຫານດີແລະ ກໍງາມຕາ) ນັ້ນເປັນຂັ້ນຕົ້ນ. ຄວາມຮູ້ສຶກຢ່າງນີ້ນໍາໄປເຖິງການກະບົດ. ພຣະເຈົ້າຜູ້ດຽວເທົ່ານັ້ນສາມາດປະ ກາດວ່າອັນໃດດີ. ທີ່ສຸດຜູ້ຍິງໄດ້ຕັດສິນໃຈເອົາເອງວ່າອັນໃດເປັນສິ່ງດີ ແທນທີ່ຈະໃຫ້ພຣະເຈົ້າເປັນຜູ້ບອກ.

ຂັ້ນທີສອງແມ່ນຄຸນນະພາບຂອງໝາກໄມ້ "ຢາກມີປັນຍາ." ຜູ້ຍິງບໍ່ໄດ້ປມາດພຣະເຈົ້າ ແຕ່ນາງຕ້ອງ ການປັນຍາທີ່ປາສຈາກພຣະເຈົ້າໂດຍບໍ່ຮູ້ສຶກຕົນວ່າໄດ້ສແວງຫາປັນຍາຜິດບ່ອນ. ອີງຕາມ ເພງສັຣເສີນບົດ 111:10, "ການຢໍາເກງພຣະເຈົ້າເປັນບໍ່ເກີດຂອງປັນຍາ." ປັນຍາອັນແທ້ຈິງຈະບໍ່ເກີດຂຶ້ນປາສຈາກພຣະເຈົ້າ ຜູ້ຮູ້ສັພທຸກສິ່ງ.

ໃນຕອນນີ້ລາຍລະອຽດເປັນເຣື່ອງສໍາຄັນແລະໄດ້ເປີດໃຫ້ຮູ້: ຜູ້ຊາຍໄດ້ຢູ່ທີ່ນັ້ນກັບຜູ້ຍິງ ອາດໄດ້ຍິນຄໍາ ສົນທະນາລະຫວ່າງຜູ້ຍິງແລະງູ. ຕໍ່ມາຜູ້ຊາຍໄດ້ເຂົ້າໃຈເຣື່ອງຢ່າງວອງໄວ. ມີຫລາຍຄົນໄດ້ຖິ້ມໂທດໃສ່ຜູ້ ຍິງວ່າເປັນຄົນຜິດຜູ້ທໍາອິດ. ແຕ່ເຫັນວ່າທັງພຣະຄັມພີເດີມແລະພຣະຄັມພີໃໝ່ໄດ້ປະນາມຜູ້ຊາຍ (ໂຮເຊຢາ 6:7: "ເໝືອນກັບອາດາມ, ພວກເຂົາໄດ້ລະເມີດພັນທະສັນຍາທີ່ເຮົາມີໄວ້ກັບພວກເຂົານັ້ນ." ໂຣມ 5:12: "..ເໝືອນກັບຄວາມບາບໄດ້ເຂົ້າມາໃນໂລກເພາະດ້ວຍມະນຸດຜູ້ດຽວ" ໂຣມ 5:14: "ດ້ວຍວ່າຄົນທີ່ບໍ່ໄດ້ເຮັດ ບາບໂດຍລະເມີດພຣະບັນຍັດເໝືອນອາດາມ." ອາຈານໂປໂລໄດ້ບອກຕີໂມທຽວວ່າ, "ບໍ່ແມ່ນອາດາມທີ່ ຖືກຫລອງລວງ ແຕ່ແມ່ນແມ່ຍິງຜູ້ຖືກຫລອກລວງ" (1 ຕມທ 2:14). ຜູ້ຍິງໄດ້ຖືກແຮ້ວຂອງການຫລອກລວງ, ແຕ່ຜູ້ຊາຍໄດ້ຕັ້ງໃຈລະເມີດຄໍາສັ່ງຂອງພຣະເຈົ້າ.

ຕາມຄໍາສອນຈາກທັສນະຂອງພຣະຄັມພີໃໝ່ແລ້ວເຫັນວ່າຜູ້ຊາຍມີຄວາມຮັບຜິດຊອບຫລາຍ. ພຣະ ເຈົ້າໄດ້ສັ່ງຕໍ່ຜູ້ຊາຍຫ້າມບໍ່ໃຫ້ກິນໝາກໄມ້ໂດຍກົງ ເພາະຕອນນັ້ນຜູ້ຍິງບໍ່ໄດ້ຖືກສ້າງຂຶ້ນມາເທື່ອ. (ປຖມ 2: 17). ຜູ້ຊາຍບໍ່ພຽງເອົາຄໍາສັ່ງຈາກພຣະເຈົ້າໄປຫາຄົນອື່ນຜູ້ເກີດມາທີຫລັງ, ແຕ່ຕ້ອງເປັນຕົວຢ່າງອັນດີຕໍ່ຄົນ ອື່ນອີກດ້ວຍ. (ຢກບ 3:1). ຜູ້ຊາຍແທນດີຈະເວົ້າຫລືເຮັດອັນນຶ່ງອັນໃດເພື່ອເຕືອນຜູ້ຍິງເວລາມີການສົນທະ ນາກັບງູ ຄືດຶງນາງອອກເພື່ອຊ່ອຍນາງເຮັດສິ່ງທີ່ຖືກຕ້ອງ (ຢກບ 4:17), ຜູ້ຊາຍໄດ້ຢືນຢູ່ລ້າໆໂດຍບໍ່ໄດ້ເຂົ້າ ໄປຕັກເຕືອນແຕ່ປະການໃດ. ດ້ວຍເຫດຜົນຢ່າງນີ້ ພຣະຄັມພີຈຶ່ງຖືວ່າຜູ້ຊາຍມີຄວາມຜິດອັນໃຫຍ່.

ນີ້ບໍ່ໄດ້ໝາຍຄວາມວ່າຜູ້ຍິງເປັນຄົນບໍຣິສຸດ ແຕ່ມີຄວາມຜິດຄືກັບຜູ້ຊາຍເພາະຜູ້ຍິງກໍຮູ້ຈັກວ່າສິ່ງໃດພຣະ ເຈົ້າຕ້ອງການຈາກນາງ. ນາງໄດ້ເລືອກເຮັດຕາມໃຈແທນທີ່ຈະເອົາພຣະເຈົ້າກ່ອນ. ທັງສອງຄົນມີຄວາມຜິດ ເໝືອນກັນ. ກ່ອນນີ້ທັງສອງບໍ່ເຄີຍຄິດວ່າຈະກະບົດຕໍ່ພຣະເຈົ້າ ແຕ່ເມື່ອພວກເຂົາໄດ້ຝ່າຝືນຄໍາສັ່ງຂອງພຣະ ອົງແລ້ວ ພວກເຂົາໄດ້ສ້າງສິ່ງນຶ່ງສໍາຄັນຂຶ້ນຄືການເລືອກເຮັດຕາມໃຈມັກ ຊຶ່ງເປີດໂອກາດໃຫ້ມະນຸດເຮັດ ບາບຕາມໃຈມັກ.

## 4. **<u>ຄວາມຮູ້ຈັກສິ່ງຜິດ</u>**: (ປະຖົມມະການ 3:7)

ງູໄດ້ສັນຍາຕໍ່ອາດາມແລະເອວາ ວ່າພວກເຂົາຈະຮູ້ຈັກຄວາມດີແລະຄວາມຊົ່ວເໝືອນກັບພຣະເຈົ້າ. ພວກເຂົາຄິດວ່າຈະມີຄວາມຍິນດີກັບຄວາມດີນັ້ນ ແຕ່ເປັນໜ້າເສັຽດາຍພວກເຂົາໄດ້ຮູ້ຈັກຄວາມຊົ່ວ. ພວກເຂົາໄດ້ເຫັນສະພາບໃໝ່ຂອງຕົນເອງແລະພຣະເຈົ້າ. ການມີສະພາບລັກສະນະເໝືອນພຣະເຈົ້ານັ້ນໄດ້ຫລຸດໜ້ອຍຖອຍລົງ ບໍ່ມີຄຸນສົມບັດແລະເປັນເຫດໃຫ້ມະນຸດຊາດໄດ້ຜິດພາດໄປ.

### <u>ຄວາມໝາຍແລະພາກປະຕິບັດ</u>

ເລີ້ມແຕ່ຕົ້ນເດີມມາ ມະນຸດຢາກເປັນນາຍຂອງຕົນເອງ. ຄວາມທະເຍີທະຍານແນວນັ້ນເຮັດໃຫ້ພວກເຮົາໄດ້ຫຍັງ? ພວກເຮົາພຽງໄດ້ເວລາສັ້ນໆເທົ່ານັ້ນ. ພຣະເຈົ້າໄດ້ເຫັນພາບທັງໝົດຈາກຕົ້ນຫາປາຍ. ພຣະອົງມີພຣະປັນຍາຊຶ່ງພວກເຮົາບໍ່ສາມາດມີໄດ້. ດ້ວຍເຫດໃດຈຶ່ງເປັນການຍາກທີ່ພວກເຮົາຈະໄວ້ວາງໃຈແລະເຊື່ອຟັງພຣະອົງເພື່ອເລືອກເອົາສິ່ງຖືກຕ້ອງ? ຕົ້ນຕໍຂອງຄວາມຜິດບາບແມ່ນຢູ່ລ້າໆ ເອົາພຣະເຈົ້າອອກໄປແລະເອົາໃຈຕົນເອງເປັນໃຫຍ່, ຄືຢາກເປັນພຣະເຈົ້າຕາມໃຈຕົນເອງ. ຍ້ອນຄວາມບາບແນວນີ້ພວກເຮົາໄດ້ພົບກັບຄວາມລະອາຍແລະຮູ້ສຶກຜິດ. ເຮັດແນວໃດພວກເຮົາຈຶ່ງຈະສາມາດເພິ່ງພຣະເຈົ້າໄດ້ເວລາຖືກທົດລອງຈາກມານ?

### <u>ຄໍາຖາມ</u>:

6. ເວລາງູມາຫາຜູ້ຍິງ ງູນັ້ນໄດ້ເຮັດຕໍ່ຜູ້ຍິງຢ່າງໃດໃນເຣື່ອງພຣະເຈົ້າເປັນຜູ້ປະທານສິ່ງຕ້ອງການປະຈໍາວັນໃຫ້? ພວກເຮົາໃນທຸກວັນນີ້ກໍສົງສັຍສິ່ງທີ່ພຣະເຈົ້າຈະຈັດຫາໃຫ້ ໃນທາງໃດແດ່?
7. ເປັນດ້ວຍເຫດໃດຜູ້ຍິງຈຶ່ງເວົ້າເພີ້ມຄໍາສັ່ງຂອງພຣະເຈົ້າຈຶ່ງກາຍເປັນບັນຫາ? ທຸກວັນນີ້ພວກເຮົາກໍເພີ້ມຄໍາເວົ້າຂອງພຣະເຈົ້າຄິດຢາກຈະຊ່ອຍພຣະເຈົ້າ ທ່ານເຄີຍໄດ້ເຫັນແລະເຮັດບໍ່?
8. ເປັນຫຍັງມະນຸດເຮົາຈຶ່ງບໍ່ສາມາດຕັດສິນໃຈເອງຢ່າງຖືກຕ້ອງວ່າອັນໃດເປັນສິ່ງດີ? ແມ່ນຫຍັງເປັນມາຕະຖານວັດແທກເພື່ອຈະຮູ້ວ່າອັນໃດດີແລະອັນໃດຊົ່ວ.
9. ເປັນຫຍັງໃນເຣື່ອງນີ້ ຜູ້ຊາຍກາຍເປັນຄົນຜິດຫລາຍກວ່າຜູ້ຍິງທັງໆທີ່ຜູ້ຊາຍຢູ່ລ້າໆເວລາງູຫລອກຜູ້ຍິງ? ມີອັນໃດພວກເຮົາສາມາດຮຽນນໍາຄວາມຜິດຂອງຜູ້ຊາຍ?
10. ຄົນໃນສມັຍນີ້ເລືອກເອົາການເຮັດຜິດຂອງຕົນເອງດ້ວຍວິທີໃດ?
11. ແມ່ນຫຍັງທີ່ຄຣິສຕຽນໃນທຸກວັນນີ້ພົບກັບການທົດລອງ? ພຣະເຈົ້າມີທາງທີ່ຈະຊ່ອຍພວກເຮົາໃຫ້ເອົາຊະນະຕໍ່ການທົດລອງຢ່າງໃດ?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ບົດຮຽນທີ 6
## ຜົນຮັບທີ່ບໍ່ເຊື່ອຟັງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ປະຖົມມະການ 3:8-24

**ພູມຫລັງຂອງພຣະຄັມພີ**: ປະຖົມມະການ 3:8-24

**ຈຸດສຳຄັນສຳລັບບົດຮຽນນີ້**: ຄວາມບາບໄດ້ເຮັດໃຫ້ມີຄວາມຢ້ານ ຄວາມລະອາຍ, ຖິ້ມໂທດໃສ່ຄົນອື່ນ ແລະການຕາຍ.

**ຄຳຖາມເພື່ອການຄົ້ນຄວ້າ**: ແມ່ນຫຍັງເປັນຜົນສະທ້ອນຈາກຄວາມບາບ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຮູ້ຈັກ ແລະອົດບໍ່ເຮັດຄວາມຜິດບາບ ແລະຜົນຂອງຄວາມຜິດບາບ.

### ຄຳນຳ

ການບໍ່ເຊື່ອຟັງພຣະເຈົ້ານັ້ນເປັນເຫດໃຫ້ຜູ້ຊາຍແລະຜູ້ຍິງຄູ່ທຳອິດປະສົບກັບຄວາມລະອາຍ ແລະຄວາມຮູ້ສຶກຜິດຊຶ່ງເປັນກຳແພງກັ້ນຄວາມສັມພັນຂອງເຂົາເຈົ້າກັບພຣະເຈົ້າ ແລະຕໍ່ກັນແລະກັນ.

ຂ້າພະເຈົ້າຫົວອອກສຽງແຮງໆເວລາໄດ້ຍິນສາສນາຈານຄົນນຶ່ງເວົ້າເຖິງລູກຊາຍຜູ້ຢາກຮູ້ຈັກພາກສ່ວນໃນຮ່າງກາຍຂອງປາ. ລາວໄດ້ເອົາປາສີຄຳທຸກໂຕໃນແກ້ວລ້ຽງປາຂອງຜູ້ເປັນເອື້ອຍມາປາດເປັນຕ່ອນເພື່ອຢາກສຶກສາວ່າມັນມີຫຍັງແດ່ ໃນທີ່ສຸດລາວຢ້ານເອື້ອຍຮ້າຍ ລາວຈຶ່ງເອົາຕ່ອນປານັ້ນໄປເຊື່ອງໃນລິ້ນຊັກແຕ່ລະບ່ອນໃນເຮືອນຄົວ. ກິ່ນເໝັນຂອງປານັ້ນເຮັດໃຫ້ລາວໄດ້ຮັບໂທດຫລາຍກວ່າ ຖ້າລາວມາຍອມສາລະພາບແລະຂໍໂທດນຳເອື້ອຍ.

ຄວາມບາບເຮັດໃຫ້ເກີດຄວາມຜິດ ແລະຄວາມຜິດນຳໄປເຖິງຄວາມອາຍ. ຫລາຍສັດຕະວັດມາແລ້ວມະນຸດເຮົາພະຍາຍາມບໍ່ໃຫ້ຜົນຂອງຄວາມບາບຕາມມາໂດຍເຊື່ອງການກະທຳເຊັ່ນ: "ເອົາສົບຄົນຕາຍໄປຝັງໄວ້ທີ່ກ້ອງເຮືອນ ຫລືເອົາຕ່ອນປາຄຳໄປເຊື່ອງໄວຕາມລິ້ນຊັກຕ່າງໆ ຖ້າມີຄວາມຮູ້ສຶກຜິດເກີດຂຶ້ນແລ້ວມະນຸດມັກຈະປະຕິເສດ. ອາດາມແລະເອວາກໍເຮັດເຊັ່ນນີ້ ແທນທີ່ເວລາເຂົາເຈົ້າໄດ້ເຮັດຜິດແລ້ວ ຈະສາລະພາບຄວາມຜິດນັ້ນຕໍ່ພຣະເຈົ້າ ແຕ່ເຂົາເຈົ້າໄປລີ້ຢູ່ ແລະຖິ້ມຄວາມຜິດໃຫ້ຄົນອື່ນ.

### 1. ຄວາມລະອາຍຄັ້ງທຳອິດ: (ປະຖົມມະການ 3:8)

ນັກຂຽນຄົນຍິວມັກໃຊ້ການປຽບທຽບ. ໃນຕອນນີ້ໄດ້ກ່າວເຖິງການຕີຄວາມໝາຍສາມຢ່າງ. ນຶ່ງ, ພຣະເຈົ້າໄດ້ປະທານຕົ້ນໄມ້ໃຫ້ເພື່ອຈະອວຍພຣະພອນເຂົາເຈົ້າເປັນອາຫານແລະເປັນຮົ່ມເຢັນ. ສອງ, ຕົ້ນໄມ້ກາຍເປັນຕົ້ນແຫ່ງການທົດລອງ. ສາມ, ໃນເມື່ອມະນຸດມີຄວາມຄວາມລະອາຍແລ້ວກໍໃຊ້ຕົ້ນໄມ້ເປັນບ່ອນລີ້ຕົວຈາກພຣະເຈົ້າ ທັງໆທີ່ພຣະອົງໄດ້ປະທານຕົ້ນໄມ້ໃຫ້ເພື່ອຈະອວຍພຣະພອນເຂົາເຈົ້າ. ອາດາມແລະເອວາໄປລີ້ເພາະເຂົາເຈົ້າໄດ້ຍິນສຽງພຣະເຈົ້າສະເດັດໄປມາໃນສວນ. ການບໍ່ເຊື່ອຟັງທຳລາຍຄວາມສັມພັນຂອງເຂົາເຈົ້າກັບພຣະເຈົ້າຢ່າງໜ້າເສັຽດາຍ.

ມັນເປັນການເຂົ້າໃຈຍາກຈາກພາສາເດີມເພາະການແປເປັນພາສາອັງກິດອາດຂາດຄວາມໝາຍໄປ. ໃນປະຖົມມະການ 3:8 ໃນພາສາເຮັບເຮີ ຮາລັກ ແປເປັນອັງກິດວ່າ ຍ່າງໄປມາ. ຄຳເວົ້າ ຣູອາກ ແປວ່າເຢັນ ບໍ່ໄດ້ບອກຫຍັງເຖິງເວລາ. ຄວາມໝາຍຕ່າງໆຈາກພາກສາເຮັບເຮີ ຣູອາກໝາຍເຖິງຈິດວິນຍານ (ປຖມ 41: 8), ລົມ (ປຖມ 8:1, ອພຍ 15:10), ລົມພະຍຸ (ພສສ 107:25, 148:8), ລົມຫັນໃຈ (ໂຢບ 15:30, 19:17), ລົມແຫ່ງຊີວິດ (ປຖມ 6:17,7:9-15), ໃຈຮ້າຍ (ຜູ້ປົກຄອງ 8:3, 9:23). ຄຳເວົ້າທີ່ວ່າ ຣູອາກ ໃນປະຖົມມະການ 3:8 ໄດ້ກ່າວເຖິງການສະເດັດມາຂອງພຣະເຈົ້າ ອາດໝາຍເຖິງລົມພະຍຸເປັນການໂກດຮ້າຍແລະການຕັດສິນຂອງພຣະເຈົ້າ ຫລືອາດແມ່ນອົງພຣະວິນຍານຜູ້ປະທານລົມແຫ່ງຊີວິດ.

## 2. **<u>ຖືກສອບສວນ</u>**: (ປະຖົມມະການ 3:9-13)

ການຕີຄວາມໝາຍຄຳວ່າ ຣູອາກ ຈະຊ່ອຍໃຫ້ຜູ້ອ່ານເຂົ້າໃຈດີໃນບົດຮຽນນີ້. ຖ້າພຣະເຈົ້າສະເດັດມາຕັດສິນເໝືອນລົມພະຍຸ ຄຳສອບຖາມຂອງພຣະອົງຕໍ່ຜູ້ຊາຍອາດເປັນດ້ານກົດໝາຍ. ອາດາມແລະເອວາໄດ້ປາກົດຕົວຢູ່ສານຂອງກົດໝາຍ, ແລະພຣະເຈົ້າເປັນຜູ້ສັກສິດໄດ້ສືບຖາມຄວາມເປັນມາ. ແຕ່ຖ້າຄຳເວົ້າ ຣູອາກມີຄວາມໝາຍວ່າເປັນວິນຍານທີ່ໃຫ້ຊີວິດ ການສືບຖາມຂອງພຣະເຈົ້າແມ່ນໄດ້ບອກເຖິງຄວາມເມດຕາສົງສານຂອງພຣະອົງຕ່າງຫາກ. ພຣະເຈົ້າເປີດໂອກາດໃຫ້ຜູ້ຊາຍແລະຜູ້ຍິງສາລະພາບຄວາມຜິດບາບ ແລະຂໍອະພັຍຈາກພຣະເຈົ້າ. ພຣະອົງບໍ່ເຄີຍລົງໂທດໂດຍບໍ່ໃຫ້ໂອກາດຄົນທີ່ເຮັດຜິດສາມາດປັ່ງແປງສິ່ງທີ່ຜິດໃຫ້ເຮັດຖືກຕ້ອງໄດ້.

ເມື່ອພຣະເຈົ້າໄດ້ຖາມວ່າ, "ເຈົ້າຢູ່ໃສ?"ພຣະເຈົ້າບໍ່ໄດ້ຊອກຫາມະນຸດຄູ່ທຳອິດ ເພາະພຣະອົງຊົງຮູ້ຈັກດີວ່າເຂົາເຈົ້າຢູ່ໃສ. ພຣະອົງໃຫ້ໂອກາດເຂົາເຈົ້າອອກມາຫາພຣະອົງດ້ວຍຄວາມສມັກໃຈ ແລະສາລະພາບຄວາມຜິດນັ້ນ. ພຣະອົງຖາມເພື່ອເປີດໂອກາດໃຫ້ບອກຄວາມຈິງ. ໃຫ້ເຂົ້າໃຈວ່າຄວາມບາບເປັນກຳແພງໃຫຍ່. ມັນເກີດຂຶ້ນເພື່ອທຳລາຍບໍ່ພຽງແຕ່ຄວາມສັມພັນລະຫວ່າງພຣະເຈົ້າກັບມະນຸດເທົ່ານັ້ນ ແຕ່ຕໍ່ມະນຸດຊາດດ້ວຍກັນ. ເວລາເຂົາເຈົ້າໄດ້ລີ້ຕົວຈາກພຣະເຈົ້າຢູ່ນັ້ນ ເຂົາເຈົ້າໄດ້ແຍກຈາກພຣະອົງຜູ້ປະທານວຽກງານໃຫ້ເຂົາເຈົ້າເຮັດໃນສວນເອເດນ ເຂົາເຈົ້າມີຄວາມຮູ້ສຶກຜິດແລະລະອາຍ.

ພຣະເຈົ້າໄດ້ຖາມຜູ້ຊາຍໂດຍກົງວ່າ ລາວໄດ້ກິນໝາກໄມ້ທີ່ພຣະເຈົ້າສັ່ງບໍ່ໃຫ້ກິນນັ້ນບໍ ເພື່ອໃຫ້ໂອກາດຄັ້ງທີສອງໃນການສາລະພາບ. ແທນທີ່ຈະຮັບເອົາຢ່າງເປັນຜູ້ຊາຍ ລາວເລີຍຖິ້ມຄວາມຜິດນັ້ນໃຫ້ຄົນອື່ນ ຄືລາວໄດ້ໂຍນຄວາມຜິດນັ້ນໃສ່ຜູ້ຊ່ອຍ ແລະຍັງຫາເຣື່ອງໃສ່ພຣະເຈົ້າອີກຊ້ຳໂດຍກ່າວວ່າ, "ຜູ້ຍິງທີ່ພຣະເຈົ້າໄດ້ສ້າງມາເອົາໃຫ້ຂ້ານ້ອຍກິນ…" ເໝືອນກ່າວຕໍ່ພຣະເຈົ້າວ່າພຣະອົງໄດ້ເຮັດຄວາມຜິດ ຖ້າພຣະອົງຮູ້ຈັກດີແລະບໍ່ໄດ້ສ້າງຜູ້ຍິງຂຶ້ນມາສິ່ງນີ້ກໍບໍ່ໄດ້ເກີດຂຶ້ນ. ອາດາມຍັງຖິ້ມໂທດໃສ່ຜູ້ຍິງວ່າ ຖ້ານາງບໍ່ເອົາໝາກໄມ້ໃຫ້ກິນ ລາວກໍຈະບໍ່ໄດ້ກິນເດັດຂາດ.

ພຣະເຈົ້າໄດ້ໃຫ້ໂອກາດແກ່ຜູ້ຍິງເໝືອນກັນ ພຣະເຈົ້າໄດ້ຖາມວ່າ, "ບອກມາວ່າເຈົ້າໄດ້ເຮັດຫຍັງ." ຜູ້ຍິງໄດ້ເຮັດຄວາມຜິດເໝືອນກັບຜູ້ຊາຍໂດຍຖິ້ມໂທດໃຫ້ງູ ແທນທີ່ຈະຮັບເອົາຄວາມຜິດຂອງຕົນເອງ.

## 3. **<u>ການຕັດສິນ</u>**: (ປະຖົມມະການ 3:14:16)

ພຣະເຈົ້າບໍ່ເສັຽເວລາທີ່ຈະໃຫ້ງູຕອບອັນໃດ ແຕ່ພຣະອົງໄດ້ປະນາມແລະລົງໂທດງູ ຄືພຣະອົງໄດ້ຫລຸດຊັ້ນຂອງງູລົງຕ່ຳສຸດໃນຈຳນວດສັດປ່າທັງຫລາຍ ເພາະສັດອື່ນຍັງມີຂາຍ່າງໄປມາໄດ້. ເລີ້ມແຕ່ຕອນນີ້ໄປກໍມີບັນຫາລະຫວ່າງງູແລະມະນຸດ. ພຣະຄັມພີພາສາອັງກິດແປວ່າ ທັບຫົວໃຫ້ແຕກ, ຕີຫົວ, ຫລືເຮັດໃຫ້ຊ້ຳໃນຂໍ້ທີ 15, ຕາມພຣະຄັມພີພາສາເຮັບເຣີແລ້ວແມ່ນການຕໍ່ສູ້ກັນລະຫວ່າງມະນຸດແລະມານ.

ພຣະເຈົ້າສັ່ງໃຫ້ມະນຸດ "ອອກແມ່ແຜ່ລູກ" (ປຖມ 1:28). ເມື່ອພຣະເຈົ້າສ້າງຜູ້ຍິງເປັນຜູ້ຊ່ອຍຜູ້ຊາຍພຣະເຈົ້າໃຫ້ເຂົາເຈົ້າເປັນຮ່າງກາຍດຽວກັນ (2:24). ຖ້າເປັນດັ່ງນັ້ນພຣະເຈົ້າມີພຣະປະສົງໃຫ້ເຂົາເຈົ້າອອກແມ່ແຜ່ລູກໃນສວນເອເດນ. ຖ້າເຂົາເຈົ້າບໍ່ມີລູກອາດກາຍເປັນການກະບົດຕໍ່ພຣະເຈົ້າຄັ້ງທຳອິດ ແທນທີ່ຈະເປັນການກະບົດຈາກການກິນໝາກໄມ້ທີ່ຫວງຫ້າມນັ້ນ. ຫລັງຈາກມີການກະບົດບໍ່ເຊື່ອຟັງພຣະເຈົ້າແລ້ວ ຜູ້ຍິງກໍຖືກໂທດຄືເວລາເກີດລູກລາວໄດ້ມີຄວາມເຈັບປວດເພີ້ມຂຶ້ນ.

ພຣະເຈົ້າໄດ້ສ້າງສອງຢ່າງຊຶ່ງເປັນພຣະພອນອັນໃຫຍ່ຄື ແຕ່ງງານ ແລະກາຍເປັນພໍ່ແມ່. ການແຕ່ງງານແມ່ນຄູ່ຄອງຢູ່ດ້ວຍກັນຢ່າງເປັນອັນນຶ່ງອັນດຽວ ພ້ອມດ້ວຍຄວາມຊົມຊື່ນຍິນດີເວລາເດັກນ້ອຍໄດ້ເກີດມາເພີ້ມສະມາຊິກໃນຄອບຄົວ. ຄວາມສັມພັນໃນການສ້າງຄອບຄົວໄດ້ຖືກທຳລາຍລົງໃນເມື່ອມະນຸດໄດ້ກະບົດຕໍ່ພຣະເຈົ້າ ຄືບໍ່ເຊື່ອຟັງພຣະອົງ.

ພຣະເຈົ້າໄດ້ລົງໂທດຜູ້ຊາຍໃຫ້ເຮັດວຽກໜັກ ທັງໆໃນສວນເອເດນເຕັມໄປດ້ວຍໝາກໄມ້ທຸກຊະນິດ ພຽງແຕ່ໄປເກັບເອົາມາກິນເທົ່ານັ້ນ (ປຖມ 1:29). ສິ່ງນີ້ເກີດຂຶ້ນກໍເພາະດ້ວຍການບໍ່ເຊື່ອຟັງຊຶ່ງເປັນຄວາມບາບ. ຫລັງຈາກມີການກະບົດແລ້ວດິນກໍບໍ່ໄດ້ຜະລິດຜົນຕາມພຣະເຈົ້າໄດ້ສ້າງຂຶ້ນມາ ມີຫຍ້າ ແລະໜາມເກີດຂຶ້ນຊຶ່ງເປັນເຄື່ອງໝາຍເຖິງຄວາມວຸ້ນວາຍ. ຄຳສາບແສ່ງຂອງພຣະເຈົ້າບໍ່ໄດ້ຕົກໃສ່ວຽກງານຂອງມະນຸດເທົ່ານັ້ນ ແຕ່ໄດ້ຕົກຖືກແຜ່ນດິນນຳ. ມະນຸດໄດ້ຖືກສ້າງຂຶ້ນມາຈາກດິນ ແລະປະທານລົມຫັນໃຈໃຫ້ (ປຖມ 2:7). ແຕ່ຍ້ອນການບໍ່ເຊື່ອຟັງຈຶ່ງເປັນເຫດໃຫ້ມະນຸດຈຳເປັນຕ້ອງກັບຄືນໄປເປັນດິນໃນທີ່ສຸດ (2:19).

## 4. <u>ຄວາມສເມີພາບກັນໄດ້ແຕກສລາຍ</u>: (ປະຖົມມະການ 3:20-24)

ເວລາພຣະເຈົ້າໄດ້ສ້າງຜູ້ຍິງຂຶ້ນມາ ຜູ້ຊາຍໄດ້ສັງເກດເຫັນວ່ານາງໄດ້ແຕກຕ່າງກັບສັດອື່ນໆ ຜູ້ເປັນຄູ່ສເມີພາບຄຽງຄູ່ກັນ (ປຖມ 2:23). ພາສາເຮັບເຣີ ຜູ້ຊາຍແມ່ນ ອີສ, ຜູ້ຍິງແມ່ນ ອີສຊາ ສເມີພາບກັນ ທັງສອງໄດ້ຖືກສ້າງຕາມພຣະລັກສະນະຂອງພຣະເຈົ້າ ເພື່ອໃຫ້ຮັກສາສິ່ງພຣະເຈົ້າໄດ້ສ້າງຂຶ້ນມາ (ປຖມ 1:27). ເຫັນການຊົງສ້າງອັນດີຂອງພຣະເຈົ້າໄດ້ຖືກລົບກວນດ້ວຍການບໍ່ເຊື່ອຟັງຂອງມະນຸດຄູ່ທຳອິດ. ຫລັງຈາກພຣະເຈົ້າໄດ້ລົງໂທດ ຜູ້ຊາຍໄດ້ເລີ້ມໃຊ້ອຳນາດເໜືອຜູ້ຍິງ ເຮັດຕາມໃຈເໝືອນກັບເອົາໃຈຕົນເອງຫລາຍກວ່າເຮັດຕາມແຜນການຂອງພຣະເຈົ້າຈຶ່ງເປັນເຫດໃຫ້ຄວາມສເມີພາບໄດ້ແຕກສລາຍໄປ.

ເຄື່ອງນຸ່ງທີ່ອາດາມກັບເອວາໄດ້ນຸ່ງບໍ່ພຽງພໍ (ປຖມ 3:7) ເພາະເປັນໃບໄມ້ ພຣະເຈົ້າໄດ້ປະທານໜັງສັດຕາຍໃຫ້ເປັນເຄື່ອງນຸ່ງໝາຍຄວາມວ່າພຣະເຈົ້າຮູ້ຈັກດີວ່າມັນຈະທົນໄດ້ດົນກວ່າໃບໄມ້. ໝາຍຄວາມວ່າພວກເຮົາຈະໄດ້ພົບກັບການຕາຍເໝືອນສັດເພາະຄວາມຜິດບາບທີ່ເຂົາເຈົ້າໄດ້ເຮັດ.

ເປັນໜ້າສົນໃຈທີ່ພຣະເຈົ້າບໍ່ໄດ້ສັ່ງໃຫ້ມະນຸດຄົນທຳອິດກິນຕົ້ນໄມ້ແຫ່ງຊີວິດໃນສວນ (ປຖມ 2:9). ມີແຕ່ຕົ້ນໄມ້ຮູ້ຈັກຄວາມດີແລະຄວາມຊົ່ວພຣະເຈົ້າສັ່ງບໍ່ໃຫ້ກິນ (ປຖມ 2:17). ພຣະເຈົ້າເປັນບໍ່ເກີດຂອງຊີວິດໃນເມື່ອມະນຸດໄດ້ເຊື່ອຟັງພຣະອົງ ເຂົາເຈົ້າກໍມີຊີວິດຊຶ່ງອອກມາຈາກພຣະອົງເອງ. ບໍ່ຈຳເປັນຕ້ອງກິນຈາກ

ຕົ້ນໄມ້ແຫ່ງຊີວິດເລີຍ. ໃນເມື່ອຄວາມບາບໄດ້ເຂົ້າມາ ມະນຸດບໍ່ມີສິດທີ່ຈະເຂົ້າໄປຫາພຣະເຈົ້າຜູ້ເປັນເຈົ້າຂອງຊີວິດ. ມະນຸດໄດ້ຖືກມັດຈອງຈຳຢູ່ໃນໂລກເພາະການກະບົດຂອງເຂົາເຈົ້າ. ຜົວເມັຽຄູ່ທຳອິດໄດ້ຖືກໄລ່ອອກຈາກສວນຊຶ່ງເປັນການຖືກແຍກອອກຈາກພຣະເຈົ້າ ແລະເຂົ້າສູ່ຄວາມຕາຍເປັນຜົນຕອບແທນ.

## ຄວາມໝາຍແລະພາກປະຕິບັດ

ຖ້າພວກເຮົາເບິ່ງໜັງຄາດຕະກັມ ສ່ວນຫລາຍຜູ້ຂ້າຄົນຈຳເປັນຕ້ອງເຊື່ອງອາວຸດໄວ້ໂດຍບໍ່ໃຫ້ຜູ້ໃດເຫັນເພາະຢ້ານຜົນຈະຕາມມາ, ແຕ່ໃນທີ່ສຸດຄວາມຈິງບໍ່ໜີຄວາມຈິງ ເຖິງແມ່ນຈະເຊື່ອງອາວຸດໄວ້ດີປານໃດກໍຕາມວັນນັ້ນຄວາມຈິງຈະອອກມາປາກົດ.

ຄຣິສຕຽນເວລາເຮັດຜິດບາບແລ້ວກໍມັກປະຕິເສດເພາະບໍ່ຢາກຮັບໂທດ ແຕ່ຕ້ອງເຂົ້າໃຈວ່າຖ້າເຮັດຢ່າງນີ້ພວກເຮົາກໍໄດ້ທຳລາຍຄວາມສັມພັນຂອງເຮົາກັບພຣະເຈົ້າ. ການຂາດຄວາມສັມພັນກັບພຣະເຈົ້າຈະເຮັດໃຫ້ທຸກພາກສ່ວນໃນຊີວິດໄດ້ຮັບຜົນຮ້າຍ. ຄວາມຮູ້ສຶກຜິດ ແລະຄວາມລະອາຍສາມາດທຳລາຍຫົວໃຈຂອງມະນຸດໄດ້, ເຮັດໃຫ້ພວກເຮົາເບິ່ງຄົນອື່ນຜິດ. ສິ່ງນັ້ນຈະນຳພວກເຮົາໃຫ້ຫ່າງເຫີນຈາກພຣະເຈົ້າໄປທຸກມື້. ສິ່ງດີທີ່ສຸດນັ້ນ ເວລາພວກເຮົາໄດ້ເຮັດຄວາມຜິດບາບຄືການຍອມສາລະພາບຄວາມຜິດ ແລະຂໍໃຫ້ພຣະອົງອະພັຍໃຫ້. ຖ້າເຮັດແນວນັ້ນພວກເຮົາຈະມີຄວາມຫວັງແລະຄືນດີກັບພຣະເຈົ້າໄດ້.

## ຄຳຖາມ:

12. ເປັນຫຍັງຜູ້ຊາຍແລະຜູ້ຍິງຈຶ່ງພາກັນໄປລີ້ຕົວຈາກພຣະເຈົ້າໃນສວນ? ໃນທຸກວັນນີ້ພວກເຮົາໄດ້ລີ້ຕົວຈາກພຣະເຈົ້າແນວໃດ?
13. ເມື່ອພຣະເຈົ້າໄດ້ມາພົບທັງສອງຄົນ ພຣະອົງບໍ່ໄດ້ຫາເຣື່ອງແລະລົງໂທດແນວໃດໃສ່ເຂົາເຈົ້າ ພຣະອົງໄດ້ສົນທະນາກັບເຂົາເຈົ້າຊຶ່ງບອກເຖິງພຣະກະຣຸນາ ແລະຄວາມຊອບທັມຂອງພຣະອົງແນວໃດ?
14. ໃຫ້ອະທິບາຍຄຳກ່ຽວຂ້ອງກັນລະຫວ່າງ ຄວາມບາບ, ຮູ້ສຶກຜິດ, ຄວາມຢ້ານ, ລະອາຍ, ຖິ້ມໂທດໃສ່ຄົນອື່ນ, ແລະການຕາຍ.
15. ຄວາມບາບໄດ້ທຳລາຍຄວາມສັມພັນຂອງພວກເຮົາກັບພຣະເຈົ້າຢ່າງໃດ ແລະຄົນອື່ນແນວໃດ?
16. ໂທດກັມຂອງອາດາມ ແລະເອວາໄດ້ປາກົດໃນໂລກນີ້ຢ່າງໃດ? ໃນທາງໃດທ່ານໄດ້ປະສົບຜົນແຫ່ງຄວາມບາບຊຶ່ງສືບທອດມາຈາກອາດາມແລະເອວາ?
17. ຄຣິສຕຽນເຮົາທຸກວັນນີ້ໄດ້ຮຽນອັນໃດຈາກຄວາມຜິດຂອງອາດາມແລະເອວາ? ພວກເຮົາມີຄວາມຫວັງແລະຊີວິດໃນອົງພຣະເຢຊູຄຣິດ ພວກເຮົາຈະກ່າວຕໍ່ຄວາມບາບກັບຄວາມຕາຍໄດ້ຢ່າງໃດ?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ບົດຮຽນທີ 7
# ພຣະເຈົ້າຊົງໃຫ້ຄຳເຕືອນ ແລະຊົງພິພາກສາຄວາມບາບ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ປະຖົມມະການ 4: 1-16, 25-26

ພູມຫລັງຂອງພຣະຄັມພີ: ປະຖົມມະການ 4

ຈຸດສຳຄັນສຳລັບບົດຮຽນນີ້: ນິສັຍເຮັດບາບສາມາດນຳໄປສູ່ການກະທຳທີ່ຮ້າຍແຮງ

ຄຳຖາມເພື່ອຄົ້ນຄວ້າ: ແມ່ນຫຍັງຄືຜົນຂອງຄວາມຄຽດຮ້າຍແລະຄວາມອິດສາຂອງຂ້ອຍ?

ຈຸດປະສົງຂອງການສຶກສານີ້: ເພື່ອສຳຣວດເບິ່ງນິສັຍຂອງຂ້ອຍທີ່ມີຕໍ່ພຣະເຈົ້າແລະຕໍ່ຜູ້ອື່ນ.

ອ່ານລວບ: ຄວາມຄຽດຮ້າຍຂອງກາອິນພາລາວໃຫ້ຂ້ານ້ອງຊາຍອາເບັນ ແລະພາລາວຫ່າງໄກຈາກພຣະເຈົ້າ.

## ຄຳນຳ

ທ່ານເຄີຍຕອບຄົນທີ່ເວົ້າຫຍາບຊ້າກັບທ່ານດ້ວຍຄວາມຫຍາບຊ້າບໍ່? ຖ້າການເວົ້າຫຍາບກ້າວໄປເຖິງການໃຊ້ກຳລັງແລ້ວຈະເປັນຢ່າງໃດ? ທ່ານເຄີຍເຫັນຄົນຜິດຖຽງກັນໃນຫ້ອງຖນົນບໍ່? ຫລືເຫັນຄົນຖຽງກັນໃນເດີ່ນກິລາ ຫລືຖຽງກັບກັມມະການບໍ່? ການປ່ອຍຄວາມຮ້າຍ, ຄວາມຫງຸດຫງິດ, ຫລືຄວາມອິດສາອອກມາ ມັກຈະມີຜົນໃນທາງ ບໍ່ດີສຳລັບເຮົາ ແລະຄົນຢູ່ໃກ້ຄຽງ.

ຄົນສ່ວນຫລາຍຖືກທົດລອງ ເພາະເຂົາເຈົ້າຢາກໄດ້ຄວາມສຸກຫລືຄວາມພໍໃຈ. ແຕ່ຄວາມພໍໃຈພຽງລະຍະສັ້ນກັບກາຍເປັນຄວາມອັບອາຍໃນພາຍຫລັງ. ຄວາມສຸກທີ່ໄດ້ຈາກຄວາມຕ້ອງການທີ່ຜິດແມ່ນຂອງຊົ່ວຄາວ. ແຕ່ພວກເຮົາຈະພົບຄວາມສຸກທີ່ຖາວອນເວລາພວກເຮົາຍອມຟັງພຣະເຈົ້າແລະເຮັດຕາມນ້ຳພຣະທັຍຂອງພຣະອົງ.

### 1. ສອງອ້າຍນ້ອງທີ່ແຕກຕ່າງກັນ: (ປະຖົມມະການ 4: 1-4)

ຫລັງຈາກທີ່ພຣະເຈົ້າໄດ້ຂັບໄລ່ອາດາມແລະເອວາອອກຈາກສວນເອເດນ ຜົວເມັຽຄູ່ນີ້ກໍເລີ້ມໃຊ້ຊີວິດທີ່ແຕກຕ່າງກັບສມັຍກ່ອນ. ພວກເຂົາເຈົ້າຍັງນັບຖືພຣະເຈົ້າແຕ່ຄວາມສັມພັນໃກ້ຊິດໄດ້ປ່ຽນແປງໄປ ແຕ່ກ່ອນພຣະເຈົ້າໄດ້ຊົງປະທານສິ່ງທີ່ຕ້ອງການ; ຕອນນີ້ພວກເຂົາເຈົ້າຕ້ອງຊອກຫາກິນເອງ. ການລຳບາກຄືຜົນງານຂອງຄວາມຜິດບາບຂອງພວກເຂົາ.

ອາດາມແລະເອວາໄດ້ລູກຊາຍຄົນນຶ່ງຊື່ກາອິນແລະອີກຄົນນຶ່ງຊື່ອາເບັນ; ຫລັງຈາກລູກທັງສອງໄດ້ເຕີບໃຫຍ່ພວກເຂົາກໍຊ່ວຍພໍ່ທຳງານເພື່ອຫາລ້ຽງຄອບຄົວ;ອາເບັນເປັນຄົນລ້ຽງສັດ ສ່ວນກາອິນເປັນຄົນເຮັດສວນ ມາເຖິງຕອນນີ້ພຣະທັມປະຖົມມະການບໍ່ໄດ້ເວົ້າເຣື່ອງການຖວາຍໃຫ້ພຣະເຈົ້າ ແຕ່ປາກົດວ່າຄອບຄົວຂອງອາດາມໄດ້ ນຳເຄື່ອງຖວາຍໃຫ້ແກ່ພຣະເຈົ້າເປັນປະເພນີ; ອາດຈະແມ່ນວ່າພວກເຂົາເຈົ້າຖືວ່າພຣະເຈົ້າເປັນຜູ້

ຊົງຄຸ້ມຄອງທຸກໆຢ່າງໃນໂລກ. ພາຍຫລັງມາຫລາຍຮ້ອຍປີ ພຣະເຈົ້າໄດ້ຊົງໃຫ້ກົດລະບຽບເຣື່ອງການຖວາຍ ເຊັ່ນ "ພືນລະປູກພືນແຮກ" ທີ່ເກີດຈາກແຮງງານຂອງເຈົ້າ (ອພຍ 23: 16) ແລະ "ພືດພືນທີ່ດີເລີດ" ຈາກດິນຂອງເຈົ້າ" (ອພຍ 23: 19). ການຖວາຍຄືນໃຫ້ພຣະເຈົ້າພືນແຮກ ແລະພືນທີ່ດີເລີດຈາກທຸກຢ່າງຍັງເປັນຄວາມຈິງເພາະເປັນການຮັບຮູ້ການຊົງປະທານຂອງພຣະເຈົ້າ ແລະພຣະພອນ.

ປະຖົມມະການ 4: 3 ກ່າວວ່າ, "ກາອິນໄດ້ເອົາພືນລະປູກມາຖວາຍແດ່ພຣະເຈົ້າ." ພຣະຄຳບໍ່ໄດ້ບອກວ່າເປັນພືນລະປູກປະເພດໃດ; ກາອິນອາດຈະຫລິກພືດອອກຈາກສວນຂອງຕົນໂດຍບໍ່ເລືອກ ແລ້ວກໍນຳມາຖວາຍແກ່ພຣະເຈົ້າ. ແຕ່ອາເບັນໄດ້ເອົາສ່ວນທີ່ດີທີ່ສຸດຈາກແກະເຖິກທົວປີມາຖວາຍແກ່ພຣະເຈົ້າ (ປຖກ 4: 4). ພວກເຮົາສັງເກດໄດ້ວ່າເຄື່ອງຖວາຍຂອງອາເບັນນັ້ນແຕກຕ່າງກັບເຄື່ອງຖວາຍຂອງກາອິນແທ້. ພຣະທັມເຮັບເຣີ 11:4 ບອກໃຫ້ຮູ້ວ່າ ດ້ວຍຄວາມເຊື່ອອາເບັນໄດ້ຖວາຍແກ່ພຣະເຈົ້າຂອງຖວາຍທີ່ດີກວ່າຂອງກາອິນ. ອ້າຍນ້ອງສອງຄົນນີ້ມີຈິດໃຈແຕກຕ່າງກັນ. ພຣະຄຳບອກວ່າພຣະເຈົ້າ "ພໍໃຈໃນການຖວາຍຂອງອາເບັນ" (ປຖກ 4: 4).

## 2. <u>**ບັນຫາຫົວໃຈ**</u>: (ປະຖົມມະການ 4: 5-7)

ກາອິນມີນິສັຍຄືກັບພໍ່ຂອງລາວເພາະມັກຖິ້ມໂທດໃສ່ຄົນອື່ນ; ກາອິນໂທດພຣະເຈົ້າແລະນ້ອງຂອງຕົນສຳລັບຄວາມຜິດພາດ. ການປະພຶດຂອງລາວໃນຂັ້ນຕໍ່ໄປໄດ້ສະແດງໃຫ້ເຫັນເຖິງຈິດໃຈແລະການກະທຳທີ່ບໍ່ຖືກຕ້ອງ.

ກາອິນເກີດມີຄວາມອິດສາ ແລະຄວາມຄຽດແຄ້ນຕໍ່ນ້ອງຊາຍ; ພຣະເຈົ້າຊົງຖາມກາອິນວ່າເປັນຫຍັງລາວຈຶ່ງຄຽດແຄ້ນແລະໜ້າບູດ; ຄຳຖາມນີ້ເປັນຄຳເຕືອນໃຫ້ກາອິນຄິດພິຈາຣະນາວ່າເປັນຫຍັງລາວຈຶ່ງເປັນຢ່າງນັ້ນ; ແຕ່ກາອິນຂາດສະຕິປັນຍາໃນເຣື່ອງນີ້; ເນື່ອງຈາກລາວເປັນຄົນມັກອິດສາ, ຄົນມັກຍິ່ງຍະໂສ, ຄົນໜ້າຊື່ໃຈຄົດ ສິ່ງທີ່ເກີດຂຶ້ນໄດ້ເຮັດໃຫ້ລາວຄຽດແຄ້ນຫລາຍຂຶ້ນ.

ພຣະເຈົ້າໄດ້ຊົງສອນຄວາມຈິງສອງຢ່າງໃນຄຳສົນທະນາຂອງພຣະອົງແລະກາອິນ. ນຶ່ງ, ຄວາມຜິດບາບກຳລັງຈະເອົາຊະນະພວກເຮົາ; ການທົດລອງສາມາດເກີດຂຶ້ນກັບທຸກຄົນ. ສອງ, ພຣະເຈົ້າໃຫ້ຣິດອຳນາດເພື່ອເອົາຊະນະຄວາມຜິດບາບ ແນ່ນອນການທົດລອງສາມາດເກີດຂຶ້ນກັບທຸກໆຄົນ ແຕ່ພວກເຮົາບໍ່ຈຳເປັນຕ້ອງຍອມແພ້; ພຣະເຈົ້າຊົງພ້ອມທີ່ຈະຊ່ວຍພວກເຮົາທຸກຄົນທີ່ເຊື່ອ; ໃນ 1 ໂກຣິນໂທ 10: 13, ໂປໂລຂຽນວ່າ, "ບໍ່ມີການທົດລອງອັນ ໃດເກີດຂຶ້ນກັບເຈົ້າທັງຫລາຍ ນອກຈາກການທົດລອງທີ່ເຄີຍເກີດກັບມະນຸດທົ່ວໄປ ພຣະເຈົ້າຊົງທ່ຽງທັມ ພຣະອົງຈະບໍ່ຊົງຍອມໃຫ້ພວກເຈົ້າຖືກທົດລອງເກີນກວ່າທີ່ເຈົ້າຈະທົນໄດ້ ແລະເມື່ອຊົງທົດລອງເຈົ້ານັ້ນ ພຣະອົງຈະຊົງ ໂຜດໃຫ້ເຈົ້າມີທາງຫລີກໜີໄປໄດ້ດ້ວຍ ເພື່ອເຈົ້າທັງຫລາຍຈະສາມາດທົນໄດ້."ພຣະເຈົ້າຊົງພຍາຍາມຊ່ວຍກາອິນໃຫ້ເອົາຊະນະການທົດລອງໂດຍຄຳຖາມເພື່ອໃຫ້ຄິດພິຈາຣະນາສະພາບການ ແລະພິຈາຣະນາຈິດໃຈຂອງຕົວເອງ; ແທນທີ່ຈະເລືອກທາງພຣະເຈົ້າ, ກາອິນປະຕິເສດ ແລະເຮັດບາບຕໍ່ໄປ.

## 3. **ຄວາມບາບແລະໂທດກັມ**: (ປະຖົມມະການ 4: 8-12)

ພຣະຄຳບໍ່ໄດ້ບອກວ່າການຂ້າກັນເທື່ອນີ້ມີການວາງແຜນໄວ້ລ່ວງໜ້າ ແຕ່ພໍສັງເກດໄດ້ວ່າກາອິນມີເຈຕນາ ເພາະໄດ້ຊວນນ້ອງອອກໄປທົ່ງນາທີ່ອາດຈະຫ່າງຈາກສາຍຕາຂອງຄົນອື່ນ. ເຖິງປານນັ້ນພຣະເຈົ້າຍັງຊົງໃຫ້ໂອກາດກາອິນເພື່ອສາຣະພາບແລະກັບໃຈ; ພຣະເຈົ້າຊົງຖາມກາອິນວ່າອາເບັນຢູ່ໃສ ແຕ່ກາອິນກໍຕົວະພຣະເຈົ້າເໝືອນຢ່າງທີ່ພໍ່ຂອງລາວ ອາດາມເຄີຍຕົວະມາກ່ອນ.

ພຣະເຈົ້າໄດ້ຊົງສ້າງດິນແຫ້ງໄວ້ເພື່ອມະນຸດ (ປຖກ 1:9-10) ແລ້ວພຣະອົງໄດ້ຊົງສ້າງມະນຸດຈາກດິນ(ປຖກ 2:7). ຫລັງຈາກທີ່ຖືກຂັບໄລ່ອອກຈາກສວນເອເດນ, ອາດາມກໍທຳມາຫາກິນຕາມໜ້າດິນ (ປຖກ 3:17-19) ໃນຂະນະທີ່ອາເບັນທຳໜ້າທີ່ລ້ຽງແກະລາວໄດ້ເຮັດຕາມພຣະປະສົງຂອງພຣະເຈົ້າທີ່ໄດ້ຊົງສັ່ງໃຫ້ມະນຸດຄຸ້ມຄອງຝູງສັດ, ກາອິນໄດ້ທຳໜ້າທີ່ເປັນພໍ່ນາຂຸດກົ່ນຂີ້ດິນເໝືອນພໍ່ຂອງຕົນ (ປຖກ 4: 2). ທົ່ງນາຂອງກາອິນໄດ້ກາຍເປັນບ່ອນທີ່ລາວຂ້ານ້ອງຊາຍ (ປຖກ 4:8), ແລະດິນທີ່ໄດ້ຮັບອາເບັນກັບໄປກໍກາຍເປັນຜູ້ຟ້ອງຮ້ອງກາອິນ.

ແຜ່ນດິນເປັນພື້ນຖານສຳລັບການລົງໂທດ ອາດາມຕ້ອງທຳງານໜັກໃນແຜ່ນດິນເພື່ອຫາລ້ຽງທ້ອງ; ແຕ່ໂທດຂອງກາອິນຈະໜັກຫລາຍກວ່ານັ້ນ; ດິນທີ່ກາອິນເຄີຍປູກຝັງແລະເກັບກ່ຽວເປັນປະຈຳ ຈະກາຍເປັນດິນທີ່ບໍ່ເກີດຜົນ. ເວລາພຣະເຈົ້າລົງໂທດກາອິນ ພຣະອົງບໍ່ໄດ້ຊົງກ່າວວ່າໂທດນັ້ນແມ່ນໂທດຂອງການຂ້າຄົນ ເພາະຕອນນັ້ນພຣະເຈົ້າຍັງບໍ່ໄດ້ໃຫ້ບັນຍັດໃນເຣື່ອງນີ້ (ໂຣມ 4: 15; 5: 13:
"ເມື່ອບໍ່ມີພຣະບັນຍັດກໍບໍ່ຖືວ່າມີຜິດ"). ພຣະເຈົ້າໄດ້ຊົງໃຫ້ພຣະບັນຍັດເຣື່ອງການຂ້າຄົນຫລັງຈາກນ້ຳຖ້ວມ (ປຖກ 9: 5-6) ແລະໂມເຊໄດ້ນຳມາປະກອບໃຫ້ບໍຣິບູນໃນພາຍຫລັງ (ພບຍ 17: 11-12). ພຣະເຈົ້າຜູ້ດຽວຊົງມີສິດເຣື່ອງການໃຫ້ຊີວິດ ແລະເອົາຊີວິດ. ການຂ້ານ້ອງຊາຍຂອງກາອິນເປັນການຍົກຕົນເອງໄປເຮັດໜ້າທີ່ຂອງພຣະເຈົ້າ ແລະເປັນການລະເມີດສິດຂອງມະນຸດທີ່ຖືກສ້າງຂຶ້ນມາຕາມພຣະລັກສະນະຂອງພຣະເຈົ້າ.

## 4. **ຄວາມສັມພັນເຄັ່ງຕຶງ**: (ປະຖົມມະການ 4: 13-16)

ກາອິນຖືກພຣະເຈົ້າພິພາກສາ. ເພາະຄວາມໂມໂຫ ແລະຄວາມຍິ່ງຍະໂສ ກາອິນບໍ່ສາມາດເຂົ້າໃຈຄວາມສັມພັນລະຫວ່າງການກະທຳຂອງລາວແລະການລົງໂທດຂອງພຣະເຈົ້າ. ກາອິນບໍ່ຮູ້ສຶກວ່າຕົວເອງໄດ້ເຮັດຄວາມຜິດ.

ພຣະເຈົ້າຊົງສັ່ງກາອິນໃຫ້ອອກຈາກທົ່ງນາທີ່ເຄີຍທຳມາຫາກິນ ແລະໃຫ້ເປັນຄົນພະເນຈອນໄປເທິງແຜ່ນດິນໂລກ. ແຕ່ພຣະເຈົ້າບໍ່ໄດ້ຕັດຄວາມສັມພັນກັບກາອິນ; ກາອິນໄດ້ເວົ້າເອງວ່າຈະຢູ່ຫ່າງໄກຈາກພຣະເຈົ້າ (4: 14). ພຣະອົງຊົງມີພຣະທັຍທີ່ຈະຮັກສາຊີວິດຂອງລາວໄວ້; ພຣະເຈົ້າພ້ອມທີ່ຈະປົກປັກຮັກສາກາອິນ ແລະຄົນທີ່ຂ້າກາອິນຈະໄດ້ຮັບໂທດເຈັດເທົ່າ (4:15). ພຣະເຈົ້າຊົງ "ໄດ້ເຮັດເຄື່ອງໝາຍໄວ້ໃນຕົວກາອິນ ເພື່ອວ່າຜູ້ໃດຜູ້ນຶ່ງທີ່ພົບລາວຈະບໍ່ໄດ້ຂ້າລາວ"(4:15). ແຕ່ນັ້ນຕໍ່ໄປກາອິນແລະຄອບຄົວກໍອອກຫ່າງໄກໄປຈາກພຣະເຈົ້າທຸກໆວັນ.

## 5. **ຄອບຄົວແບ່ງແຍກ**: (ປະຖົມມະການ 4: 25-26)

ປະຖົມມະການ 4:17-24 ໄດ້ໃຫ້ສັນຍານວ່າຈະມີການແຕກແຍກທີ່ອິສຣາເອັນໃນອະນາຄົດ. ຜູ້ຂຽນໄດ້ຕິດຕາມເຊື້ອສາຍຂອງກາອິນທີ່ໄດ້ມຸ່ງໜ້າອອກໄກຈາກພຣະເຈົ້າ; ເໝືອນດັ່ງອານາຈັກພາກເໜືອຂອງອິສຣາເອັນຊຶ່ງໄດ້ຈະເຣີນດ້ານເສຖກິດ ແຕ່ພວກເຂົາເຈົ້າໄດ້ຫ່າງໄກຈາກພຣະເຈົ້າແລະໄປເນັ້ນເຣື່ອງການຄ້າແລະອຸດສາຫະກັມ. ໃນຕະກຸນຂອງກາອິນ, ພວກເຂົາເຈົ້າໄດ້ກ້າວໜ້າໃນການສ້າງເມືອງ (ກາອິນ; 4: 17), ການດົນຕຣີ (ຢູບານ; 4: 21, ແລະການສ້າງເຄື່ອງມື (ຕູບາກາອິນ; 4: 22) ຈົນໄດ້ມີດິນແດນຖາວອນຂອງຕົວເອງ (ປຖກ 6:4, "ພວກເຂົາເປັນຄົນເກ່ງກ້າສາມາດຫລາຍ ແລະເປັນຄົນທີ່ມີຊື່ສຽງດີໃນສມັຍບູຮານ ແຕ່ພວກເຮົາໄດ້ເຫັນການມີເມັຽຫລາຍຄົນ ແລະການຂ້າຕີກັນ ສັງຄົມເລີ້ມຫລົ້ມຈົມເວລາຄົນອອກຫ່າງໄກພຣະເຈົ້າ ແລະກ້າວສູ່ຄວາມຊົ່ວຊ້າ.

ແຕ່ກົງກັນຂ້າມ, ພຣະເຈົ້າໄດ້ຊົງປະທານບຸດຊາຍຊື່ເຊດໃຫ້ເອວາເພື່ອແທນອາເບັນທີ່ກາອິນໄດ້ຂ້າ (4: 25). ເອວາເຊື່ອວ່າພຣະເຈົ້າຊົງໂປດປານລາວທີ່ໃຫ້ໄດ້ລູກ; ນັບວ່ານາງໄດ້ມີການປ່ຽນແປງຫລາຍຈາກສມັຍຂອງກາອິນ; ນາງໄດ້ກັບໃຈແລະຫັນເຂົ້າໃກ້ພຣະເຈົ້າ. ຫລັງຈາກການເກີດຂອງເຊດ, ຜູ້ຂຽນໄດ້ເວົ້າວ່າ "ມະນຸດກໍເລີ້ມຕົ້ນຮ້ອງທູນໂດຍອອກພຣະນາມຊື່ບໍຣິສຸດຂອງອົງພຣະຜູ້ເປັນເຈົ້າ" (4: 26). ເຊື້ອສາຍຂອງຊາຍສອງຄົນ, ກາອິນ ແລະເຊດ, ໄດ້ເລືອກເດີນທາງຕ່າງເສັ້ນ; ຄົນທີ່ເຊື່ອຖືພຣະເຈົ້າຈະຢູ່ໃນເຊື້ອສາຍຂອງເຊດ, ແຕ່ຄົນທີ່ຢູ່ໃນເຊື້ອສາຍຂອງກາອິນຈະເພີ້ມເຮັດຄວາມຊົ່ວຊ້າຫລາຍຂຶ້ນ.

## **ຄວາມໝາຍແລະການປະຕິບັດ**

ຄວາມອິດສາແລະຄວາມຄຽດຮ້າຍເຮັດໃຫ້ກາອິນບໍ່ເຂົ້າໃຈສະພາບການ. ຄວາມບາບເຮັດໃຫ້ຈິດໃຈແຂງກະດ້າງ, ເນັ້ນຄວາມເຫັນແກ່ຕົວ ແທນທີ່ຈະສແວງຫາສິ່ງທີ່ຖືກ, ສິ່ງທີ່ດີ, ແລະຄວາມຈິງ ບໍ່ມີແຕ່ກາອິນຜູ້ດຽວທີ່ມັກສະແດງອາຣົມ; ຄຣິສຕຽນຫລາຍຄົນກໍມັກບົ່ມຄວາມຄຽດ ຫລືຄວາມອິດສາໄວ້ໃນຊີວິດ; ຫລາຍຄົນຍັງມີຄວາມຂົມຂື່ນ ຫລືຄິດເຣື່ອງການແກ້ແຄ້ນ. ນິສັຍເຮັດບາບເຮັດໃຫ້ຄົນໃຈແຂງ ສິ່ງນີ້ຕໍ່ສູ້ກັບການນຳພາຂອງພຣະວິນຍານ. ແທນທີ່ຈະສົນໃຈເຣື່ອງການຊ່ວຍເຫລືອຄົນອື່ນໆ ຫລືເຣື່ອງແບກພາຣະຊ່ວຍພີ່ນ້ອງ, ຄົນປະເພດນີ້ມັກປ່ອຍໃຫ້ຄວາມໂມໂຫແລະຄວາມອິດສາຄຸ້ມຄອງຈິດໃຈ. ການບົ່ມຄວາມບາບເປັນເຣື່ອງທີ່ພຣະເຈົ້າບໍ່ຊົງພໍພຣະທັຍ ທັງຈະເຮັດໃຫ້ຕົວເຮົາເອງເຈັບຊ້ຳ ແລະຂົມຂື່ນ. ການຍອມເຊື່ອຟັງພຣະເຈົ້າ ແລະການປ່ອຍຄວາມຮ້າຍອອກໄປຈະນຳສັນ ຕິສຸກມາສູ່ຊີວິດ ແລະນຳໄປສູ່ການຄືນດີກັບພຣະເຈົ້າແລະຄົນອື່ນໆ.

## **ຄຳຖາມ**:

1. ແມ່ນຫຍັງເປັນຕົ້ນເຫດເຮັດໃຫ້ກາອິນຄຽດແຄ້ນໃຫ້ອາເບັນ? ເປັນຫຍັງຄວາມໂມໂຫແລະຄວາມອິດສາຈຶ່ງເຮັດໃຫ້ກາອິນຕັດສິນໃຈເຊັ່ນນັ້ນ?

2. ພຣະບັນຍັດ 28: 16-18 ໃຫ້ລາຍລະອຽດເຣື່ອງການສາບແຊ່ງທີ່ພຣະເຈົ້າໄດ້ຊົງເຕືອນອິສຣາເອັນຖ້າພວກເຂົາເຈົ້າບໍ່ເຊື່ອຟັງພຣະບັນຍັດ. ການສາບແຊ່ງບອກເຮົາແນວໃດກັບການລົງໂທດທີ່ກາອິນໄດ້ຮັບເພາະການຂ້ານ້ອງຊາຍຂອງຕົນ?

3. ຄວາມຄຽດຮ້າຍ, ຄວາມອິດສາ, ແລະຄວາມຍິ່ງຍະໂສ ຈະກະທົບຕໍ່ທັສນະຂອງພວກເຮົາກັບພຣະເຈົ້າແລະຄົນອື່ນໆວິທີໃດ?

4. ກາອິນອາດຈະບໍ່ໄດ້ຖືກສັ່ງສອນວ່າບໍ່ໃຫ້ຂ້າຄົນເໝືອນກັບຄຣິສຕຽນໃນສມັຍນີ້. ພຣະເຢຊູຊີ້ແປຄວາມໝາຍພຣະບັດຍັດເຣື່ອງບໍ່ໃຫ້ຂ້າຄົນໃນທາງນອງໃດ ໃນມັດທາຍ 5: 21-24?

5. ພວກເຮົາຈະເອົາຊະນະຄວາມໂມໂຫທີ່ລໍຢູ່ຕໍ່ໜ້າພວກເຮົາແຕ່ລະມື້ໄດ້ວິທີໃດ?

6. ອະທິບາຍປະສົບການເຣື່ອງພຣະຄຸນແລະການອະພັຍຂອງພຣະເຈົ້າ ເວລາທ່ານສາລະບາບຄວາມຜິດບາບຕໍ່ພຣະອົງ.

*ສຄ*

# ບົດຮຽນທີ 8
# ພຣະເຈົ້າຊົງເດີນກັບຄົນຊອບທັມໃນໂລກທີ່ຊົ່ວຊ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ປະຖົມມະການ 6

ພູມຫລັງຂອງພຣະຄັມພີ: ປະຖົມມະການ 6

ຈຸດສຳຄັນສຳລັບບົດຮຽນນີ້: ໃນຂະນະທີ່ມະນຸດເຮັດຄວາມຊົ່ວຊ້າຫລາຍຂຶ້ນ, ພຣະເຈົ້າຊົງເດີນກັບຄົນຊອບທັມແລະປາສຈາກຄວາມຜິດ.

ຄຳຖາມເພື່ອຄົ້ນຄວ້າ: ພວກເຮົາຈະດຳລົງຊີວິດທີ່ຊອບທັມແລະປາສຈາກຄວາມຜິດໃນຂະນະທີ່ພວກເຮົາຢູ່ໃນໂລກທີ່ເປື່ອຍເນົ່ານີ້ໄດ້ຢ່າງໃດ?

ຈຸດປະສົງຂອງການສຶກສານີ້: ດຳລົງຊີວິດທີ່ຊອບທັມແລະປາສຈາກຄວາມຜິດໃນໂລກທີ່ເປື່ອຍເນົ່າໂດຍການດຳເນີນຊີວິດໃນພຣະເຈົ້າ.

ອ່ານລວບ: ເພື່ອໂຕ້ຕອບຄວາມຊົ່ວຊ້າທີ່ໄດ້ເພີ່ມທະວີຂຶ້ນ, ພຣະເຈົ້າຊົງໄດ້ລົງໂທດມະນຸດດ້ວຍນ້ຳຖ້ວມໂລກຢ່າງພິນາດ, ແຕ່ພຣະອົງໄດ້ຊົງຮັກສາຜູ້ຊອບທັມຄົນນຶ່ງແລະຄອບຄົວຂອງລາວໄວ້.

## ຄຳນຳ

ກ່ອນການສົ່ງຂໍ້ຄວາມດ້ວຍໂທຣະສັບມືຖືຫລາຍໆປີ ບໍຣິສັດໂທຣະເລກແຫ່ງນຶ່ງໄດ້ປະກາດຫາພນັກງານທີ່ມີຄວາມຊ່ຽວຊານເຣື່ອງສົ່ງໂທຣະເລກ. ທາງບໍຣິສັດກຳຈັດຕຽມການສັມພາດຄົນທີ່ມາສມັກງານໃນວັນຈັນຕອນເຊົ້າທີ່ຫ້ອງການ. ເວລາທ້າວເຈມມາເຖິງທີ່ນັ້ນກໍມີຜູ້ສມັກຫລາຍຄົນລໍຖ້າກ່ອນແລ້ວ. ປາກົດວ່າໃນມື້ນັ້ນຫ້ອງການມີສຽງສັບສົນ: ສຽງເຄື່ອງຈັກໃນຫ້ອງການ, ສຽງເຈັ້ງ, ແລະສຽງຄົນສົນທະນາກັນ.

ຜູ້ສມັກສອງຄົນໄດ້ຖາມກັນວ່າເປັນຫຍັງພວກຕົນຕ້ອງໄດ້ຖ້າລໍດົນແທ້. ທ້າວເຈມຈຶ່ງນັ່ງລໍຖ້າທີ່ຕັ່ງສຸດທ້າຍ; ຫລັງຈາກນັ້ນບໍ່ດົນເຈມກໍລຸກໄປຖາມຫົວໜ້າຫ້ອງການ. ສອງນາທີຕໍ່ມາ, ຫົວໜ້າຫ້ອງການໄດ້ປະກາດວ່າທ້າວເຈມໄດ້ຖືກຈ້າງສຳລັບຕຳແໜ່ງທີ່ວ່າງແລ້ວ. ຕໍ່ມາຫົວໜ້າໄດ້ອະທິບາຍວ່າຂະນະທີ່ທຸກຄົນນັ່ງລໍຖ້າການສັມພາດ ລາວໄດ້ສົ່ງໂທຣະເລກອອກມາເປັນລະຍະວ່າ "ຜູ້ໃດທີ່ເຂົ້າໃຈຄວາມໝາຍໃນໂທຣະເລກນີ້ໃຫ້ເຂົ້າມາຂ້າງໃນ, ຕຳແໜ່ງນີ້ຈະເປັນຂອງທ່ານ." ເຈມເປັນຜູ້ດຽວທີ່ໄດ້ຍິນແລະເຂົ້າໃຈຂໍ້ຄວາມແລະເຮັດຕາມ.

ໃນໂລກປັດຈຸບັນນີ້ມີແຕ່ສຽງອຶກກະທຶກສັບສົນ. ທຸກໆວັນມີແຕ່ສິ່ງສັບສົນເຣື່ອງຂ່າວດີຂ່າວຮ້າຍ, ໂຄສະນາປະກາດເຕືອນເຣື່ອງຕ່າງໆ, ໂທຣະສັບດັງ, ການຄ້າຂາຍຕ່າງໆເຮັດໃຫ້ວຸ້ນວ່າຍ ແຕ່ຫລາຍຄົນກໍຖືວ່າເປັນທັມະດາ. ພຣະເຈົ້າຊົງເອີ້ນມະນຸດທຸກໆວັນແຕ່ຫລາຍຄົນບໍ່ໄດ້ຍິນສຽງຂອງພຣະອົງ ເພາະສຽງນັ້ນຄ່ອຍກວ່າ

ສຽງອື່ນໆ. ເວລາພວກເຮົາເບິ່ງເລື່ອງຂອງໂນອາ, ພວກເຮົາໄດ້ເຫັນວ່າລາວໄດ້ຍິນສຽງຂອງພຣະເຈົ້າຖ້າມກາງຄວາມສັບສົນຂອງໂລກນີ້; ພວກເຮົາຮຽນຮູ້ວ່າພຣະເຈົ້າຊົງເຮັດຫຍັງເວລາໂນອາໄດ້ປະຕິບັດຕາມສຽງທີ່ລາວໄດ້ຍິນ.

## 1. <u>ຄວາມຊົ່ວຊ້າໄດ້ເພີ້ມທະວີຂຶ້ນຢູ່ໃນໂລກ</u>: (ປະຖົມມະການ 6: 1-7)

ປະຖົມມະການ 6: 1-4 ເປັນພຣະຄຳທີ່ສ້າງຄວາມສັບສົນໃຫ້ນັກປາດທັງຫລາຍ. ໃຜຄື "ລູກຊາຍທັງຫລາຍຂອງພຣະເຈົ້າ" ແລະລູກຂອງພວກເຂົາ "ຄົນຮູບຮ່າງໃຫຍ່?" ຄຳຕອບກໍຄື: ບໍ່ມີໃຜຮູ້ແນ່ນອນ; ຄົນໃນສມັຍນັ້ນອາດຈະເຂົ້າໃຈພຣະຄຳຕອນນີ້ດີ. ແຕ່ສຳລັບພວກເຮົາສິ່ງທີ່ຄວນຮຽນຮູ້ກໍຄື ຄວາມຊົ່ວຊ້າໄດ້ເພີ້ມທະວີ (6: 5); ເມື່ອພຣະຜູ້ເປັນເຈົ້າເຫັນວ່າມະນຸດຊົ່ວຮ້າຍຫລາຍຂຶ້ນແລະຄວາມຄິດຊົ່ວກໍບັງຄັບຈິດໃຈພວກເຂົາຢູ່ທຸກເວລາ. ພຣະອົງຊົງເສັຍໃຈຫລາຍທີ່ໄດ້ສ້າງພວກເຂົາໃຫ້ຢູ່ເທິງແຜ່ນດິນໂລກ (6: 6).

ພຣະຄຳຫລາຍບ່ອນໄດ້ບອກເຖິງຄວາມຮູ້ສຶກຂອງຜູ້ທີ່ມີຄວາມຮັກແທ້ (ປຖກ 34: 7; 2 ຊມອ 19: 3; ອຊຢ 63 :10). "ມະນຸດໄດ້ກະບົດຕໍ່ພຣະອົງແລະເຮັດໃຫ້ພຣະອົງເສົ້າໝອງ ສະນັ້ນພຣະຜູ້ເປັນເຈົ້າຈຶ່ງກາຍເປັນສັດຕູຂອງພວກເຂົາແລະຕໍ່ສູ້ພວກເຂົາ" (ອຊຢ 63: 10). ແທ້ຈິງແລ້ວ ພຣະເຈົ້າຊົງມີຄວາມສັມພັນກັບມະນຸດ ແລະການກະທຳຂອງພວກເຂົາບໍ່ວ່າດີຫລືຊົ່ວຍ່ອມເຮັດໃຫ້ພຣະອົງຊົງມີຄວາມຮູ້ສຶກ.

## 2. <u>ຄວາມເຊື່ອເດັດດ່ຽວຂອງຊາຍຜູ້ນຶ່ງ</u>: (ປະຖົມມະການ 6: 8-12)

ໂນອາ ເປັນບຸກຄົນນຶ່ງທີ່ຊອບທັມແລະປາສຈາກຄວາມຊົ່ວຊ້າແລະເດີນຕາມທາງຂອງພຣະເຈົ້າ ເປັນຜູ້ນຶ່ງທີ່ຈະເປັນຕົວແທນໃໝ່ຂອງອາດາມ. ເຖິງແມ່ນວ່າຄົນໃນໂລກນີ້ກະທຳການຊົ່ວຊ້າສໍ້ໂກງແລະກໍ່ການວຸ້ນວາຍພຣະເຈົ້າເຫັນມະນຸດຄົນນຶ່ງໄດ້ຢືນຢັດເພາະວ່າລາວໃຊ້ຊີວິດທີ່ເດັດດ່ຽວ. ພຣະຜູ້ເປັນເຈົ້າຊົງພໍໃຈນຳໂນອາທີ່ເປັນຄົນດີ ແລະເພິ່ນຜູ້ດຽວເທົ່ານັ້ນທີ່ພຣະເຈົ້າພໍໃຈນຳເພາະເພິ່ນໄດ້ດຳເນີນຊີວິດໃນຄວາມສາມັກຄີທັມກັບພຣະເຈົ້າ.

ເວລາມີຄົນຖາມພຣະເຢຊູວ່າແມ່ນຫຍັງຄືບັນຍັດໃຫຍ່ທີ່ສຸດ; ພຣະອົງຕອບວ່າທຸກຢ່າງໃນບັນຍັດແລະຜູ້ປະກາດພຣະທັມແມ່ນຂຶ້ນຢູ່ທີ່ຄວາມຮັກພຣະເຈົ້າແລະຮັກເພື່ອນບ້ານ (ມທ 22: 36-40). ຊີວິດໂນອາ ອາດຈະມີຜົນມາຈາກການດຳເນີນຊີວິດຕາມບັນຍັດສອງຂໍ້ນີ້. ການບໍ່ມີບ່ອນຕິສະແດງໃຫ້ເຫັນວ່າໂນອາເປັນຜູ້ທີ່ຮັກເພື່ອນບ້ານ ແລະບໍ່ມີຜູ້ໃດເຄີຍໄດ້ກ່າວຫາລາວ. "ຊອບທັມ" ບອກໃຫ້ຮູ້ວ່າໄດ້ຢືນຢູ່ກັບພຣະເຈົ້າ; "ບໍ່ມີບ່ອນຕິ" ສະແດງໃຫ້ເຫັນວ່າໂນອາມີຄວາມສັມພັນດີກັບສັງຄົມມະນຸດ.

ໃນຄຳສຸດທ້າຍທີ່ວ່າ "ໂນອາໄດ້ເດີນກັບພຣະເຈົ້າ" ເປັນເລື່ອງສຳຄັນເພາະມັນກົງກັນຂ້າມກັບມວນມະນຸດຊາດໃນຄາວນັ້ນ. ເພາະໂນອາ ໄດ້ເດີນກັບພຣະເຈົ້າທຸກວັນ, ໂນອາສາມາດໄດ້ຍິນສຽງຂອງພຣະເຈົ້າແລະມີຄວາມຮອບຮູ້ເໜືອກວ່າສຽງສັບສົນເປື່ອຍເປົ່າອ້ອມຮອບລາວ. ໃນຂະນະທີ່ມະນຸດຊາດທົ່ວໄປພາກັນຈ້ອງຫາສິ່ງທີ່ພໍໃຈເຂົາ, ໂນອາ ຕັ້ງໃຈຕິດຕາມພຣະເຈົ້າຊຶ່ງເປັນແຫລ່ງຂອງຄວາມພໍໃຈທີ່ແທ້ຈິງ.

ໃນພຣະຄັມພີເດີມມີ ເອໂນກຜູ້ດຽວທີ່ຖືກຮັບຮູ້ວ່າ "ໄດ້ຕິດຕາມພຣະເຈົ້າ" (ປຖກ 5: 21-22), ແລະລາວບໍ່ໄດ້ເຫັນຄວາມຕາຍເພາະພຣະເຈົ້າໄດ້ຊົງຮັບເອົາລາວໄປ. ໂນອາເປັນຄົນຊອບທັມແລະເຊື່ອຟັງພຣະເຈົ້າ ຢູ່ໃກ້ຊິດແລະເດີນກັບພຣະເຈົ້າ, ຖ້າຫາກລາວບໍ່ໄດ້ເຮັດຕາມຄວາມເຊື່ອແລະສ້າງເຮືອໃຫຍ່ ຈະມີແນວໃດທີ່ແຕກຕ່າງເກີດຂຶ້ນ.

## 3. <u>ແຜນການທີ່ເຕັມດ້ວຍພຣະຄຸນຂອງພຣະເຈົ້າ</u>: (ປະຖົມມະການ 6: 13-22)

ພຣະເຈົ້າບອກ ໂນອາ ວ່າ "ເຮົາໄດ້ຕັດສິນໃຈທີ່ຈະດັບສູນມະນຸດຊາດທັງໝົດ ແລ້ວເຮົາຈະທຳລາຍພວກເຂົາຢ່າງໝົດສິ້ນ ເພາະໂລກນີ້ເຕັມໄປດ້ວຍການກະທຳທີ່ຊົ່ວຊ້າຂອງພວກເຂົາ" (6: 13). ພຣະເຈົ້າໃຫ້ແຜນການກັບໂນອາໜ້ອຍນຶ່ງກ່ຽວກັບການສ້າງເຮືອໃຫຍ່. ພຣະອົງຊົງໃຫ້ລວງຍາວ, ລວງກວ້າງ, ແລະລວງສູງ; "ຈົ່ງສ້າງເປັນຫລາຍຫ້ອງ ແລະເອົາຂີ້ຊີອັດຢາທາງໃນກັບທາງນອກໃຫ້ດີ" (6: 14). "ຈົ່ງເຮັດປ່ອງຢ້ຽມ...... ສ່ວນທາງໃນເຮືອນັ້ນເຮັດເປັນສາມຊັ້ນ ແລະປະຕູໄວ້ຂ້າງນຶ່ງ" (6: 16).

ເຮືອໃຫຍ່ລຳນີ້ໃຫຍ່ກວ່າຫໍເຕັນ ທີ່ພຣະເຈົ້າໄດ້ຊົງສັ່ງໂມເຊໃຫ້ສ້າງສາມເທົ່າ; ເຮືອໃຫຍ່ແລະຫໍເຕັນເປັນບ່ອນທີ່ພຣະເຈົ້າຊົງຈັດຕຽມໄວ້ເພື່ອຮັກສາຊີວິດຜ່ານການປະທານສິ່ງຂອງແລະຈິດວິນຍານ. ໂນອາໄດ້ຮຽນຮູ້ວ່າລາວຈະຕ້ອງຮັບຜິດຊອບໃນການຊ່ວຍກູ້ຄົນໃນຄອບຄົວແລະສັດທຸກຊະນິດ. ການທີ່ຈະເຮັດໃຫ້ແຜນການຂອງພຣະເຈົ້າສຳເຣັດຈະຕ້ອງອາສັຍຄວາມເຊື່ອ.

ພຣະເຈົ້າບໍ່ໄດ້ປ່ອຍໃຫ້ ໂນອາທຳງານໂດຍລຳພັງ. ປະຖົມມະການ 6: 20-21 ອະທິບາຍວິທີທີ່ພຣະເຈົ້າຈະນຳສັດມາຫາໂນອາ; "ຈົ່ງເອົາສັດທຸກໆຊະນິດແຕ່ລະຄູ່ເພື່ອໃຫ້ສັດເຫລົ່ານີ້ມີຊີວິດຢູ່ ຢ່າລືມຕຽມອາຫານຫລາຍໆຊະນິດໄວ້ ສຳລັບຄອບຄົວຂອງເຈົ້າແລະສຳລັບສັດເຫລົ່ານັ້ນ." ຂໍ້ 18 ມີຄວາມໝາຍສຳຄັນສຳລັບເຣື່ອງໂນອາ ແລະເຣື່ອງຕ່າງໆໃນພຣະສັນຍາເດີມ; ພຣະເຈົ້າຊົງສັນຍາທີ່ "ຈະຕັ້ງພັນທະສັນຍາ" ກັບໂນອາ.

ໃນພັນທະສັນຍານີ້ພຣະເຈົ້າຊົງມີຂໍ້ຜູກມັດພຣະອົງເອງກັບໂນອາແລະເຊື້ອສາຍຂອງເຂົາໂດຍສັນຍາວ່າຈະຊົງປະທານແລະປົກປັກຮັກສາພວກເຂົາ; ແຕ່ມະນຸດໄດ້ມ້າງເພຄວາມສັມພັນນັ້ນ. ພຣະເຈົ້າຊົງສັນຍາວ່າຈະປົກປັກຮັກສາຜູ້ທີ່ຊອບທັມ ຜູ້ເດີນໄປກັບພຣະອົງ. ຄຳສັນຍານີ້ຈະຕົກທອດໄປເຖິງຊົ່ວລູກຫລານຜູ້ທີ່ເຮັດຕາມຕົວຢ່າງຂອງບັນພະບຸຣຸດຂອງເຂົາ; ຜູ້ທີ່ໄດ້ຍິນສຽງຂອງພຣະເຈົ້າ ແລະເຮັດຕາມດ້ວຍໃຈເຊື່ອຟັງຈະໄດ້ເຫັນສິ່ງທີ່ຊົງປະທານ ແລະໄດ້ຮັບການປົກປັກຮັກສາ.

## <u>ຄວາມໝາຍແລະການປະຕິບັດ</u>:

ພວກເຮົາຈະໄດ້ຫຍັງແດ່ຈາກການສຶກສາເຣື່ອງຂອງໂນອາຊຶ່ງເປັນເຣື່ອງທີ່ເຍົາວະຊົນຄຸ້ນເຄີຍດີ? ພວກເຮົາກຳລັງຢູ່ໃນໂລກທີ່ມີຄວາມບາບ, ການສໍ້ໂກງ, ແລະຄວາມຮ້າຍແຮງໄດ້ກາຍເປັນພາກສ່ວນຂອງຊີວິດປະຈຳວັນ. ຄວາມຮູ້ແລະຄວາມກ້າວໜ້ານັ້ນກຳລັງບອກຄົນວ່າເຂົາບໍ່ຕ້ອງການພຣະເຈົ້າ. ຫລາຍຄົນຄິດວ່າເຂົາ

ເປັນນາຍກ່ງວກັບຈິດວິນຍານຂອງຕົນແລະຂອງໂລກນີ້. ການໂຄສະນາ, ການສະແດງ, ການລິ້ນເລີງ, ແລະຂ່າວສັງຄົມທົ່ວໄປ ທາງທີວີ ແລະວິທະຍຸ ພາຄົນໃຫ້ຄິດວ່າພວກເຂົາ "ສົມຄວນໄດ້ຮັບ" ແລະຈະພາໃຫ້ໄປສູ່ຄວາມສຳເຣັດ. ປັດຈຸບັນນີ້ ຄວາມບໍ່ສງົບສຸກ, ສົງຄາມ,ແລະຄວາມກົດດັນເຮັດໃຫ້ພວກເຮົາຍ້ານກົວແລະບໍ່ສົນໃຈກັບສຽງຮ້ອງໄຫ້ຂອງຄົນອື່ນ. ຖ້າບໍ່ລະວັງໃຫ້ດີ ພວກເຮົາຈະບໍ່ໄດ້ຍິນສຽງເອີ້ນຂອງພຣະເຈົ້າ.

ເຣື່ອງໂນອາເຕືອນພວກເຮົາວ່າພວກເຮົາຢູ່ໃນໂລກທີ່ແຕກຫັກແລະເປື່ອຍເນົ່າຊຶ່ງຈ່ອງດຶງພວກເຮົາອອກຈາກແຜນການແລະພຣະປະສົງຂອງພຣະເຈົ້າ. ເຣື່ອງນີ້ໄດ້ເຕືອນພວກເຮົາວ່າພຣະເຈົ້າຊົງຄອຍເຝົ້າເບິ່ງຜູ້ທີ່ຟັງພຣະອົງຢູ່ຖ້າມກາງຄວາມຫຍຸ້ງຍາກສັບສົນ. ມັນສອນພວກເຮົາວ່າຄວາມເຊື່ອແທ້ບໍ່ແມ່ນພຽງແຕ່ຟັງເທົ່ານັ້ນ, ແຕ່ຈະຕ້ອງປະຕິບັດຕາມ. ແລະເຣື່ອງນີ້ສະແດງໃຫ້ເຫັນວ່າພຣະເຈົ້າໄດ້ຊົງຊອກຫາຄົນທີ່ສັດຊື່, ໂດຍພຣະຄຸນ ພຣະອົງຊົງຖອກເທພຣະພອນສຳລັບຊີວິດທີ່ຄົບບໍຣິບູນ.

<u>**ຄຳຖາມ**</u>:

1. ເປັນເວລາດົນປານໃດແລ້ວທີ່ທ່ານໄດ້ປົກປິດສຽງລົບກວນ ແລະໄດ້ຟັງສຽງພຣະເຈົ້າ?
2. ທ່ານໄດ້ມີພາກສ່ວນອັນໃດແດ່ກັບພຣະເຈົ້າໃນການຮັກສາສິ່ງທີ່ພຣະອົງຊົງສ້າງໄວ້?
3. ທ່ານໄດ້ເຊື່ອຟັງພຣະເຈົ້າແລະເຮັດສິ່ງທີ່ບໍ່ຄາດຝັນ ດົນປານໃດແລ້ວ? ມີຫຍັງແດ່ເກີດຂຶ້ນ?
4. ຄວາມເຊື່ອຂອງທ່ານໄດ້ຖືກສະແດງອອກວິທີໃດ ຕັ້ງແຕ່ວັນຈັນເຖິງວັນເສົາ?
5. ແມ່ນຫຍັງຄືສິ່ງສຸດທ້າຍທີ່ທ່ານໄດ້ຍິນສຽງພຣະເຈົ້າຊົງບອກໃຫ້ທ່ານເຮັດ ແຕ່ຍັງບໍ່ທັນໄດ້ເຮັດເທື່ອ?

*ສຄ*

# ບົດຮຽນທີ 9

## ນ້ຳຖ້ວມ: ການພິພາກສາ ແລະການເລີ້ມໃໝ່ຂອງພຣະເຈົ້າ

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ປະຖົມມະການ 7: 1-4, 17-24; 8: 1-5, 13-16, 20-22

ພູມຫລັງຂອງພຣະຄັມພີ: ປະຖົມມະການ 7-8

ຈຸດສຳຄັນສຳລັບບົດຮຽນນີ້: ພຣະເຈົ້າຊົງພິພາກສາຄວາມບາບດ້ວຍນ້ຳຖ້ວມ, ແຕ່ພຣະອົງຊົງໃຫ້ໂອກາດມະນຸດໄດ້ເລີ້ມໃໝ່.

ຄຳຖາມເພື່ອຄົ້ນຄວ້າ: ພຣະເຈົ້າໄດ້ຊົງໃຫ້ໂອກາດທ່ານໂດຍຊ່ວຍກູ້ຈາກພັຍແລະໃຫ້ເລີ້ມໃໝ່ຢ່າງໃດ?

ຈຸດປະສົງຂອງການສຶກສານີ້: ເພື່ອຂອບພຣະຄຸນພຣະເຈົ້າທີ່ຊົງຊ່ວຍກູ້ຈາກພັຍແລະໃຫ້ເລີ້ມໃໝ່.

ອ່ານລວບ: ຫລັງຈາກການສ້າງເຮືອໃຫຍ່ແລ້ວ ໂນອາໄດ້ນຳຄອບຄົວແລະສັດທັງຫລາຍເຂົ້າໄປໃນເຮືອຊຶ່ງເປັນບ່ອນທີ່ພວກເຂົາຈະຢູ່ລອດແລະເລີ້ມຕົ້ນພັນທະສັນຍາໃໝ່ລະຫວ່າງມະນຸດແລະພຣະເຈົ້າ.

### ຄຳນຳ

ມີເຣື່ອງບາງຢ່າງໃນພຣະຄັມພີທີ່ສ້າງຄວາມສົນໃຈໃຫ້ກັບຄົນທົ່ວໄປ; ແຕ່ເຣື່ອງເຮືອໃຫຍ່ຂອງໂນອາເປັນທີ່ຄົນທັງຫລາຍຮູ້ດີ; ບ່ອນຝາກເດັກນ້ອຍຫລາຍແຫ່ງມີຮູບເຮືອຂອງໂນອາແລະຮູບສັດຕ່າງໆຕິດຢູ່ຝາຫ້ອງຮຽນ; ຫລາຍເທື່ອພວກເຮົາໄດ້ເຫັນເຄື່ອງຫລິ້ນຂອງເດັກນ້ອຍເຊັ່ນໂຕສັດເປັນຄູ່ໆ ຊຶ່ງຄິດຄົ້ນມາຈາກເຣື່ອງຂອງໂນອາ. ຜູ້ຊ່ຽວຊານໄດ້ລົງທຶນຄົ້ນຄວ້າຫາຄວາມຈິງເຣື່ອງເຮືອໃຫຍ່ຂອງໂນອາ; ຫລາຍຄົນໄດ້ໄປຊອກຄົ້ນຫາເຮືອຂອງໂນອາທີ່ຄ້າງຢູ່ເທິງພູໃນເຂດຕາເວັນອອກກາງ.

ໃນປີ 2014 ໄດ້ມີການສ້າງພາບພະຍົນເຣື່ອງຂອງໂນອາໂດຍໃຊ້ດາຣາຊື່ດັງໃຫ້ສະແດງເປັນໂນອາ; ພາບພະຍົນເຣື່ອງນີ້ມີລາຍໄດ້ເຂົ້າເຖິງ 350 ລ້ານໂດລາສະຫະຣັດ. ສຳລັບຄຣິສຕຽນ, ເຣື່ອງຂອງໂນອາມີຄວາມໝາຍຫລາຍກວ່າບຸກຄົນຫລືລາຄາຂອງເຮືອ; ເຣື່ອງຂອງໂນອາບອກພວກເຮົາເຖິງພຣະລັກສະນະຂອງພຣະເຈົ້າ. ໃນປະຖົມມະການ 7-8, ພວກເຮົາໄດ້ເຫັນວ່າພຣະເຈົ້າຈຳເປັນຕ້ອງໄດ້ລົງໂທດຄວາມຜິດບາບ ແຕ່ພຣະອົງຍັງຊົງມີພຣະປະສົງທີ່ຈະໂຜດມະນຸດແລະໃຫ້ໂອກາດເລີ້ມຕົ້ນໃໝ່.

### 1. **ຕຽມການພິພາກສາ**: (ປະຖົມມະການ 7: 1-4)

ຫລັງຈາກໂນອາໄດ້ສ້າງເຮືອສຳເຣັດແລ້ວ, ພຣະເຈົ້າໄດ້ຊົງສັ່ງເຂົາໃຫ້ພາຄອບຄົວ, ສັດທັງຫລາຍ, ແລະເຄື່ອງຂອງໃຫ້ເຂົ້າຢູ່ໃນເຮືອຊຶ່ງຈະເປັນບ້ານຫລັງໃໝ່ຂອງພວກເຂົາ. ພຣະເຈົ້າໃຫ້ເວລາໂນອາພຽງເຈັດວັນກ່ອນທີ່ຝົນຈະເລີ້ມຕົກຈາກຟ້າ. ພຣະເຈົ້າຊົງສັ່ງໂນອາໃຫ້ນຳເອົາສັດທີ່ບໍ່ເປັນມົນທິນເຈັດຄູ່ທັງໂຕຜູ້ແລະໂຕແມ່ເຂົ້າໄປໃນເຮືອ ແຕ່ສຳລັບສັດທີ່ເປັນມົນທິນໃຫ້ເອົາແນວລະຄູ່ (7: 2).

ຄຳຖາມມີຢູ່ວ່າ: ໂນອາຮູ້ໄດ້ຢ່າງໃດວ່າສັດໂຕໃດເປັນມົນທິນ ແລະສັດໂຕໃດບໍ່ເປັນມົນທິນເພາະພຣະເຈົ້າຍັງບໍ່ຊົງໄດ້ໃຫ້ພຣະບັນຍັດເທື່ອ? ຫລາຍຄົນເຊື່ອວ່າເພາະໂນອາເປັນຄົນຊອບທັມ, ລາວສາມາດຮູ້ຄວາມແຕກຕ່າງ. ພວກເຮົາສັງເກດເຫັນວ່າຫລັງຈາກນ້ຳຖ້ວມ, ໂນອາໄດ້ນຳເຄື່ອງຖວາຍໃຫ້ພຣະເຈົ້າ ແລະພຣະຄັມພີໄດ້ເປີດເຜີຍໃຫ້ຮູ້ຄວາມແຕກຕ່າງລະຫວ່າງສັດທີ່ເປັນມົນທິນ ແລະສັດທີ່ບໍ່ເປັນມົນທິນ.

ນັກປາດຫລາຍຄົນສັງເກດເຫັນວ່າ 7: 11 ເຖິງ 7: 16 ແມ່ນຄືກັບ 7: 6 ເຖິງ 7: 10; ເປັນການເວົ້າຄຳເກົ່າ. ແຕ່ບາງຄົນໄດ້ແປຄວາມໝາຍວ່າເປັນນ້ຳຖ້ວມອີກເທື່ອນຶ່ງ; ຄົນສ່ວນຫລາຍເຫັນພ້ອມວ່າເປັນການເວົ້າຊ້ຳເພື່ອຊ່ວຍຄວາມເຂົ້າໃຈຂອງຜູ້ອ່ານ. ໃຫ້ເຮົາສັງເກດອີກສິ່ງນຶ່ງທີ່ເວົ້າຊ້ຳສາມເທື່ອແຕ່ 7: 5 ເຖິງ 7: 16 ຄື "ໂນອາກໍໄດ້ເຮັດຕາມທີ່ອົງພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ທຸກປະການ." ໂນອາບໍ່ໄດ້ປັບປຸງແກ້ໄຂພຣະດຳລັດສັ່ງຂອງພຣະເຈົ້າ, ແດ່ໄດ້ປະຕິບັດຕາມທຸກຢ່າງ. ສະນັ້ນພຣະເຈົ້າຜູ້ຊົງອັດປະຕູເຮືອເມື່ອທຸກຄົນໄດ້ເຂົ້າປະຈຳທີ່ແລະຍັງເປັນຜູ້ຊົງໃຫ້ເຮືອນັ້ນສາມາດສູ້ລົມແລະຝົນເພື່ອຄວາມປອດພັຍຂອງຜູ້ໂດຍສານແລະເຄື່ອງຂອງ.

## 2. <u>**ການພິພາກສາໄດ້ມາເຖິງ**</u>: (ປະຖົມມະການ 7: 17-24)

ເວລານ້ຳຖ້ວມເກີດຂຶ້ນ, ທຸກຢ່າງກໍຖືກທຳລາຍ. ພຣະຄຳໄດ້ບອກວ່າ "ນ້ຳໄດ້ຖ້ວມສືບຕໍ່ກັນຕລອດສີ່ສິບວັນສີ່ສິບຄືນ" (7: 17). ຄົນໃນສມັຍບູຮານເຊື່ອວ່າເວລານ້ຳຖ້ວມໂລກ, ແຜ່ນດິນໄດ້ຟູຢູ່ເທິງໜ້ານ້ຳ; ສິ່ງນີ້ຜິດກັບພຣະຄຳຂອງພຣະເຈົ້າທີ່ໄດ້ບັນທຶກໄວ້ເຣື່ອງນ້ຳຖ້ວມໂລກ ເພາະສິ່ງດຽວທີ່ຟູຢູ່ເໜືອໜ້ານ້ຳແມ່ນເຮືອໃຫຍ່ຂອງໂນອາ. ຜູ້ຂຽນພຣະຄຳໄດ້ໃຊ້ຄຳເວົ້າທີ່ບອກໃຫ້ເຫັນສະພາບນ້ຳກຳລັງຖ້ວມໂດຍການໃຊ້ຄຳເວົ້າເຊັ່ນ "ນ້ຳມາກຂຶ້ນເລື້ອຍໆ" ແລະ "ລຳດັບນ້ຳໄດ້ສູງຂຶ້ນເລື້ອຍໆ."

ນ້ຳໄດ້ຂຶ້ນສູງຈົນຖ້ວມພູເຂົາໜ່ວຍສູງທີ່ສຸດ (7: 20) ແລະທຸກສິ່ງທີ່ມີຊີວິດຢູ່ເທິງແຜນດິນໂລກໄດ້ຕາຍໄປໝົດ, ມະນຸດ, ສັດ, ແລະນົກ; "ມີແຕ່ຄອບຄົວຂອງໂນອາແລະສັດໃນເຮືອເທົ່ານັ້ນທີ່ເຫລືອຢູ່" (7: 23). ພຣະເຈົ້າໄດ້ຊົງໃຊ້ນ້ຳທຳລາຍສິ່ງເກົ່າເພື່ອຈະສ້າງທຸກຢ່າງຂຶ້ນມາໃຫ້ຢູ່ໃນສະພາບເດີມເມື່ອຊົງສ້າງໂລກ.

## 3. <u>**ຕຽມທີ່ຈະເລີ້ມໃໝ່**</u>: (ປະຖົມມະການ 8: 1-5)

ປະຖົມມະການ 8: 1 ເປັນຈຸດເລີ້ມໃໝ່: "ພຣະເຈົ້າບໍ່ໄດ້ລືມໂນອາ..."ພຣະຄຳນີ້ບໍ່ໄດ້ບອກວ່າພຣະເຈົ້າເຄີຍລືມໂນອາ; ພຣະອົງເປັນພຣະເຈົ້າຜູ້ຊົງຮູ້ເຫັນ ແລະຜູ້ຊົງຄວບຄຸມທຸກໆສິ່ງ ໃນຂະນະທີ່ພຣະອົງໄດ້ຊົງພິພາກສາ ແລະທຳລາຍສິ່ງທີ່ຊົ່ວຊ້າໃນໂລກ, ພຣະເຈົ້າຊົງຈ້ອງເບິ່ງຄົນຊອບທັມທີ່ພຣະອົງໄດ້ແຍກເອົາໄວ້.

ສັງເກດເບິ່ງວ່າຜູ້ຂຽນໄດ້ວາດພາບກ່ອນນ້ຳຈະແຫ້ງຢ່າງລະອຽດ: "ຮູນ້ຳໃຕ້ແຜ່ນດິນ ແລະປ່ອງນ້ຳເທິງທ້ອງຟ້າ ຖືກອັດໝົດ ຝົນເຊົາຕົກ" (8: 2). ນ້ຳໄດ້ຄ່ອຍໆບົກລົງ ແລະໃນທີ່ສຸດເຮືອຂອງໂນອາກໍຢຸດຢູ່; ຈອມພູທັງຫລາຍໄດ້ປາກົດຂຶ້ນ. ນ້ຳໄດ້ທຳລາຍສິ່ງທີ່ພຣະເຈົ້າຊົງປະສົງເອົາອອກໄປຈາກໂລກນີ້ ແລະພຣະເຈົ້າບໍ່ໄດ້ລືມໂນອາຜູ້ຊອບທັມ. ແຕ່ໃນຕອນນີ້ ໂນອາແລະຄອບຄົວຈະຕ້ອງຢູ່ໃນເຮືອຕໍ່ໄປ; ພວກເຂົາລໍຟັງພຣະເຈົ້າແລະໄວ້ວາງໃຈວ່າພຣະອົງຈະຊົງໃຫ້ພວກເຂົາໄດ້ຍ່າງຢູ່ເທິງດິນແຫ້ງ.

ຄວາມຊອບທັມ ເປັນພື້ນຖານສຳລັບຄວາມພົ້ນຂອງໂນອາ ແຕ່ລາວກໍຕ້ອງເຊື່ອຟັງພຣະເຈົ້າແລະເວລາຂອງພຣະອົງ. ໃນປະຖົມມະການ 8: 2 ເຖິງ 8: 12, ຜູ້ຂຽນໄດ້ໃຫ້ລາຍລະອຽດກ່ຽວກັບເຣື່ອງນ້ຳບົກ ແລະການລໍຄອຍ. ໂນອາໄດ້ໃຊ້ກາໄປສັງເກດເບິ່ງລະດັບນ້ຳ ແລະລາວໄດ້ໃຊ້ນົກເຂົາອອກໄປອີກ; ພວກເຮົາບໍ່ຮູ້ວ່າເປັນຫຍັງໂນອາຈຶ່ງເລືອກກາ ແລະນົກເຂົາ ແຕ່ສິ່ງສຳຄັນຄືໃຫ້ຈົດຈຳໄວ້ວ່າພຣະເຈົ້າຍັງຊົງຄຸ້ມຄອງທຸກຢ່າງ ແລະທຸກຢ່າງຈະກ້າວຕໍ່ໄປຕາມແຜນຂອງພຣະອົງ.

## 4. <u>ຈຸດເລີ້ມຕົ້ນໃໝ່</u>: (ປະຖົມມະການ 8: 13-16, 20-22)

ປະມານນຶ່ງປີຫລັງຈາກຝົນເລີ້ມຕົກ, ໂນອາໄດ້ເຫັນດິນແຫ້ງ. ການເຫັນດິນແຫ້ງຄົງຈະນຳຄວາມຕື່ນເຕັ້ນມາສູ່ໂນອາແລະຄອບຄົວພໍສົມຄວນ. ພຣະເຈົ້າທຳລາຍໂລກດ້ວຍນ້ຳຖ້ວມ ແລະພຣະອົງຊົງເລີ້ມຕົ້ນໃໝ່ດ້ວຍດິນແຫ້ງທີ່ປາກົດຂຶ້ນມາຈາກນ້ຳ ເໝືອນກັບທີ່ພຣະອົງເຄີຍນິຣະມິດສ້າງຈາກໂລກທີ່ບໍ່ທັນມີຮູບຮ່າງແລະວ່າງເປົ່າຢູ່. ໂນອາແລະຄອບຄົວໄດ້ລໍຄອຍເພື່ອໃຫ້ດິນແຫ້ງ.

ໃນ ປຖກ 8: 13-14, ຜູ້ຂຽນບອກໃຫ້ຮູ້ວ່າກ່ອນດິນຈະແຫ້ງຕ້ອງໃຊ້ເວລາເຖິງສອງເດືອນ. ໃນທີ່ສຸດ, ພຣະເຈົ້າໄດ້ຊົງສັ່ງໂນອາໃຫ້ນຳເອົາສັດແລະຄອບຄົວອອກຈາກເຮືອ; ແນ່ນອນໂນອາແລະຄອບຄົວມີຄວາມຕື່ນເຕັ້ນທີ່ໄດ້ຍ່າງເທິງໜ້າດິນ, ແຕ່ບ້ານເຮືອນທີ່ພວກເຂົາເຄີຍຮູ້ບໍ່ມີຢູ່ໃນສາຍຕາເລີຍ; ທຸກຢ່າງວ່າງເປົ່າຫລຽວຫາຜູ້ຄົນກໍບໍ່ເຫັນ; ແນ່ນແລ້ວ ພຣະເຈົ້າຊົງເຂົ້າໃຈຄວາມຮູ້ສຶກຂອງພວກເຂົາ.

ພຣະເຈົ້າຊົງສັ່ງໂນອາແລະຄອບຄົວວ່າ "ໃຫ້ອອກແມ່ແຜ່ລູກຫລາຍຂຶ້ນຢູ່ເທິງແຜ່ນດິນ" (8: 17). ນັ້ນຄື ຄຳດຽວກັນທີ່ພຣະອົງໄດ້ຊົງສັ່ງອາດາມແລະເອວາ (ປຖກ 1: 28). ພຣະເຈົ້າຊົງໃຊ້ໂນອາແລະຄອບຄົວເພື່ອໃຫ້ແຜ່ນດິນນີ້ເຕັມໄປດ້ວຍມະນຸດ ໂນອາໄດ້ສ້າງແທ່ນບູຊາເພື່ອຖວາຍແກ່ພຣະເຈົ້າສຳລັບການຊົງໂຜດໃຫ້ພົ້ນແລະການປົກປັກຮັກສາຊີວິດຂອງພວກຕົນ; "ກິ່ນຫອມຫວນຂອງເຄື່ອງຖວາຍນີ້ເປັນທີ່ພໍໃຈຂອງອົງພຣະຜູ້ເປັນເຈົ້າ" (8: 21).

ພຣະເຈົ້າໄດ້ຊົງສິ້ນສຸດການສ້າງແຜ່ນດິນຂຶ້ນມາໃໝ່ໂດຍຊົງສັນຍາວ່າຈະບໍ່ທຳລາຍຊີວິດຈາກໂລກ "ເໝືອນດັ່ງທີ່ເຮົາໄດ້ທຳລາຍໃນຄັ້ງນີ້ອີກຈັກເທື່ອ." ພຣະເຈົ້າຂອງພວກເຮົາເປັນພຣະເຈົ້າຜູ້ຊົງຮັກແລະຊົງເມດຕາ; ພຣະອົງພ້ອມທີ່ຈະອະພັຍຄວາມຜິດບາບ ເພາະພຣະອົງຍັງຊົງຄຸ້ມຄອງທຸກຢ່າງ. ພຣະເຈົ້າຊົງປາຖນາທີ່ຈະໃຫ້ມະນຸດທຸກຄົນໄດ້ຄືນດີກັບພຣະອົງ ແລະເລີ້ມຕົ້ນຊີວິດໃໝ່.

## <u>ຄວາມໝາຍແລະການປະຕິບັດ</u>:

ໂລກເຮົາໃນປັດຈຸບັນກໍບໍ່ໄດ້ແຕກຕ່າງກັບໂລກມະນຸດໃນສມັຍຂອງໂນອາ. ມະນຸດຫາວິທີທາງທີ່ຈະທຳລາຍກັນແລະກັນ ແລະພວກເຮົາມັກເຮັດຕາມຄວາມຕ້ອງການຂອງເນື້ອໜັງ. ການຊັກຊ້າໃນການກັບມາເທື່ອທີ

ສອງຂອງພຣະຄຣິດເຮັດໃຫ້ບາງຄົນຄິດວ່າພຣະເຈົ້າຊົງລືມມະນຸດແລ້ວ ຫລືພຣະອົງອາດຈະບໍ່ສົນໃຈມະນຸດແລ້ວ. ຫລາຍຄົນໃນປະວັດສາດກໍເຄີຍຄິດໃນທຳນອງນັ້ນ ມະນຸດຫລາຍຄົນຄິດວ່າພວກເຂົາເຈົ້າບໍ່ຕ້ອງການພຣະເຈົ້າ; ແຕ່ເຣື່ອງຂອງໂນອາໄດ້ສອນໃຫ້ຮູ້ວ່າພຣະເຈົ້າຊົງເບິ່ງຢູ່ຕລອດເວລາ ແລະຊົງພ້ອມທີ່ຈະພິພາກສາຄົນຜິດບາບ.

ໜ້າເສັຽໃຈທີ່ຄຣິສຕຽນຫລາຍຄົນເບິ່ງຄຣິສຕະຈັກເປັນເໝືອນເຮືອໃຫຍ່ຂອງໂນອາຊຶ່ງເປັນບ່ອນທີ່ພວກເຂົາເຈົ້າພົ້ນພັຍອັນຕະລາຍໃນຂະນະທີ່ຄົນທັງຫລາຍໃນໂລກກຳລັງຈົມນ້ຳ. ໃນຂະນະທີ່ພຣະເຈົ້າຊົງສາມາດທີ່ຈະພິພາກສາໂລກໄດ້ ແຕ່ພຣະອົງຊົງປາຖນາການເລີ້ມຕົ້ນໃໝ່ຫລາຍກວ່າ. ຢ່າໃຫ້ພວກເຮົາຜູ້ທີ່ເຊື່ອພາກັນລີ້ຢູ່ໃນໂບດຊຶ່ງເປັນບ່ອນປອດພັຍ ແຕ່ໃຫ້ພວກເຮົາໝັ່ນພຽນໃນການເຊື້ອເຊີນຄົນທັງຫລາຍໃຫ້ມາຫາພຣະເຢຊູຄຣິດ ເພື່ອເຂົາເຈົ້າຈະໄດ້ເຫັນການຊົງທຳງານຂອງພຣະເຈົ້າເຣື່ອງການດູແລ, ການປົກປັກຮັກສາ ແລະການເລີ້ມຕົ້ນໃໝ່ເວລາພວກເຂົາເຈົ້າຍອມຮັບພຣະອົງແລະເຊື່ອຟັງພຣະອົງ.

**<u>ຄຳຖາມ</u>:**

1. ພຣະເຈົ້າຊົງເອີ້ນທ່ານໃຫ້ສ້າງ "ເຮືອໃຫຍ່" ປະເພດໃດ?
2. ທ່ານເຄີຍຮູ້ສຶກວ່າຕົວເອງກຳລັງຢູ່ຖ້າມກາງນ້ຳຖ້ວມບໍ່? ມີຫຍັງເກີດຂຶ້ນຕອນນັ້ນ?
3. ພວກເຮົາຈະເຮັດຕາມແບບຢ່າງຂອງໂນອາເວລາລາວອອກຈາກເຮືອແລ້ວໄດ້ຢ່າງໃດ?
4. ທ່ານເຄີຍຮູ້ສຶກວ່າພຣະເຈົ້າຊົງບໍ່ລືມທ່ານບໍ່?
5. ທ່ານຈະເຊື້ອເຊີນຄົນອື່ນໆໃຫ້ມາມີປະສົບການກັບພຣະເຈົ້າໄດ້ຢ່າງໃດ?

*ສຄ*

# ບົດຮຽນທີ 10
## ພຣະເຈົ້າຊົງເຮັດພັນທະສັນຍາ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ປະຖົມມະການ 9 : 1-17

ພູມຫລັງຂອງພຣະຄັມພີ: ປະຖົມມະການ 9: 1-17

ຈຸດສຳຄັນສຳລັບບົດຮຽນນີ້: ພຣະເຈົ້າເລີ່ມພັນທະສັນຍາຊຶ່ງຈະໃຫ້ພຣະພອນແລະຄວາມສັມພັນຄືນດີ.

ຄຳຖາມເພື່ອຄົ້ນຄວ້າ: ພັນທະສັນຍາຄວາມສັມພັນກັບພຣະເຈົ້າມີຄວາມໝາຍຢ່າງໃດ?

ຈຸດປະສົງຂອງການສຶກສານີ້: ເພື່ອຈະປະເມີນເບິ່ງຄວາມໝາຍແລະຄວາມສຳຄັນຂອງພັນທະສັນຍາຄວາມສັມພັນກັບພຣະເຈົ້າ.

ອ່ານລວບ: ພຣະເຈົ້າໄດ້ຊົງເຮັດພັນທະສັນຍາກັບມະນຸດແລະທຸກສິ່ງທີ່ໄດ້ຊົງສ້າງອີກໃໝ່ ຫລັງຈາກໂນອາໄດ້ອອກຈາກເຮືອໃຫຍ່ແລະໄດ້ຖວາຍບູຊາແກ່ພຣະເຈົ້າ.

### ຄຳນຳ

ເວລາໃດມີຮູບຮຸ້ງກິນນ້ຳຫລາຍສີສັນງົດງາມຢູ່ເທິງຟ້າ, ພາຣະໃນໃຈກໍຫາຍໄປຊົ່ວລະຍະນຶ່ງ. ສິ່ງນີ້ນຳຄວາມຊື່ນບານມາໃຫ້ຄົນທຸກໆວັຍ. ມີນິທານນຶ່ງໄດ້ເວົ້າໄວ້ວ່າ ຮຸ້ງກິນນ້ຳເປັນປະຕູໄປຫາບ່ອນນິກສີຟ້າບິນ, ແລະຖ້າວ່າພວກເຮົາຕິດຕາມຈົນສຸດທາງຈະມີໄຫຄຳລໍຖ້າຢູ່ທີ່ນັ້ນ. ແຕ່ທີ່ຈິງແລ້ວຮຸ້ງກິນນ້ຳບໍ່ມີຫຍັງຫລາຍກວ່າແສງຕາເວັນສະທ້ອນໃສ່ອາຍນ້ຳ(ຝົນຝອຍ), ສິ່ງທີ່ສວຍງາມນີ້ຍັງສ້າງຄວາມປລາດໃຈໃນທັມມະຊາດ.

ສຳຫລັບຜູ້ທີ່ເຂົ້າໃຈພຣະຄັມພີເຣື່ອງນ້ຳຖ້ວມໂລກແລ້ວ, ຮຸ້ງກິນນ້ຳທີ່ມີສີສັນອັນສວຍງາມມີຄວາມໝາຍຫລາຍກວ່າຄວາມຊື່ນໃຈເວລາຮຸ້ງກິນນ້ຳໄດ້ປາກົດໃຫ້ເຫັນ. ສິ່ງນັ້ນເຕືອນໃຫ້ຮູ້ວ່າໂລກນີ້ຢູ່ໃນພຣະຫັດຂອງພຣະເຈົ້າຜູ້ໃຫ້ຄຳໝັ້ນສັນຍາ. ພຣະເຈົ້າຊົງມີຄວາມເມດຕາກະຣຸນາແລະຊົງຕ້ອງການໃຫ້ມະນຸດມີຄວາມສັມພັນກັບພຣະອົງຜູ້ຊົງສ້າງພວກເຂົາ. ພຣະເຈົ້າຊົງເອີ້ນມະນຸດໃຫ້ເຮັດສິ່ງທີ່ພຣະອົງໄດ້ເຈດຕະນາໃນການສ້າງພວກເຂົາຂຶ້ນມາ. ຖ້າພວກເຮົາເບິ່ງບົດສລຸບເຣື່ອງນ້ຳຖ້ວມໂລກ, ພວກເຮົາຈະຄົ້ນພົບວ່າຄວາມຍິນດີກ່ຽວກັບຮຸ້ງກິນນ້ຳບໍ່ແມ່ນທີ່ສີອັນສວຍງາມຂອງມັນ ແຕ່ຢູ່ທີ່ຄວາມໝາຍເບື້ອງຫລັງຂອງການປາກົດນັ້ນ.

### 1. ລະບົບເກົ່າໄດ້ສ້າງຄືນໃໝ່: (ປະຖົມມະການ 9:1-7)

ນ້ຳຖ້ວມໂລກໄດ້ສ້າງສະພາບຂອງຈັກວານກ່ອນການຊົງສ້າງໂລກຂຶ້ນມາໃໝ່. ຮູບພາບຂອງຄວາມວ່າງເປົ່າມີຢູ່ກ່ອນພຣະເຈົ້າຊົງສ້າງ ແລະຫລັງຈາກນ້ຳຖ້ວມໂລກແຜ່ນດິນໃໝ່ກໍໄດ້ເກີດຂຶ້ນ. ຄຳເວົ້າທີ່ພຣະເຈົ້າໄດ້ຊົງເວົ້າກັບອາດາມ (ປຖກ 1: 28-29), ພຣະອົງໄດ້ຊົງບອກກັບໂນອາ ແລະພວກລູກຊາຍທັງສາມຄົນຂອງ

ລາວວ່າ "ຈົ່ງມີລູກເຕົ້າໃຫ້ມາກຫລາຍເພື່ອວ່າເຊື້ອສາຍຂອງເຈົ້າຈະມີຊີວິດຢູ່ທົ່ວໂລກ; ສັດ, ນົກ, ແລະປາທຸກຊະນິດຈະມີຊີວິດຢູ່ໂດຍຢ້ານຢຳເຈົ້າ. ບັດນີ້ເຈົ້າຈະກິນສັດນັ້ນແລະພືດໃບຂຽວໄດ້ເພາະເຮົາໄດ້ໃຫ້ສິ່ງເຫລົ່ານີ້ແກ່ເຈົ້າ" (ປຖກ 9:1-3). ຄວາມໝາຍຄືກັນທັງສອງປະໂຍກນີ້ ແຕ່ວ່າໃນປະຖົມມະການ ບົດທີ 9 ໄດ້ເວົ້າວ່າມະນຸດມີສິດ ປົກຄອງສັດ ກິນສັດໄດ້ແລະສັດຈະຢ້ານຢຳມະນຸດ. ຕາມຄວາມຈິງແລ້ວພຣະເຈົ້າໄດ້ສ້າງສັດໄວ້ພິເສດໃຫ້ເປັນອາຫານແກ່ມະນຸດ.

ບາງຄົນເຊື່ອວ່າກ່ອນນ້ຳຖ້ວມໂລກ, ມະນຸດກິນໄດ້ແຕ່ຜັກຢ່າງດຽວ. ພຣະຄັມພີເວົ້າເຣື່ອງການຂ້າສັດກ່ອນການຖວາຍໃຫ້ພຣະເຈົ້າ, ແຕ່ຄົນອາດຈະກິນເນື້ອສັດຊຶ່ງມີຢູ່ໃນຈຳພວກສັດທັງຫລາຍ. ພຣະຄຳຕອນນີ້ໄດ້ບອກເຖິງວິທີການກິນເນື້ອສັດທີ່ຖືກຕ້ອງ; "ມີສິ່ງນຶ່ງທີ່ເຈົ້າບໍ່ຕ້ອງກິນຄື: ຊີ້ນທີ່ມີເລືອດ; ເພາະເລືອດແມ່ນຫລັກແຫ່ງຊີວິດ" (ປຖກ 9: 4). ພຣະເຈົ້າຊົງປົກປັກຮັກສາສິ່ງທີ່ພຣະອົງຊົງສ້າງ. ຕໍ່ມາພາຍຫລັງມີຄຳແນະນຳສຳລັບການຖວາຍບູຊາທີ່ວິຫານ ຊຶ່ງສັ່ງປະໂລຫິດໃຫ້ປ່ອຍເລືອດໄຫລອອກຈາກສັດກ່ອນຈຶ່ງນຳໄປຖວາຍບູຊາທີ່ແທ່ນ (ລວ 1:15).

ປະຖົມມະການ 9: 5-6 ເນັ້ນເຖິງຄວາມສັກສິດຂອງເລືອດໂດຍການສອນເຣື່ອງການຫລັ່ງເລືອດມະນຸດ. ພຣະຄຳນີ້ເນັ້ນຄຸນຄ່າຂອງຊີວິດມະນຸດ. ຖ້າຜູ້ໃດຜູ້ນຶ່ງທຳລາຍຊີວິດມະນຸດຜູ້ນັ້ນຈະຕ້ອງຍອມສະລະຊີວິດຕົວເອງ. ບາງຄົນໃຊ້ພຣະຄຳໃນຕອນນີ້ເພື່ອສນັບສນູນການລົງໂທດປະຫານຊີວິດ, ແຕ່ພວກເຮົາຕ້ອງອ່ານໃຫ້ດີວ່າ ພຣະຄຳນີ້ສອນຫຍັງແທ້.

ນຶ່ງ. ການໃຊ້ຄຳເວົ້າວ່າ "ອ້າຍນ້ອງ" ໃນຂໍ້ 5, ຜູ້ຂຽນອາດຈະນຳພາຜູ້ອ່ານໃຫ້ກັບຄືນໄປຫາ ປະຖົມມະການ 4 ແລະຊີ້ໃຫ້ເຫັນເຖິງການເປັນອ້າຍນ້ອງກັນຂອງມະນຸດຊາດ. ທັງເປັນການເຕືອນຜູ້ທີ່ວາງແຜນຈະຂ້າຜູ້ໃດຜູ້ນຶ່ງ ຫລືຕັ້ງຕົວເອງເປັນຜູ້ພິພາກສາແລະຜູ້ສັງຫານ.

ສອງ. ອີງຕາມຄຳເຕືອນເຣື່ອງການເປັນອ້າຍນ້ອງກັນຂອງມະນຸດຊາດແລ້ວ, ການລົງໂທດປະຫານຊີວິດຈະຕ້ອງເປັນການລົງໂທດຢ່າງຈຳກັດ, ບໍ່ແມ່ນການແກ້ແຄ້ນ ແຕ່ເປັນການປ້ອງກັນສັງຄົມ. ຈຳໄວ້ວ່າພຣະເຈົ້າບໍ່ໄດ້ປະຫານຊີວິດຜູ້ທີ່ຂ້າຄົນຕອນທຳອິດ (ແຕ່ພຣະເຈົ້າໄດ້ປົກປັກຮັກສາລາວດ້ວຍເຄື່ອງໝາຍ).

ສາມ. ມະນຸດມີຄຸນຄ່າເພາະໄດ້ຖືກສ້າງຂຶ້ນມາຕາມພຣະລັກສະນະຂອງພຣະເຈົ້າ. ຜູ້ທີ່ທຳລາຍຫລືຂ້ານ, ຈະຕ້ອງຖືກພິພາກສາຕາມການກະທຳຂອງເຂົາ ຄວາມຈິງນີ້ເຕືອນຜູ້ອ່ານວ່າ ນ້ຳໄດ້ຖ້ວມໂລກເພື່ອລົງໂທດຄວາມບາບ ແຕ່ພຣະເຈົ້າບໍ່ໄດ້ລຶບລ້າງພຣະລັກສະນະອອກຈາກມະນຸດ. ພວກເຮົາຍັງເປັນຜູ້ດູແລຮັກສາສິ່ງທີ່ພຣະເຈົ້າຊົງສ້າງ. ຕຳແໜ່ງນີ້ໄດ້ມີຄຳຢືນຢັນໃນ ປຖກ 9: 7 ເມື່ອພຣະເຈົ້າໄດ້ຊົງກ່າວແກ່ໂນອາ "ຈົ່ງມີລູກເຕົ້າໃຫ້ມາກຫລາຍເພື່ອວ່າເຊື້ອສາຍເຈົ້າຈະມີຊີວິດຢູ່ທົ່ວແຜ່ນດິນໂລກ." ເຖິງນິສັຍຢາກເຮັດບາບຂອງມະນຸດຍັງມີຢູ່, ແຕ່ພຣະເຈົ້າຊົງໃຊ້ມະນຸດ ແລະຊົງພຍາຍາມນຳເຂົາໃຫ້ກັບມາມີຄວາມສັມພັນກັບພຣະອົງ.

## 2. <u>ພັນທະສັນຍາກັບສິ່ງທີ່ຊົງສ້າງຖືກຮັບຮູ້:</u> (ປະຖົມມະການ 9: 8-11)

ປະຖົມມະການ 9:9 ໄດ້ເວົ້າແຈ່ມແຈ້ງເຖິງຫລັກຖານຂອງຄວາມສັມພັນລະຫວ່າງພຣະເຈົ້າກັບມະນຸດ ພຣະເຈົ້າໄດ້ກ່າວກັບໂນອາວ່າພຣະອົງຊົງເຮັດ "ພັນທະສັນຍາ" ລະຫວ່າງພຣະເຈົ້າແລະສິ່ງທີ່ພຣະອົງຊົງສ້າງ. ການຊົງທຳພັນທະສັນຍານັບວ່າເປັນເລື່ອງໃຫຍ່ໂດຍສະເພາະພັນທະສັນຍາກັບຊົນຊາດອິສຣາເອັນຊຶ່ງພຣະເຈົ້າໄດ້ຊົງໃຫ້ເກີດມີຂຶ້ນໃນໂລກ. ການມີພັນທະສັນຍາກັບມະນຸດເຮັດໃຫ້ພຣະເຈົ້າຕ້ອງຈຳກັດພຣະຣາຊກິດໃນອະນາຄົດໃຫ້ຢູ່ໃນຂອບເຂດຂອງພຣະສັນຍາທີ່ພຣະອົງໄດ້ຊົງສັນຍາໄວ້.

ສິ່ງສຳຄັນໃນພຣະສັນຍາຄັ້ງແລກຄືເປັນສັນຍາຝ່າຍດຽວແລະບໍ່ມີເງື່ອນໄຂ. ພຣະເຈົ້າຊົງສັນຍາວ່າຈະບໍ່ທຳລາຍທຸກສິ່ງທີ່ມີຊີວິດດ້ວຍນ້ຳຖ້ວມອີກ. ທຸກພັນທະສັນຍາໃນອະນາຄົດທີ່ພຣະເຈົ້າໄດ້ໃຫ້ໃນພຣະຄັມພີນັ້ນແມ່ນຂຶ້ນຢູ່ກັບມະນຸດແລະການກະທຳຂອງເຂົາເອງ. ເຊັ່ນຖ້າມະນຸດບໍ່ເຊື່ອຟັງ ພຣະເຈົ້າຈະຕ້ອງລົບລ້າງພັນທະສັນຍານັ້ນ. ການກະທຳຜິດຂອງມະນຸດຈະເຮັດໃຫ້ພຣະເຈົ້າບໍ່ຈຳເປັນຕ້ອງອວຍພອນພວກເຂົາ.

ປາກົດວ່າພຣະເຈົ້າໄດ້ເຮັດພັນທະສັນຍາກັບສິ່ງທີ່ພຣະອົງຊົງສ້າງທັງໝົດ. ບໍ່ໄດ້ຈຳກັດແຕ່ພຽງມະນຸດ. ຂໍ້ 11 ນຳຜູ້ອ່ານໃຫ້ຄືນໄປ ປະຖົມມະການ 8: 21, "ເຮົາຈະບໍ່ໃຫ້ແຜ່ນດິນໂລກຕົກຢູ່ໃນຄຳສາບແຊ່ງອີກຈັກເທື່ອຍ້ອນສິ່ງທີ່ມະນຸດກະທຳ." ແຕ່ພຣະສັນຍານີ້ບໍ່ໄດ້ລົບລ້າງການສາບແຊ່ງແຜ່ນດິນໃນ ປຖກ 3:17; ພວກເຮົາຍັງຕ້ອງຕັດຫຍ້າເຮັດສວນ, ແຕ່ກໍໃຫ້ຄວາມໝັ້ນໃຈໃນອະນາຄົດ.

ໃນຂະນະທີ່ພັຍທັມມະຊາດຈະຕ້ອງມີຢູ່ຕໍ່ໄປເພາະພວກເຮົາຢູ່ໃນໂລກທີ່ເຕັມໄປດ້ວຍຄວາມເປື່ອຍເນົ່າ, ສິ່ງຕ່າງໆນັ້ນ ບໍ່ແມ່ນການລົງໂທດຈາກພຣະເຈົ້າ. ພຣະເຈົ້າໄດ້ຊົງສັນຍາວ່າພຣະອົງຈະບໍ່ພິພາກສາສິ່ງທີ່ພຣະອົງຊົງສ້າງເພາະຄວາມບາບຂອງມະນຸດ. ມະນຸດຈະຕ້ອງຮັບຜິດຊອບໃນສິ່ງທີ່ເຂົາກະທຳ. ມະນຸດຊາດບໍ່ໄດ້ປ່ຽນແປງເພາະນ້ຳຖ້ວມໂລກ (ດັ່ງທີ່ໂນອາແລະລູກຊາຍແຮມໄດ້ສະແດງໃຫ້ເຫັນ), ແຕ່ພຣະເຈົ້າຊົງມີແຜນການໃໝ່ທີ່ຈະຕັດສິນທັມມະຊາດການເຮັດຜິດບາບຂອງມະນຸດ.

## 3. <u>ເຄື່ອງໝາຍຂອງພັນທະສັນຍາທີ່ໄດ້ຕັ້ງໄວ້:</u> (ປະຖົມມະການ 9:12-17)

ພຣະຄຳຂໍ້ 12-17 ໄດ້ບອກຢ່າງແຈ່ມແຈ້ງກ່ຽວກັບຄວາມສຳຄັນໃນຄວາມສັມພັນລະຫວ່າງພຣະເຈົ້າ ແລະສິ່ງທີ່ພຣະອົງຊົງສ້າງ. ຄຳວ່າພັນທະສັນຍາໄດ້ປາກົດຂຶ້ນເຖິງ 5 ເທື່ອໃນພຣະຄຳຕອນນີ້. ພຣະເຈົ້າໄດ້ເຮັດໃຫ້ ພຣະສັນຍາທີ່ພຣະອົງໄດ້ຊົງໃຫ້ໄວ້ໃນ ປະຖົມມະການ 6:18 ນັ້ນສຳເຣັດ. ຜູ້ຂຽນໄດ້ເວົ້າເຖິງຜູ້ທີ່ມີພາກສ່ວນໃນພັນທະສັນຍານີ້ເຖິງ 5 ເທື່ອ. ພຣະຄຳເຫລົ່ານີ້ໄດ້ຊີ້ໃຫ້ເຫັນຢ່າງແຈ້ງຂາວວ່າເປັນພັນທະສັນຍາລະຫວ່າງ ພຣະເຈົ້າແລະມະນຸດ ແລະ "ລວມທັງທຸກສິ່ງທີ່ມີຊີວິດ" ໃນທຸກໆຊົ່ວຄົນ.

ເພາະຄວາມສຳຄັນຂອງເລື່ອງນີ້, ຜູ້ຂຽນພຣະຄັມພີໄດ້ເນັ້ນຈຸດນີ້ ເພື່ອບໍ່ໃຫ້ພວກເຮົາພາດ. ບົດສລຸບເລື່ອງນ້ຳຖ້ວມໂລກໄດ້ເນັ້ນເຖິງຄຸນຄ່າຂອງມະນຸດແລະຢືນຢັນໜ້າທີ່ຂອງມະນຸດຊາດໃນການຮັກສາສິ່ງທີ່ພຣະເຈົ້າໄດ້ຊົງສ້າງໄວ້; ພຣະເຈົ້າຊົງຫ່ວງໃຍເລື່ອງຄວາມອຸດົມສົມບູນຕໍ່ໄປຂອງທຸກຊີວິດໃນແຜ່ນດິນໂລກ. ຜູ້ຂຽນ

ໄດ້ໃຊ້ໂອກາດອະທິບາຍການເປັນມາຂອງຮຸ້ງກິນນ້ຳແລະຄວາມໝາຍຂອງມັນ. ຮຸ້ງກິນນ້ຳໃນຕອນສຸດທ້າຍຂອງຝົນຕົກນັ້ນ ເປັນເຄື່ອງໝາຍເຕືອນເຖິງພັນທະສັນຍາຄັ້ງແລກລະຫວ່າງພຣະເຈົ້າແລະສິ່ງທີ່ຊົງສ້າງໄວ້.

ປະຖົມມະການ 9:15 ອາດຈະເຮັດໃຫ້ບາງຄົນງົງ ເພາະຮຸ້ງກິນນ້ຳເປັນພຽງສິ່ງທີ່ເຕືອນພຣະເຈົ້າເຖິງພັນທະສັນຍາ. ເຖິງຢ່າງໃດກໍດີ, ເໝືອນໃນປະຖົມມະການ 8:1, ພຣະຄຳຂໍ້ນີ້ບໍ່ໄດ້ໝາຍຄວາມວ່າ ພຣະເຈົ້າຈະລືມພັນທະສັນຍາແລະຕ້ອງການໃຫ້ເຕືອນ. ແຕ່ເປັນການຄ້ຳປະກັນ; ເຖິງວ່າຫລາຍໆຊົ່ວຄົນໄດ້ຜ່ານໄປ, ພຣະເຈົ້າຍັງຊົງຮັກສາພັນທະສັນຍາຢ່າງສັດຊື່. ນັບເປັນເຣື່ອງອັສຈັນທີ່ພຣະເຈົ້າໄດ້ໃຊ້ທັມມະຊາດຊຶ່ງເປັນສິ່ງທີ່ພຣະອົງໄດ້ຊົງສ້າງ ໃຫ້ວາດພາບໃນທ້ອງຟ້າກ່ຽວກັບຄວາມສັດຊື່ແລະຄວາມຮັກຂອງພຣະອົງກັບສິ່ງທີ່ຊົງສ້າງໄວ້.

## ຄວາມໝາຍແລະການປະຕິບັດ

ໃນຂະນະທີ່ນ້ຳຖ້ວມໂລກແມ່ນການລົງໂທດຄວາມບາບຂອງມະນຸດໃນສມັຍຂອງໂນອາ, ແຕ່ນ້ຳນັ້ນບໍ່ໄດ້ລຶບລ້າງຄວາມບາບຫລືຄວາມວຸ້ນວາຍອອກໄປຈາກໂລກແລະຈາກຊີວິດຂອງຄົນທົ່ວໄປ. ແຕ່ວ່າ, ຄືໂນອາ, ພວກເຮົາຮູ້ວ່າພຣະເຈົ້າຄຸ້ມຄອງເບິ່ງໂລກນີ້ໂດຍພັນທະສັນຍາທີ່ໄດ້ໃຫ້ກັບມະນຸດແລະສິ່ງທີ່ພຣະອົງຊົງສ້າງ. ພຣະລັກສະນະນີ້ຂອງພຣະເຈົ້າໄດ້ໃຫ້ຄວາມໝັ້ນຄົງແກ່ພວກເຮົາ ຖ້າມກາງຄວາມວຸ້ນວາຍແລະຍັງປະກັນການຊົງເຝົ້າເບິ່ງພວກເຮົາຢູ່ຕລອດເວລາ.

ພຣະອົງຊົງເປັນພຣະເຈົ້າຜູ້ຊົງປະທານແລະປົກປ້ອງພວກເຮົາ. ພຣະອົງໃຫ້ພວກເຮົາເປັນຜູ້ຈັດການຮັບຜິດຊອບຢູ່ໃນໂລກນີ້. ພວກເຮົາຈະຕ້ອງດູແລສິ່ງທີ່ພຣະອົງໄດ້ຊົງສ້າງແລະບອກມະນຸດທົ່ວໄປກ່ຽວກັບພັນທະກິດຂອງພຣະອົງຜູ້ຊົງໃຫ້ພັນທະສັນຍາ. ເຣື່ອງນ້ຳຖ້ວມໄດ້ປະກາດໃຫ້ໂລກຮູ້ວ່າພຣະເຈົ້າຈະຕ້ອງລົງໂທດຄວາມບາບ, ແຕ່ເປົ້າໝາຍຂອງພຣະອົງແມ່ນການຊົງໄຖ່ແລະການສ້າງຂຶ້ນໃໝ່. ພຣະເຈົ້າຊົງສລຸບວ່າ "ເຮົາຈະບໍ່ລືມຄຳໝັ້ນສັນຍາຂອງເຮົາ."

## ຄຳຖາມ

1. ແມ່ນຫຍັງຄືຄວາມສຳຄັນໃນພັນທະສັນຍາເຣື່ອງຄວາມສັມພັນກັບພຣະເຈົ້າ?
2. ທ່ານຈະເຮັດວິທີໃດກ່ຽວກັບການຊົງເອີ້ນໃຫ້ດູແລຮັກສາທຸກໆສິ່ງທີ່ພຣະເຈົ້າຊົງສ້າງໄວ້?
3. ການຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າມີຄວາມໝາຍແນວໃດ?
4. ພຣະສັນຍາຂອງພຣະເຈົ້າແນວໃດທີ່ມີຄວາມໝາຍທີ່ສຸດສຳລັບຕົວທ່ານ?

*ສຄ*

# ບົດຮຽນທີ 11

## ບິດາຂອງຄົນທັງປວງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປະຖົມມະການ 10

**ພູມຫລັງຂອງພຣະຄັມພີ:** ປະຖົມມະການ 10

**ຈຸດສຳຄັນຂອງບົດຮຽນນີ້:** ບອກໃຫ້ຮູ້ວ່າທຸກຊາດເກີດມາຈາກຄອບຄົວດຽວຫລັງນ້ຳຖ້ວມ.

**ຄຳຖາມເພື່ອການຄົ້ນຄວ້າ:** ເປັນຫຍັງປະຖົມມການ 10 ຈຶ່ງບັນທຶກເຊື້ອສາຍລາຍລ່ອງ?

**ຈຸດປະສົງຂອງບົດຮຽນ:** ເພື່ອເຮົາຈະໄດ້ຮູ້ວ່າເຮົາມີເຊື້ອສາຍມາຈາກປະຖົມມະການ 10.

### ບົດນຳ

ເມື່ອເວົ້າເຖິງເຊື້ອສາຍລາຍລ່ອງແລ້ວຫລາຍຄົນເຮົາກໍບໍ່ຄ່ອຍສົນໃຈເທົ່າໃດ ໂດຍສເພາະແມ່ນຄົນໃນສມັຍນີ້ທີ່ມັກເອກະຣາດ ແບບຢູ່ໃຜຢູ່ມັນ ຫລືເວົ້າໄດ້ວ່າ ໃຜຈະເປັນຫຍັງກະຊ່າງ ຂ້ອຍໂອເຄກໍພໍແລ້ວ. ສ່ວນໃນຄວາມຄິດຂອງພວກເຖົ້າແກ່ບູຮານ ຫລືສມັຍຂອງພໍ່ແມ່ເຮົາເພິ່ນມັກຈະເຮັດ Family tree ເພື່ອຈະຮູ້ວ່າຄົນລຸ້ນໃໝ່ຈະຮູ້ວ່າຕົນເອງເປັນໃຜ? ມາຈາກໃສ? ໃຜເປັນບິດາກົກເຄົ້າຂອງວົງຕະກຸນ. ໃນບົດຮຽນວັນນີ້ ພຣະທັມປະຖົມມະການໄດ້ບັນທຶກເຣື່ອງການເປັນມາຂອງມະນຸສໂລກທີ່ບົ່ງບອກວ່າ ມະນຸດທັງຫລາຍມາຈາກຄອບຄົວດຽວກັນ. ເຣື່ອງມີດັ່ງນີ້; ລູກຊາຍຂອງໂນອາສາມຄົນໄດ້ເກີດຫລັງຈາກນ້ຳຖ້ວມໂລກ, ລູກຊາຍຂອງໂນອາມີຊື່ວ່າ ແຊມ (Shem), ຜູ້ຕໍ່ມາມີຊື່ວ່າ ຮາມ (Ham) ແລະອີກຜູ້ນຶ່ງມີຊື່ວ່າ ຢາເຟດ (Japheth). ແລະທັງສາມກາຍເປັນບັນພະບຸຣຸດເຊັ່ນ; ແຊມ (Shem) ເປັນບັນພະບຸຣຸດຂອງຄົນພາກຕາເວັກອອກ. ຮາມ (Ham) ເປັນບັນພະບຸຣຸດຂອງຄົນທົ່ວທະວີບອັຟຣິກາ ແລະ ຢາເຟດ (Japheth) ເປັນບັນພະບຸຣຸດຂອງຄົນຢູໂຣບ, ພາກເໜືອເອເຊັຍ (ກຣີກ). ເມື່ອນັບເບິ່ງເຊື້ອສາຍແລ້ວເຫັນວ່າມີ 70 ຄົນ ແລ້ວແຕກກະຈາຍກັນໄປເປັນເຊື້ອຊາດຕ່າງໆໃນໂລກ.

### 1. ລູກຊາຍຂອງ ຢາເຟດ :(Japhet ) (ປະຖົມມະການ 10:1-5)

ໃນບັນຊີບັນດາລູກຊາຍຂອງຢາເຟດເຫັນວ່າມີ 14 ຄົນ ເຊື້ອສາຍເຫລົ່ານີ້ໄດ້ນາມວ່າ ຄົນທະເລ(maritime) ເພາະພວກເຂົາມີພູມລຳເນົາໃນແຖບອ່າວທະເລ ເມດີເທີເຣນຽນ ລາງເທື່ອຮ້ອງກັນ ທະວີບເອເຊັຍນ້ອຍ ເຊິ່ງປັຈຸບັນນີ້ແມ່ນ ປະເທດເທີກີ ແລະຍັງຮວມໄປເຖິງ ເອເຊັຍພາກຕາເວັນອອກ ແຖວອ້ອມແອ້ມ ທະເລ ແຄສປຽນໃນຂົງເຂດຂອງຕາເວັນອອກກາງ (Middle East). ການທຳມາຫາກິນຂອງພວກເຂົາ ແນ່ ນອນແມ່ນທາງທະເລສາບ.

ພູມລຳເນົາເຫລົ່ານີ້ເຫັນວ່າຫ່າງໄກຈາກກຸງເຢຣູຊາເລັມພໍສົມຄວນ, ແຕ່ລູກຊາຍທັງເຈັດຂອງຢາເຟດຜູ້ເປັນລູກຊາຍຂອງໂນອາທີ່ມີຊື່ວ່າ ໂກເມ, ມາໂກ, ມາດາບ, ຢາບານ, ຢູບານ, ເມເລັກ ແລະຕີຣາດ ທີ່ມີພູມລຳ

ເນົາຕາມແຄມດອນແລະແຄມທະເລ ແລ້ວຕໍ່ມາກໍມີເຊື້ອສາຍຈີນກາຍເປັນຊົນຊາດຕ່າງໆ. ດ້ວຍເຫດນີ້ຄົນທີ່ຢູ່ໃນພາກຕາເວັນອອກກາງຈຶ່ງມີຄວາມຊຳນິຊຳນານໃນການໃຊ້ຊີວິດທາງທະເລ ແລະທະເລກໍເປັນແຫລ່ງເຂົ້າປາອາຫານດ້ວຍຄວາມອຸດົມສົມບູນມາຈົນເຖິງທຸກວັນນີ້. ເວົ້າໄດ້ງ່າຍໆວ່າອາຫານທາງທະເລບໍ່ເຄີຍໝົດຈັກເທື່ອ.

## 2. <u>ລູກຊາຍຂອງຮາມ</u>: (Ham) (ປະຖົມມະການ 10:6-20)

ພຣະເຈົ້າໄດ້ຊົງອວຍພອນລູກຂອງຮາມຜູ້ເປັນລູກຊາຍຂອງໂນອາ ໃຫ້ພວກເຂົາມມີເຊື້ອສາຍເພີ້ມທະວີຂຶ້ນເພີ້ມຂຶ້ນເລື້ອຍໆຈາກຂໍ້ 6 ເຖິງຂໍ້ 19 "*ເຊື້ອສາຍຂອງການາອານໄດ້ແຜ່ກວ້າງອອກໄປຈົນເຂດແດນຂອງພວກເຂົາຮອດຊີໂດນທາງເບື້ອງເມືອງເກຣາ ເມືອງກາຊາ ແລະຂ້າງເມືອງໂຊໂດມ ຮອດເມືອງໂກໂມຣາເມືອງອັດມາ ແລະເຊບົວອິມຮອດເມືອງລາຊາ*" (ຂໍ້ 18-19). ແລະຂໍ້ຕໍ່ໄປບອກອີກວ່າ "*ເຊື້ອສາຍຂອງຮາມຊຶ່ງອາສັຍຢູ່ເປັນໝູ່ ໝວດ ເຜົ່າແລະປະເທດ ແຕ່ລະໝູ່ໝວດປາກເວົ້າພາສາຂອງຕົນເອງ*" (ຂໍ້ 20). ເຮົາສັງເກດເຫັນວ່າພວກລູກຫລານຂອງຮາມໄດ້ທ່ອງທ່ຽວໄປມາສ້າງຄອບຄົວໃນດິນແດນຕ່າງໆໃນຂໍ້ 10-12 ຈຶ່ງເປັນເຫດໃຫ້ມີພາສາຕ່າງປະເທດເກີດຂຶ້ນ. ໃນການເສີມຂະຍາຍດິນແດນພາໃຫ້ມີພາສາແລະສັງຄົມໃໝ່ເກີດຂຶ້ນ ແລະຄວາມບໍ່ເຊື່ອຟັງກໍເກີດຂຶ້ນເຊັ່ນດຽວກັນ, ແຕ່ຫລານຊາຍຊອງຮາມຜູ້ເກ່ງກ້າຜູ້ນຶ່ງກໍສາມາດເຮັດໃຫ້ພວກເຂົາຍອມເຊື່ອຟັງ ແລະຊື່ຂອງລາວຈຶ່ງເປັນທີ່ເວົ້າຢອກກັນໃນກຸ່ມຂອງພວກນາຍພານໃນສມັຍນີ້.

ລູກຊາຍຜູ້ນຶ່ງຂອງຮາມທີ່ຊື່ວ່າກູເຊ ມີລູກຊາຍຊື່ ນິມໂຣດ ເປັນນັກຕໍ່ສູ້ຈົນເລື່ອນຊັ້ນຂຶ້ນມາເປັນຜູ້ປົກຄອງຜູ້ຍິ່ງໃຫຍ່ຢ່າງບໍ່ເຄີຍມີມາກ່ອນ (ຂໍ້ 8-9). ນອກຈາກການປົກຄອງແລ້ວລາວຍັງເປັນນາຍພານທີ່ມີຊື່ສຽງໄປທົ່ວໂລກໃນການລ່າເນື້ອຂອງລາວ, ດ້ວຍເຫດນີ້ພວກນາຍພານສມັຍນີ້ ເມື່ອລ່າເນື້ອໄດ້ແລ້ວຈຶ່ງມັກເວົ້າເຍີ້ຍກັນວ່າ ເກ່ງປານນິມໂຣດເນາະ!.

## 3. <u>ລູກຊາຍຂອງແຊມ</u>: (Shem) (ປະຖົມມະການ 10:21-33)

ແຊມເປັນອ້າຍກົກຂອງຢາເຟດໄດ້ພາລູກຫລານໄປຕັ້ງຖິ່ນຖານແລະກາຍເປັນບັນພະບຸຣຸດທີ່ ອີເບີ ບ່ອນທີ່ເປັນທີ່ມາຂອງອັບຣາຮາມຕາມພາຍຫລັງໃນ (11:20-26; 15). ບັນດາພວກລູກຫລານຂອງແຊມ ແມ່ນເອລາມ, ອັສຊູຣ໌, ອາກປັກສາດ, ລູດ, ແລະອາຣາມ ບຸດຊາຍຂອງອາຣາມຄື ອຸຊ ຮຸນ ເກເທີ ແລະມັສອາກປັກສາດ ເປັນບິດາຂອງເຊລາ ແຜ່ຂະຍາຍດິນແດນໄປເກາະອາຣາບຽນ ຈົນເຖິງເປີເຊັຽ, ເຖິງໄທ ກຣີສ, ເຖິງແມ່ນ້ຳຢູຟຣາຕິສ ແລະຍັງແຜ່ກວ້າງອອກເຖິງທະເລຊາຍຊີເຣັຽອີກ. ການເພີ້ມຂະຫຍາຍຄອບຄົວນີ້ ເຮົາສາມາດເບິ່ງເຫັນສອງຢ່າງຄື; 1. ຖ້າເບິ່ງທາງບວກແລ້ວເປັນວ່າດີ ເພາະພວກລູກຫລານພາກັນຂະຍາຍແຜ່ນດິນອອກໄປຈົນທົ່ວແຜ່ນດິນອັນກວ້າງໃຫຍ່ໄພສານ. 2. ແຕ່ຫາກເບິ່ງທາງລົບແລ້ວເຫັນວ່າ ພວກລູກຫລານພາກັນແບ່ງແຍກ, ແຕກແຍກກັນ ເນື່ອງຈາກວ່າຍິ່ງເຂົາໄປໄກເທົ່າໃດ ເຂົາກໍໄດ້ສ້າງຄອບຄົວກັບຄົນເຂດນັ້ນເມື່ອເປັນເຊັ່ນນັ້ນ ຈຶ່ງເກີດມີການແບ່ງແຍກສັງຄົມ, ແບ່ງແຍກວັທນະທັມ ຄືຄົນອີກກຸ່ມນຶ່ງບໍ່ສາມາດຮັບຮູ້ສັງ

ຄົນອີກກຸ່ມນຶ່ງ ແລະໃນທີ່ສຸດພວກເຂົາກໍເວົ້າບໍ່ເຂົ້າໃຈກັນ ຈຶ່ງເປັນຕົ້ນເຫດໃຫ້ມີພາສາຕ່າງຊາດເກີດຂຶ້ນອີກ ເຣື່ອງນີ້ເຮົາຈະເຫັນໃນບົດຮຽນຕໍ່ໄປ (11:1-9).

ເຮົາໄດ້ເຫັນລູກຂອງໂນອາສາມອ້າຍນ້ອງໄດ້ກາຍເປັນຊົນຊາດທົ່ວພິພົບ, ພວກເຂົາກາຍເປັນປະເທດ, ເປັນຊົນຊາດໃຫຍ່ນ້ອຍຕາມຄວາມຈະເຣີນເຕີບໂຕຂອງຊາດນັ້ນ ແຕ່ບໍ່ມີຈັກຊາດທີ່ພຣະເຈົ້າບໍ່ຮັກ, ພຣະອົງຊົງຮັກຄົນທຸກຊາດທຸກພາສາ ບັນດາລູກຫລານຂອງໂນອາກໍບໍ່ເປັນຄົນດີໝົດທຸກຄົນ, ຫລາຍຄົນກາຍເປັນຄົນບໍ່ເຊື່ອຟັງແລະທໍຣະຍົດຕໍ່ພຣະເຈົ້າ ທັງນີ້ກໍເພາະວ່າເຂົາໄດ້ເຮັດຕາມໃຈຊອບຂອງເຂົາ ແລະເຂົາບໍ່ຮູ້ວ່າເຂົາໄດ້ເປັນລູກຫລານຂອງໂນອາເປັນຄອບຄົວດຽວທີ່ພຣະເຈົ້າໃຫ້ລອດພົ້ນຈາກນ້ຳຖ້ວມ. ສຳລັບເຮົາຫາກເຮົາບໍ່ສົນໃຈເຊື້ອສາຍລາຍລ່ອງເຮົາກໍຈະເປັນຄືຫລານເຫລັນຂອງໂນອາທີ່ບໍ່ຮູ້ທີ່ມາຂອງເຂົາ ຄືເຂົາບໍ່ຮູ້ວ່າເຂົາເປັນເຊື້ອສາຍຂອງໂນອາ.

**<u>ຄຳຖາມ</u>:**

1. ທ່ານເຄີຍສົນໃຈວ່າເຊື້ອສາຍລາຍລ່ອງຂອງທ່ານ ຫລືນາມສະກຸນທ່ານໄດ້ມາແນວໃດບໍ່?
2. ເປັນຫຍັງພຣະຄັມພີຈຶ່ງບັນທຶກຄອບຄົວເຊື້ອສາຍລາຍລ່ອງຂອງໂນອາ?
3. ໂນອາມີລູກຊາຍຈັກຄົນ? ຕໍ່ມາໂນອາມີຫລານຈັກຄົນ?
4. ເມື່ອເບິ່ງຕາມເຊື້ອສາຍຂອງໂນອາແລ້ວເຮົາໄດ້ເຫັນຄວາມຮັກຂອງພຣະເຈົ້າຢ່າງໃດ?
5. ເຮົາຈະເວົ້າເຣື່ອງຄວາມເປັນມາຂອງມະນຸດທີ່ມີພໍ່ຜູ້ດຽວກັນແນວໃດ?

*ຫວ*

# ບົດຮຽນທີ 12
## ພຣະເຈົ້າບໍ່ໃຫ້ສ້າງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປະຖົມມະການ 11:1-9

**ພູມຫລັງຂອງພຣະຄັມພີ:** ປະຖົມມະການ 11:1-9

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງໂຕ້ຕອບມະນຸດທີ່ຈົມຢູ່ໃນຄວາມເຊື່ອພຣະປອມ

**ຄຳຖາມເພື່ອການຄົ້ນຄວ້າ:** ເປັນຫຍັງຄົນເຮົາຈຶ່ງມັກສ້າງຮູບໂຄຣົບ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ປະລະພຣະທີ່ສ້າງດ້ວຍມືມະນຸດ.

### ບົດນຳ.

ຫລັງຈາກການແຜ່ກວ້າງທາງເຊື້ອສາຍຂອງໂນອາໄປທົ່ວພິພົບ ພວກເຂົາກໍກາຍເປັນຄົນຕ່າງດ້າວທ້າວຕ່າງແດນ, ພາສາແລະສັງຄົມວັທນະທັມກໍແຕກຕ່າງກັນໄປ, ການພັດພາກຈາກກັນກໍນັບທະວີຂຶ້ນເລື້ອຍໆ ດັ່ງນັ້ນເຂົາຈຶ່ງຄິດຄົ້ນຫາວິທີເພື່ອບໍ່ໃຫ້ພັດພາກຈາກກັນ ແທນທີ່ຈະອ້ອນວອນຫາພຣະເຈົ້າເພື່ອໃຫ້ພຣະອົງຊ່ອຍຊອກຫາທາງທີ່ດີທີ່ສຸດໃຫ້ເຂົາ. ແຕ່ການທີ່ເຂົາເຮັດແມ່ນຂັດຕໍ່ແຜນການຂອງພຣະເຈົ້າ.

### 1. ແຜນການຂອງເຂົາ : (ປະຖົມມະການ 11:1-4)

ເມື່ອຫວນຄືນຫລັງໃນສມັຍນ້ຳຖ້ວມນັ້ນເຫັນວ່າ " *ໂນອາພ້ອມດ້ວຍພັຣຍາ ແລະລູກຊາຍສາມຄົນຄື ເຊມ ຮາມ ແລະຢາເຟດກັບພັຣຍາຂອງເຂົາໄດ້ພາກັນເຂົ້າໄປໃນເຮືອນຄົນເຫລົ່ານັ້ນພ້ອມທັງສັດທຸກຊະນິດ ສັດປ່າ ສັດບ້ານ ສັດໃຫຍ່ ສັດນ້ອຍ ແລະນົກ ຫນູທຸກຊະນິດແນວລະຄູ່ ບັນດາສັດທີ່ມີລົມຫາຍໃຈກໍພາກັນເຂົ້າຢູ່ໃນເຮືອກັບໂນອາແນວລະຄູ່ໆສັດທັງຫລາຍທີ່ເຂົ້າໄປນັ້ນມີທັງໂຕຜູ້ ແລະໂຕແມ່ທຸກຢ່າງຕ່າງເຂົ້າໄປຕາມທີ່ ພຣະເຈົ້າຊົງສັ່ງແລ້ວພຣະອົງກໍຊົງອັດປະຕູເຮືອ* " (ປະຖົມມະການ 7:13-16). ເຮົາເຫັນວ່າມີແຕ່ຄອບຄົວດຽວ, ເວົ້າພາສາດຽວ, ສັດກໍມີແຕ່ແນວລະຄູ່ ແລະບໍ່ແມ່ນສັດທຸກຢ່າງທີ່ຖືກບັນທຶກໄວ້ ແຕ່ຕົກມາໃນບົດ 10 ເຊື້ອສາຍຂອງລູກຊາຍທັງສາມຂອງໂນອາກໍໄດ້ແຜ່ອອກໄປທົ່ວພິພົບ, ການເພີ້ມຂຍາຍປະຊາກອນ ແລະການເສີມຂຍາຍດິນດອນຕອນຫຍ້າເປັນແຜນການຂອງພຣະເຈົ້າ ດັ່ງທີ່ພຣະອົງໄດ້ອວຍພອນໂນອາຫລັງຈາກນ້ຳແຫ້ງແລ້ວວ່າ "*ໃຫ້ພວກເຈົ້າມີລູກເຕົ້າມາກທະວີຂຶ້ນທົ່ວໂລກເທີ້ນ ສັດທຸກໆຊະນິດໃນໂລກຄືສັດລາກ ສັດເລືອຄານ ສັດໃຫຍ່ ສັດນ້ອຍນົກຫນູ ແລະປູປານາໆຊນິດ ຈະຍ້ານກົວ ແລະຢູ່ໃຕ້ອຳນາດຂອງເຈົ້າແຕ່ບັດນີ້ໄປສັດທຸກໆຊະນິດ ແລະພືດທຸກໆຢ່າງ ພວກເຈົ້າກິນໄດ້ເພາະເຮົາໄດ້ປະທານສິ່ງນັ້ນໃຫ້ເປັນອາຫານແກ່ພວກເຈົ້າ ແຕ່ມີສິ່ງທີ່ເຈົ້າບໍ່ຄວນກິນຄື ເລືອດຊຶ່ງເປັນຫລັກສຳຄັນຂອງຊີວິດ* " (ປະຖົມມະການ 9:2-4).

ວັນເວລາໄດ້ຜ່ານພົ້ນໄປຈົນມາຮອດການຈະເຣີນເຕີບໂຕໂດຍມີພົລເມືອງເພີ້ມຂຶ້ນຕາມຄຳອວຍພອນຂອງ

ພຣະເຈົ້າ, ລູກຫລານຂອງໂນອາທີ່ໄດ້ແຜ່ກວ້າງອອກໄປເລື້ອຍໆ ຈົນບໍ່ຮູ້ວ່າບັນດາພວກລູກຫລານໄປຢູ່ໃສກັນແລະເມື່ອມາຊອກຫາກັນກໍບໍ່ພົບກັນອີກແລ້ວ. ດ້ວຍເຫດນີ້ເຂົາຈຶ່ງຊອກຫາວິທີແກ້ໄຂເພື່ອບໍ່ໃຫ້ພັດພາກຈາກກັນອີກຕໍ່ໄປ ແລະກໍຍັງເປັນການດີທີ່ພຣະເຈົ້າຈະສະເດັດລົງມາຈາກເບື້ອງເທິງແລ້ວທຸກຄົນກໍຈະໄດ້ນະມັສການພຣະອົງນີ້ເປັນຄວາມຄິດອັນທີສອງທີ່ເຂົາຕັ້ງໃຈຈະເຮັດຫໍຄອຍນີ້, ແລ້ວເຂົາຈຶ່ງຕົກລົງກັນດັ່ງນີ້;

" *ພວກເຂົາໄດ້ເວົ້າວ່າ, "ເອົາເທາະ! ພວກເຮົາພາກັນປັ້ນດິນຈີ່ ແລ້ວເຜົາໃຫ້ມັນແຂງດີ" ດັ່ງນັ້ນ ພວກເຂົາຈຶ່ງມີດິນຈີ່ສຳລັບກໍ່ສ້າງ ແລະມີຢາງໃຊ້ຕາງປະທາຍແລ້ວພວກເຂົາເວົ້າວ່າ, "ບັດນີ້ ພວກເຮົາມາພາກັນສ້າງເມືອງຂອງພວກເຮົາ ພ້ອມທັງກໍ່ຫໍຄອຍໃຫ້ມີຍອດສູງຈຸຟ້າ ພວກເຮົາຄວນສ້າງຊື່ສຽງໄວ້ເພື່ອເຮົາຈະບໍ່ໄດ້ພັດພາກຈາກກັນໄປໃນໂລກນີ້"* (ປະຖົມມະການ 11: 3-4). ຄວາມຄິດຂອງຄົນໃນສະໄໝໂບຮານກໍນັບວ່າດີສົມຄວນ ແຕ່ການທີ່ຈະເອົາດິນຈີ່ມາປັ້ນແລ້ວເຜົາໃຫ້ແຂງເພື່ອກໍ່ສ້າງຂຶ້ນນັ້ນກໍເປັນບັນຫາທ້າທາຍຢ່າງໜັກແຕ່ເຂົາກໍຕົກລົງປົງໃຈພາກັນສ້າງຫໍຄອຍທີ່ມີຊື່ວ່າ ຫໍຄອຍເມືອງບາເບນ. ຄວາມຄິດຂອງມະນຸດຄັ້ງນີ້ບໍ່ເປັນທີ່ພໍພຣະທັຍຂອງພຣະເຈົ້າ ເພາະວ່າພຣະເຈົ້າອວຍພອນແລະຕ້ອງການໃຫ້ມີຜູ້ຄົນຢູ່ທຸກບ່ອນໃນແຜ່ນດິນໂລກຂອງພຣະອົງ ແຕ່ມະນຸດພັດຄິດວ່າຈະບໍ່ອອກໄປຈາກກັນ ເພາະບໍ່ຢາກພາກຈາກກັນ.

## 2. <u>**ພຣະເຈົ້າຕອບແຜນຂອງເຂົາ**</u>: (ປະຖົມມະການ 11:5-9)

ຫລາຍເທື່ອພວກເຮົາມັກຈະເອົາຄວາມຮູ້, ເອົາຄວາມສາມາດ, ເອົາຄວາມສລາດຫລັກແຫລມມາວາງແຜນການຕ່າງໆເຮັດງານຂອງພຣະເຈົ້າ ດ້ວຍເຮົາລືມຄິດໄປວ່າງານທີ່ເຮົາເຮັດບໍ່ແມ່ນງານຂອງເຮົາ ແຕ່ແມ່ນງານຂອງພຣະອົງຕ່າງຫາກ. ດັ່ງນັ້ນເມື່ອເປັນງານຂອງພຣະອົງເຮົາສົມຄວນຈະໄປປຶກສາກັບພຣະອົງດ້ວຍການເຂົ້າເຝົ້າອ້ອນວອນ ແລະເມື່ອໄດ້ຄຳຕອບແລ້ວຈຶ່ງມາວາງແຜນການທີ່ພຣະອົງຊົງສັ່ງ. ຄົນບາບີໂລນໃນສະໄໝບູຮານນັ້ນພາກັນສ້າງຫໍຄອຍເພື່ອສອງເຫດຜົນທີ່ກ່າວມາຂ້າງເທິງ ຄືເຂົາຢາກຊ່ອຍຕົນເອງ ແລະຊ່ອຍໃຫ້ພຣະເຈົ້າສະດວກໃນການສະເດັດມາໃຫ້ມະນຸດນະມັສການ ຄືຫວັງໃຈຈະໃຫ້ພຣະອົງສະເດັດລົງມາຕາມຫໍຄອຍທີ່ສູງຈຸຟ້າ. ເຮົາເຫັນແລ້ວວ່າຄວາມຄິດຂອງມະນຸດຂັດກັນກັບແຜນການຂອງພຣະເຈົ້າ, ພຣະເຈົ້າຢາກໃຫ້ມະນຸດແຜ່ຂຍາຍອອກໄປທົ່ວມຸມໂລກ ແຕ່ຝ່າຍມະນຸດບໍ່ຢາກຫ່າງໄກກັນ ເພາະຢ້ານຫລົງທາງກັບຄືນມາຫາກັນ.

" *ພຣະອົງຊົງກ່າວວ່າ, "ບັດນີ້ມະນຸດທ້ອນໂຮມກັນເປັນອັນນຶ່ງອັນດຽວ ເຂົາເວົ້າພາສາດຽວກັນ ນີ້ກໍເປັນພຽງຂັ້ນເລີ້ມຕົ້ນທີ່ເຂົາໄດ້ກະທຳມາ ໃນຂັ້ນຕໍ່ໄປ ພວກເຂົາກໍຈະສາມາດເຮັດທຸກສິ່ງທຸກຢ່າງທີ່ເຂົາປາຖນາຢາກເຮັດ ສະນັ້ນ ເຮົາຕ້ອງລົງໄປເຮັດໃຫ້ພາສາຂອງເຂົາແຕກຕ່າງກັນ ເພື່ອພວກເຂົາຈະເວົ້າບໍ່ເຂົ້າໃຈກັນອີກ" ແລ້ວພຣະຜູ້ເປັນເຈົ້າຊົງກະທຳໃຫ້ພວກເຂົາພັດພາກຈາກກັນໄປຢູ່ທົ່ວທຸກແຫ່ງໃນໂລກ ພວກເຂົາຈຶ່ງເຊົາສ້າງເມືອງນັ້ນ* " ( ປະຖົມມະການ 11: 6-8).

ໃນຂໍ້ 7 ໃຊ້ຄຳວ່າ (ເຮົາ) "*ເຮົາຕ້ອງລົງໄປ* " ມີຄວາມໝາຍວ່າ ອົງພຣະຜູ້ເປັນເຈົ້າຮ່ວມກັບຝູງເທວະດາຂອງພຣະອົງສະເດັດລົງຈາກສວັນມາຍັງໂລກມະນຸດ ແຕ່ບໍ່ແມ່ນສະເດັດລົງມາຕາມຫໍຄອຍທີ່ເຂົາສ້າງນັ້ນ ເພາະ

ວ່າພຣະເຈົ້າແລະຝູງເທວະດາບໍ່ຈຳເປັນຕ້ອງໄຕ່ຂັ້ນໄດລົງມາແຕ່ຢ່າງໃດ ດ້ວຍເຫດນີ້ຫໍບາເບນນອກຈາກບໍ່ມີຄວາມໝາຍຕໍ່ພຣະອົງແລ້ວຍັງເປັນການຂັດຕໍ່ແຜນການພຣະອົງ, ເມື່ອຂັດຕໍ່ແຜນການພຣະອົງໆກໍຕ້ອງເຮັດໃຫ້ສິ່ງເຫລົ່ານັ້ນສລາຍໄປຄື; " *ໃຫ້ພວກເຂົາພັດພາກຈາກກັນໄປຢູ່ທົ່ວທຸກແຫ່ງໃນໂລກ ພວກເຂົາຈຶ່ງເຊົາສ້າງເມືອງນັ້ນ* " ( ຂໍ້ 8).

ການຕັດສິນໃຈຂອງພຣະເຈົ້າແມ່ນຖືກຕ້ອງ ແລະເທວະດາຂອງພຣະອົງກໍເຫັນດີເຫັນພ້ອມກັບພຣະອົງ ແຕ່ມະນຸດຕ່າງຫາກທີ່ບໍ່ເຂົ້າໃຈນ້ຳພຣະທັຍພຣະອົງ. ເພື່ອຄວາມເຂົ້າໃຈ ຂ້າພະເຈົ້າຂໍນຳທ່ານໄປຍັງເຣື່ອງຂອງອັບຣາມກັບພຣະເຈົ້າສົນທະນາກັນວ່າ " *ອັບຣາມເອີຍ, ຢ່າສູ່ຢ້ານ ເຮົາເປັນແຜ່ນເຫລັກຕ້ານທານເພື່ອປົກປັກຮັກສາເຈົ້າ ເຮົາຈະປະທານບຳເຫນັດອັນຍິ່ງໃຫຍ່ໃຫ້ແກ່ເຈົ້າ" ອັບຣາມຂາບທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ພຣະອົງຢາກປະທານບຳເຫນັດໃຫ້ແກ່ຂ້າພຣະອົງເຮັດຫຍັງ ເພາະຂ້າພຣະອົງບໍ່ມີລູກຜູ້ຈະສືບມໍຣະດົກຈາກຂ້າພຣະອົງມີແຕ່ຜູ້ດຽວກໍຄື ເອລີເອເຊີຊາວດາມັສ ພຣະອົງບໍ່ໄດ້ຊົງປະທານລູກໃຫ້ຂ້າພຣະອົງ ແລະຜູ້ນຶ່ງໃນຈຳນວນຂ້າໃຊ້ກໍຈະເປັນຜູ້ໄດ້ຮັບມໍຣະດົກຂອງຂ້າພຣະອົງ*" (ປະຖົມມະການ 15:1-3). ແປວ່າຝ່າຍພຣະເຈົ້າຈະໃຫ້ທຸກສິ່ງທຸກຢ່າງແກ່ອັບຣາຮາມ, ສ່ວນຝ່າຍອັບຣາຮາມນັ້ນ ທຸກສິ່ງທຸກຢ່າງບໍ່ມີຄວາມໝາຍ ເພາະວ່າເມື່ອເພິ່ນຕາຍໄປເພິ່ນກໍບໍ່ມີຜູ້ໃດສືບມູນມໍຣະດົກໃນການມີທຸກສິ່ງທຸກຢ່າງ.

ອົງພຣະຜູ້ເປັນເຈົ້າກໍເຊັ່ນດຽວກັນ ພຣະອົງໄດ້ສ້າງແຜ່ນດິນໂລກແລະແຜ່ນດິນສວັນຢ່າງກວ້າງໃຫຍ່ໄພສານຫາກພວກລູກຂອງພຣະອົງບໍ່ໄປຢູ່ ແຜ່ນດິນນັ້ນຈະມີຄວາມໝາຍອັນໃດ? ດ້ວຍເຫດນີ້ແຫລະພຣະອົງແລະຝູງເທວະດາຂອງພຣະອົງຈຶ່ງເຮັດໃຫ້ເຂົາເວົ້າບໍ່ເຂົ້າໃຈກັນ, ພັດພາກຈາກກັນ ແລະເຊົາສ້າງຫໍບາເບນແລ້ວພາກັນແຜ່ຂຍາຍອອກໄປຢູ່ທຸກບ່ອນໃນໂລກທີ່ພຣະອົງຊົງສ້າງໄວ້ສຳລັບລູກຂອງພຣະອົງ.

<u>**ຄຳຖາມ**:</u>

1. ເປັນຫຍັງເຂົາຈຶ່ງພາກັນຄຶດຢາກສ້າງຫໍບາເບນ?
2. ແຜນການການສ້າງຂອງເຂົາມີຫຍັງແດ່?
3. ການສ້າງຫໍບາເບນດີ ແລະບໍ່ດີແນວໃດ?
4. ເປັນຫຍັງພຣະເຈົ້າບໍ່ໃຫ້ເຂົາສ້າງຫໍບາເບນ?

*ຫວ*

# ບົດຮຽນທີ 13
# ເລືອກບ່ອນຢູ່ໃຫ້ລູກຂອງພຣະອົງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປະຖົມມະການ 11:10-32
**ພູມຫລັງຂອງພຣະຄັມພີ:** ປະຖົມມະການ 11:10-32
**ຈຸດສຳຄັນຂອງບົດຮຽນນີ້:** ທຸກຢ່າງເປັນໄປຕາມນ້ຳພຣະທັຍພຣະເຈົ້າຜູ້ຊົງຣິດ
**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະຮູ້ວ່າພຣະເຈົ້າຊົງເຮັດໄດ້ທຸກຢ່າງແນວໃດ?
**ຈຸດປະສົງຂອງບົດຮຽນ:** ເພື່ອບອກໃຫ້ຮູ້ວ່າພຣະເຈົ້ານັ້ນຊົງຣິດໃນອະດີດແລະໃນຊີວິດເຮົາ.

## ບົດນຳ.

ເຊື້ອສາຍຂອງແຊມຜູ້ເປັນລູກຊາຍຂອງໂນອາ ໄດ້ນຳມາເຖິງສມັຍພຣະເຈົ້າເອີ້ນອັບຣາຮາມໃຫ້ອອກຈາກບ້ານເຮືອນຂອງພໍ່ແມ່ ແລະຍົກຍ້າຍໄປບ່ອນທີ່ບໍ່ເຄີຍຮູ້ເຫັນມາກ່ອນ ແລະອັບຣາຮາມກໍໄປຕາມທີ່ພຣະເຈົ້າສັ່ງໄປ.

ມີເຣື່ອງເລົ່າວ່າ ໃນທ້າຍປີ 1800 ມີຍິງນຶ່ງຊື່ ເອມີ ຄາມິໂກ, ລາວບໍ່ເຄີຍຄິດເລີຍວ່າຈະເປັນສາສນາທູດ (missionary) ລາວເກີດໃນຄອບຄົວອຸດົມສົມບູນ ແຕ່ເມື່ອພໍ່ຂອງລາວເສັຽຊີວິດໄປຖານະຄອບຄົວກໍປ່ຽນແປງໄປກາຍເປັນຄົນຍາກຈົນ. ວັນນຶ່ງລາວຍ່າງຜ່ານຄົນຂໍທານແລ້ວໄດ້ຍິນພຣະສຸຣະສຽງເອີ້ນລາວໃຫ້ອອກຈາກບ້ານໄປຮັບໃຊ້ພຣະອົງທີ່ອິນເດັຽ, ເມື່ອນັ້ນລາວໄດ້ຕັດສິນໃຈລົງເຮືອໄປອິນເດັຽແລ້ວເລີ້ມຕົ້ນ ປະກາດເຣື່ອງຂອງພຣະເຈົ້າເປັນເວລາ 56 ປີ ແລ້ວກໍລົ້ມປ່ວຍ ແຕ່ຍັງຮັບໃຊ້ພຣະເຈົ້າອີກ 20 ປີ. ມີຄົນຈຳນວນຫລວງຫລາຍເປັນໝື່ນໆເຊື່ອພຣະເຈົ້າຍ້ອນການປະກາດຂອງລາວ, ເມື່ອພຣະເຈົ້າຊົງເອີ້ນແລ້ວພຣະເຈົ້າກໍໃຫ້ກຳລັງວັງຊາ ແມ່ນແຕ່ປ່ວຍຊະຣາກໍຍັງມີກຳລັງວັງຊາໃນການປະກາດ, ສິ່ງສຳຄັນແມ່ນເຮົາຈະຕ້ອງຕອບພຣະເຈົ້າວ່າ ຂ້ານ້ອຍຈະໄປ.

## 1. ເຊື້ອສາຍຂອງແຊມ: (ປະຖົມມະການ 11:10-26)

ເຣື່ອງຂອງເຊື້ອສາຍຂອງແຊມຕອນນີ້ແມ່ນເນັ້ນໜັກໃສ່ພວກລູກແລະຫລານເທົ່ານັ້ນຈະບໍ່ເວົ້າຮວມເຖິງພວກຍາດພີ່ນ້ອງອື່ນໆ ທັງນີ້ກໍເພື່ອຢາກໃຫ້ເຮົາຮູ້ເຖິງທີ່ມາຂອງອັບຣາຮາມ ວ່າເພິ່ນແມ່ນເຊື້ອສາຍຂອງແຊມລູກຊາຍຂອງໂນອາ. ດັ່ງນັ້ນເມື່ອຮວມພວກລູກແລະຫລານຂອງແຊມແລ້ວເຫັນວ່າມີຈຳນວນໜ້ອຍກວ່າລາຍຊື່ທັງໝົດຂອງເຊື້ອສາຍໂນອາ ເພາະບໍ່ນັບພວກຍາດພີ່ນ້ອງອື່ນໆອີກ. ເຣື່ອງລິເລີ້ມເປັນດັ່ງນີ້; ສອງປີຫລັງຈາກນ້ຳຖ້ວມນັ້ນແຊມມີອາຍຸຮ້ອຍປີພໍດີຈຶ່ງມີລູກຊາຍອີກຜູ້ນຶ່ງທີ່ມີຊື່ວ່າ(ອາກປັກສາດ) ແລະຈາກນັ້ນ ຊ່ວງລະຍະອີກ 500 ປີ ທີ່ແຊມຍັງມີຊີວິດຢູ່ເພິ່ນກໍມີລູກຍິງແລະລູກຊາຍອີກຫລາຍຄົນ (ຂໍ້ 10-11).

ນັບວ່າແຊມໄດ້ສືບເຊື້ອສາຍມາຈາກໂນອາຜູ້ເປັນພໍ່ແທ້ໆ ເພາະວ່າໃນສມັຍຂອງໂນອານັ້ນ ເພິ່ນກໍໄດ້ລູກຊາຍທັງສາມຄື; ແຊມ, ຮາມ ແລະຢາເຟດ ຕອນເພິ່ນອາຍຸ 500 ປີ (ປຖກ 5: 32) ແລະໂນອາເຖິງແກ່ກັມຕອນເພິ່ນມີອາຍຸ 950 ປີ (ປຖກ 9:29) ເມື່ອຮວມອາຍຸຂອງໂນອາແລ້ວເທົ່າກັບສິບຊົ່ວຄົນໃນສມັຍນີ້.

ຈາກປະຖົມມະການ 11:12-23 ເຫັນວ່າແມ່ນເຊື້ອສາຍວົງຕະກຸນຂອງແຊມຢ່າງຍືດຍາວພໍສົມຄວນ ດັ່ງນັ້ນຈຶ່ງເລັ່ງໄປຫາບອນທີ່ເຮົາຄຸ້ນເຄີຍດັ່ງຕໍ່ໄປນີ້ໃນຂໍ້ 24 ບອກວ່າ " *ເມື່ອນາໂຮ ມີອາຍຸໄດ້ຊາວເກົ້າປີກໍມີບຸດຊາຍຊື່ ເຕຣາ ຕັ້ງແຕ່ໄດ້ເຕຣາມາ ກໍມີຊີວິດຕໍ່ມາອີກຮ້ອຍສິບເກົ້າປີ ແລະມີບຸດຊາຍຍິງຕື່ມອີກຫລາຍຄົນ ເມື່ອເຕຣາມີອາຍຸໄດ້ເຈັດສິບປີ ກໍມີບຸດຊາຍສາມຄົນແລ້ວຄື ອັບຣາມ ນາໂຮຣ໌ ແລະຮາຣານ* " (ຂໍ້ 24-26). ມາບັດນີ້ເຮົາຮູ້ແລ້ວວ່າ ອັບຣາມ ຫລື ອັບຣາຮາມ ເພາະວ່າເມື່ອເລີ້ມແລກເພິ່ນຊື່ ອັບຣາມ ແລະຕໍ່ມາປ່ຽນເປັນ ອັບຣາຮາມ (ເບິ່ງ ປະຖົມມະການ 17:5). ອັບຣາຮາມແມ່ນລູກຊາຍຂອງເຕຣາ. ນັບຈາກແຊມຈົນມາເຖິງອັບຣາຮາມເປັນເວລານານເຖິງສິບຊົ່ວຄົນ ພຣະເຈົ້າຈຶ່ງເອີ້ນໃຊ້ອັບຣາຮາມ.

## 2. <u>ເຊື້ອສາຍຂອງເຕຣາ</u>: (ປະຖົມມະການ 11: 27-32)

ເຊື່ອແນ່ວ່າມາເຖິງບັດນີ້ ເຣື່ອງເຊື້ອສາຍລາຍລ່ອງຄອບຄົວຂອງໂນອາເປັນທີ່ສົນໃຈສຳລັບທ່ານຫລາຍຂຶ້ນເພາະວ່າໃນເຊື້ອສາຍຂອງເຕຣາຜູ້ເປັນເຊື້ອສາຍຂອງໂນອາຈະກ່າວເຖິງອັບຣາຮາມ ຜູ້ທີ່ພວກເຮົາຮູ້ຈັກດີກວ່າຄົນອື່ນ ເພາະວ່າແມ່ນແຕ່ພຣະຄັມພີໃໝ່ກໍເວົ້າເຖິງອັບຣາຮາມຕັ້ງຫລາຍເທື່ອ. ຫາກເຮົາເບິ່ງຈາກສມັຍໂນອາມາຈົນເຖິງສມັຍເຕຣາແລະຮອດອັບຣາຮາມມັນເປັນຄືທໍ່ບາເບນທາງປົ້ນເອົາໃຫຍ່ໄວ້ເທິງແລະຈອມແຫລມໄວ້ລຸ່ມ ຫລືເປັນຄືເຄື່ອງຕອງນ້ຳມັນ ທາງເທິງໃຫຍ່ທາງລຸ່ມກໍນ້ອຍຈົນເປັນຮູນ້ອຍເພື່ອໃຫ້ສິ່ງທີ່ຕ້ອງການລົງໃສ່ບ່ອນໃດບ່ອນນຶ່ງໂດຍບໍ່ຕົກເຮັ່ຽເສັ່ຽຫາຍ.

ເຕຣາເປັນພໍ່ຂອງອັບຣາຮາມຜູ້ມີສາຍານາມວ່າບິດາແຫ່ງຄວາມເຊື່ອ ເພາະຄວາມເຊື່ອເພິ່ນນັ້ນເກີນກວ່າສິ່ງທີ່ຄິດເຖິງ. ກ່ອນອື່ນເຮົາຈະມາເວົ້າກັນເຖິງການເປັນມາຂອງເພິ່ນສາກ່ອນ, ເຣື່ອງມີຢູ່ວ່າທ່ານເຕຣາຜູ້ເປັນພໍ່ຂອງເພິ່ນນັ້ນ ໃນເມື່ອເພິ່ນມີອາຍຸ 70 ປີ ເພິ່ນໄດ້ລູກຊາຍສາມຄົນຕໍ່ໆກັນມາ. " *ເມື່ອເຕຣາມີອາຍຸໄດ້ເຈັດສິບປີ ກໍມີບຸດຊາຍສາມຄົນແລ້ວຄື ອັບຣາມ ນາໂຮ ແລະຮາຣານ* " (ຂໍ້ 26). ຄອບຄົວຂອງເຕຣາມີພູມລຳເນົາທີ່ ເມືອງ ອູເຣ (Ur) ບ່ອນທີ່ອັບຣາຮາມກຳເນີດ, ເມື່ອອັບຣາຮາມໃຫຍ່ແລ້ວເພິ່ນກໍແຕ່ງງານກັບນາງຊາຣາຍຜູ້ເປັນນ້ອງສາວ ແຕ່ນາງເປັນລູກຄົນລະແມ່ ຫລືເປັນລູກເມັ່ຽນ້ອຍຂອງເຕຣາພໍ່ຂອງເພິ່ນ (20:12). ແຕ່ນາງຊາຣາຍບໍ່ມີລູກເພາະນາງເປັນຍິງໝັນ " *ອັບຣາມ ແລະນາໂຮຣ໌ຕ່າງກໍໄດ້ແຕ່ງງານ ພັຣຍາຂອງອັບຣາມຊື່ ຊາຣາຍ ພັຣຍາຂອງນາໂຮຣ໌ຊື່ ມິລະກາ ມິລະກາເປັນບຸດຕຣີຂອງຮາຣານ ຮາຣານເປັນບິດາຂອງມິລະກາ ແລະອິສກາ ນາງຊາຣາຍບໍ່ມີບຸດເພາະນາງເປັນຫມັນ* " (ຂໍ້ 29-30).

ເນື່ອງຈາກຄວາມຂາດແຄນເຂົ້າປາອາຫານ ເຕຣາຈຶ່ງພາກພວກລູກຊາຍທັງຫລາຍ, ພ້ອມດ້ວຍພວກລູກໃພ້ແລະຫລານພາກັນຍົກຍ້າຍໄປການາອານແລະຢູ່ທີ່ນັ້ນຫລາຍປີຈົນເຕຣາໄດ້ເສັ່ຽຊີວິດລົງທີ່ນັ້ນ "*ເຕຣາພ້ອມບຸດຊາຍຄື ອັບຣາມກັບຫລານຊາຍຄືໂລດບຸດຊາຍຂອງຮາຣານ ແລະຊາຣາຍພັຣຍາຂອງອັບຣາມໄດ້ພາກັນ*

*ຫນີຈາກເມືອງອູຣ໌ ປະເທດຄັນເດອາເຂົ້າໄປອາໄສຢູ່ໃນປະເທດການາອານພວກເຂົາພາກັນໄປເຖິງເມືອງ ຮາຣານແລະຕັ້ງຖິ່ນຖານຢູ່ທີ່ນັ້ນ ເຕຣາໄດ້ເຖິງແກ່ກັມຢູ່ທີ່ນັ້ນ ເມື່ອອາຍຸໄດ້ສອງຮ້ອຍຫ້າປີ* " (ຂໍ້ 31-32).

ການຍົກຍ້າຍບ້ານເຮືອນເປັນແຜນການຂອງພຣະເຈົ້າ ເພາະພຣະເຈົ້າຊົງຮູ້ດີວ່າບ່ອນໃດເໝາະສົມສຳລັບ ລູກຂອງພຣະອົງ ແລະພຣະເຈົ້າກໍມີແຜນການໃຫ້ລູກຂອງພຣະອົງໄປຢູ່ທຸກບ່ອນທີ່ແຜ່ນດິນຂອງພຣະອົງທີ່ ໄດ້ສ້າງດັ່ງທີ່ໄດ້ຮຽນກັນມາແລ້ວໃນອາທິດແລ້ວ. ແຜ່ນດິນການາອານເປັນເຂດແດນຂອງພວກຟີລິສຕິນ ຊຶ່ງ ຢູ່ພາກຕາເວັນຕົກຂອງແມ່ນ້ຳຈໍແດນ ແລະແຜ່ນດິນນີ້ແຫລະທີ່ຊາວອິສຣາເອນຖືວ່າເປັນແຜ່ນດິນພັນທະສັນ ຍາທີ່ພຣະເຈົ້າຈະມອບໃຫ້ ດັ່ງທີ່ເຫັນໃນສມັຍໂຢຊວຍເຮັດເສິກສົງຄາມຕໍ່ສູ້ຍາດເອົາດິນແດນນີ້ ເພາະເຫັນ ວ່າເປັນແຜ່ນດິນອຸດົມສົມບູນ. ໃນພຣະທັມອົບພະຍົບ 16 ບອກວ່າ ຊາວອິສຣາເອນໄດ້ວົນວຽນໃກ້ໆແຜ່ນ ດິນການາອານເປັນເວລາ 40 ປີ (ອົບພະຍົບ 16:35). ແລະຕົກມາພຣະທັມຈົດບັນຊີອິສຣາເອນກໍສົ່ງພວກ ນັກສືບລັກເຂົ້າໄປແຜ່ນດິນການາອານແລະເຫັນວ່າເປັນແຜ່ນດິນທີ່ອຸດົມສົມບູນ (ອ່ານຈົດບັນຊີ 13:27).

ບ່ອນໃດອຸດົມສົມບູນ ພຣະອົງຈະໃຫ້ລູກຂອງພຣະອົງໄດ້ຢູ່ທີ່ນັ້ນ ເຖິງແມ່ນວ່າມີຄົນຢູ່ກ່ອນແລ້ວກໍຕາມພຣະ ເຈົ້າກໍຈະຊົງຍົກຍ້າຍເຂົາອອກແລະມອບໃຫ້ລູກຂອງພຣະອົງ ເພາະວ່າແຜ່ນດິນໂລກແລະແຜ່ນດິນສວັນ ເປັນຂອງພຣະອົງ.

**<u>ຄຳຖາມ</u>**:

1. ເປັນຫຍັງແຊມຈຶ່ງພາພວກລູກຊາຍແລະລູກໃພ້ຍົກຍ້າຍ?

2. ເປັນຫຍັງພຣະເຈົ້າຈຶ່ງເອີ້ນໃຊ້ອັບຣາຮາມ?

3. ແມ່ນຫຍັງເຮັດໃຫ້ພວກ ສາສານາທູດ (ມິດຊັນແນຣີ) ອອກໄປທົ່ວໂລກ?

4. ເປັນຫຍັງຄົນໃສສມັຍບູຮານ ຕົວຢ່າງເຊັ່ນ; ໂນອາ, ລູກທັງສາມຂອງໂນອາ ຈົນເຖິງອັບຣາຮາມຈຶ່ງມີອາ ຍຸຍືນຍາວແທ້?

5. ດ້ວຍເຫດໃດພຣະເຈົ້າຈຶ່ງໃຫ້ຄອບຄົວແຊມເຂົ້າໄປຢູ່ແຜ່ນດິນ ການາອານ.

*ທວ*

# ບົດຮຽນອີສເຕີ
# <u>ອຸ່ນໃຈເມື່ອໄດ້ຟັງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 24: 1-6, 13-35

**<u>ພູມຫລັງຂອງພຣະຄັມພີ:</u>** ລູກາ 24

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ບອກໃຫ້ຮູ້ວ່າພຣະເຢຊູອະທິບາຍພຣະທັມໃຫ້ສາວົກສອງຄົນຟັງ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ການຟື້ນພຣະຊົນມີຄວາມສຳຄັນອັນໃດຕໍ່ພວກເຮົາ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອບອກໃຫ້ຮູ້ວ່າການຟື້ນພຣະຊົນຊ່ອຍໃຫ້ເຮົາເຂົ້າໃຈຄຳສອນຂອງພຣະອົງຫລາຍຂຶ້ນ.

## <u>ບົດນຳ</u>

ເມື່ອພຣະເຢຊູສິ້ນພຣະຊົນທີ່ໄມ້ກາງແຂນແລ້ວ ພວກສາວົກກໍພາກັນນ້ອຍອົກນ້ອຍໃຈຈົນທໍ້ໃຈແທບສລາຍ ເພາະພວກສາວົກຄິດວ່າໄດ້ເສັຽພຣະອົງໄປແລ້ວ ແລະການເສັຽພຣະອົງໄປນັ້ນນັບວ່າເປັນການສູນເສັຽອັນຍິ່ງໃຫຍ່ ແລະເມື່ອເຂົາໄດ້ຍິນຂ່າວຈາກພວກແມ່ຍິງແລ້ວຈຶ່ງພາກັນອຸ່ນໃຈຂຶ້ນຫລາຍ.

### 1. <u>ຄຳສອນພຣະເຢຊູເປັນຈິງ:</u> (ລູກາ 24:1-6ກ)

ຄົນຈຳນວນຫລວງຫລາຍໃນໂລກນີ້ຮູ້ວ່າພຣະເຢຊູສິ້ນພຣະຊົນທີ່ໄມ້ກາງແຂນ ແຕ່ບໍ່ແມ່ນໝົດທຸກຄົນຮູ້ວ່າດ້ວຍເຫດໃດພຣະອົງຈຶ່ງຍອມຕາຍທີ່ໄມ້ກາງແຂນ, ສ່ວນສາວົກຂອງພຣະອົງນັ້ນຮູ້ດີວ່າພຣະອົງຊົງຍອມຕາຍທີ່ໄມ້ກາງແຂນ ເພື່ອແທນຄວາມຜິດບາບຂອງທຸກຄົນທີ່ຍອມຮັບເຊື່ອເອົາພຣະອົງມາເປັນພຣະຜູ້ຊ່ອຍໃຫ້ພົ້ນ. ເຖິງປານນັ້ນພວກສາວົກຍັງບໍ່ເຂົ້າໃຈຢ່າງຄັກແນ່ກ່ຽວກັບຄຳສອນຂອງພຣະອົງ ແລະຈົນມາເຖິງປານນີ້ກໍຍັງບໍ່ມີໃຜເຂົ້າໃຈຢ່າງຄັກແນ່ ເພາະວ່າພຣະທັມຂອງພຣະອົງເລິກໄປກວ່າສະຕິປັນຍາຂອງມະນຸດຈະຂຸດເຖິງໄດ້. ວັນທີ່ພຣະເຢຊູຊົງສິ້ນພຣະຊົນນັ້ນໄດ້ມີຊາຍຜູ້ນຶ່ງ (ຄາດວ່າພຣະເຈົ້າຈັດຕຽມລາວ) ມີຄວາມກ້າຫານມາຂໍເອົາພຣະສົບຂອງພຣະອົງໄປຝັງໄວ້ທີ່ອຸບໂມງ "*ມີຊາຍຄົນນຶ່ງຊື່ ໂຢເຊບ ເປັນສະມາຊິກແຫ່ງສານສູງສຸດ ທ່ານເປັນຄົນດີແລະຄົນສັດຊື່ ທ່ານຜູ້ນີ້ບໍ່ໄດ້ເຫັນດີຕາມມະຕິແລະການເຮັດຂອງເຂົານັ້ນ ທ່ານເປັນໄທບ້ານອາຣີມາທາຍຊຶ່ງເປັນບ້ານຂອງຊາດຢິວ ທັງເປັນຜູ້ຄອຍຖ້າຣາຊອານາຈັກຂອງພຣະເຈົ້າ ທ່ານຜູ້ນີ້ໄດ້ເຂົ້າໄປຫາປີລາດຂໍເອົາພຣະສົບພຣະເຢຊູ ແລະເມື່ອໄດ້ອັນເຊີນພຣະສົບລົງແລ້ວ ທ່ານກໍເອົາຜ້າປ່ານຫໍ່ຫຸ້ມໄວ້ ແລ້ວອັນເຊີນພຣະສົບໄປບັນຈຸໄວ້ໃນອຸບໂມງ ທີ່ສະກັດໄວ້ໃນຫີນຊຶ່ງຍັງບໍ່ໄດ້ວາງສົບໃຜຈັກເທື່ອ*" ລູກາ 23: 50-53).

ວັນສະບາໂຕ (ວັນເສົາ) ແມ່ນຊາດຢິວຮັກສາກົດມາແຕ່ໃດໆ (ເບິ່ງພຣະທັມ ອົບພະຍົບ 31:12-18) ແມ່ນ

ໃຫ້ຄົນແລະສັດພັກຜ່ອນ ຫລືເປັນວັນທີ່ທຸກຄົນຄວນອຸທິດຕົນເອງໃນການນະມັສການພຣະເຈົ້າ. ດ້ວຍເຫດນີ້ ຊາຍທີ່ມີຊື່ວ່າ ໂຊເຊບຈຶ່ງມາຂໍນຳທາງການເພື່ອເອົາພຣະສົບພຣະເຢຊູລົງຈາກໄມ້ກາງແຂນກ່ອນວັນສະບາໂຕ ຄືກ່ອນຕາເວັນຕົກຂອງແລງວັນສຸກ.

ພຣະທັມລູກາບອກວ່າ "*ແຕ່ຮຸ່ງເຊົ້າວັນຕົ້ນສັປດາ ຜູ້ຍິງເຫລົ່ານັ້ນໄດ້ນຳເອົາເຄື່ອງຫອມທີ່ຈັດໄວ້ນັ້ນມາເຖິງອຸບໂມງ* " (24:1). ຄຳວ່າວັນຕົ້ນສັປດາ ແປວ່າວັນອາທິດຕອນເຊົ້າ ແລະເປັນວັນຖ້ວນສາມທີ່ພຣະສົບພຣະເຢຊູຖືກບັນຈຸໄວ້ໃນອຸບໂມງ, ມີຄົນຖາມກັນວ່າເປັນຫຍັງພວກຜູ້ຍິງຈຶ່ງລັ່ງເລເສັຽເວລາຈົນຮອດວັນຖ້ວນສາມ? ສ່ວນພວກສາວົກກໍພາກັນເຕົ້າໂຮມກັນດ້ວຍຄວາມຢ້ານ. ຄວາມຈິງແລ້ວພວກຜູ້ຍິງເຫລົ່ານີ້ບໍ່ແມ່ນບໍ່ມີໃຈຢາກໄປເຂົ້າເຝົ້າພຣະສົບພຣະເຢຊູ ແຕ່ແມ່ນກົດດັ່ງທີ່ກ່າວມາຂ້າງເທິງຄືກົດຂອງວັນສະບາໂຕ ເພາະວ່າວັນສະບາໂຕຈະເລີ້ມຕົ້ນຈາກຕາເວັນຕົກໃນແລງວັນສຸກຈົນເຖິງຕາເວັນຕົກຂອງແລງວັນເສົາ ແລະເມື່ອຕາເວັນຕົກບ້ານເມືອງຈະມີແຕ່ຄວາມມືດ ເພາະສມັຍນັ້ນບໍ່ມີໄຟຟ້າຄືສມັຍນີ້ ດ້ວຍເຫດນີ້ພວກແມ່ຍິງເຫລົ່ານີ້ບໍ່ມີທາງເລືອກນອກຈາກຈະພາກັນໄປອຸບໂມງໃນເຊົ້າຂອງວັນຕົ້ນສັປດາ (ວັນອາທິດ) ແຕ່ພວກແມ່ຍິງອົດໃຈໄວ້ຖ້າຈົນຮຸ່ງແຈ້ງບໍ່ໄດ້ ຈຶ່ງພາກັນໄປແຕ່ເຊົ້າມືດ (ໂຢຮັນ 20:1). ໂດຍຕັ້ງໃຈວ່າຈະໄປທົດສົງພຣະສົບພຣະເຢຊູ.

ເມື່ອເຂົາໄປຮອດຍັງອຸບໂມງ ເຂົາໄດ້ເຫັນສິ່ງທີ່ບໍ່ຄາດຝັນເກີດຂຶ້ນຄືຫີນແຜ່ນໃຫຍ່ທີ່ອັດປາກອຸບໂມງທີ່ເຂົາຄິດວ່າເປັນບັນຫາໃຫຍ່ນັ້ນໄດ້ຖືກກີ້ງອອກແລ້ວ, ແລະພວກເຂົາກໍເຫັນເທວະດາສອງຕົນແປງຮ່າງເປັນມະນຸດ ຫລັກສະນະຂອງຊາຍສອງຄົນ ນຸ່ງເຄື່ອງອັນງົດງາມຈົນເຫລື້ອມຕາ ໄດ້ປາກົດຕົວກັບເຂົາ ແລະເວົ້າກັບເຂົາວ່າ "*ພວກນາງຊອກຄົນເປັນໃນໝູ່ຄົນຕາຍເຮັດຫຍັງ ພຣະອົງບໍ່ໄດ້ຢູ່ທີ່ນີ້ ແຕ່ຊົງບັນດານໃຫ້ເປັນຄືນມາແລ້ວ* " (ລູກາ 24:5-6). ລາງເທື່ອເຮົາຄິດວ່າເຮົາມີບັນຫາໃຫຍ່ຄືພວກແມ່ຍິງຄິດວ່າໃຜຈະກີ້ງຫີນທີ່ອັດປາກອຸບໂມງອອກໃຫ້ພວກເຮົາ? ເຣື່ອງນີ້ເປັນພາບພົດວ່າດ້ວຍຄວາມຮັກ, ຄວາມເຊື່ອ ແລະຄວາມນັບຖືແລ້ວສິ່ງທີ່ຄາດບໍ່ເຖິງກໍຈະເປັນໄປໄດ້, ບັນຫາໃຫຍ່ໃນຊີວິດຂອງເຮົາຫາກເຮົາມີ ຄວາມຮັກ, ຄວາມເຊື່ອ ແລະຄວາມນັບຖືພຣະເຈົ້າຢ່າງຖືກຕ້ອງແລ້ວບັນຫານັ້ນກໍຈະຫາຍໄປເອງ. ຈົ່ງສັງເກດເບິ່ງພວກແມ່ຍິງ ຫລັງຈາກໄດ້ຟັງຖ້ອຍຄຳຂອງເທວະດາທີ່ກ່າວວ່າ "*ຈົ່ງລະນຶກເຖິງຄຳທີ່ພຣະອົງຊົງກ່າວກັບທ່ານທັງຫລາຍ ເມື່ອພຣະອົງຍັງຢູ່ໃນແຂວງຄາລີເລນັ້ນ* " (ຂໍ້ 6). ເມື່ອພວກແມ່ຍິງໄດ້ຍິນແລ້ວຈຶ່ງເຂົ້າໃຈວ່າຄຳສອນຂອງພຣະເຢຊູນັ້ນເກີດເປັນຈິງທຸກຢ່າງ.

## 2. ຄັ້ງທີສອງພົບກັບສາວົກ: (ລູກາ 24:13-27)

ຫລັງຈາກພວກແມ່ຍິງໄດ້ຍິນຄຳບອກເລົ່າຂອງເທວະດາແລະໄປລາຍງານຕໍ່ພວກສາວົກວ່າພຣະເຢຊູຊົງຄືນພຣະຊົນແລ້ວ, ພຣະທັມລູກາໄດ້ເນັ້ນໜັກໃສ່ເຣື່ອງພຣະເຢຊູຊົງປາກົດຕົວຕໍ່ສາວົກສອງຄົນກຳລັງເດີນທາງກັບຈາກເຢຣູຊາເລັມເພື່ອກັບໄປບ້ານເອມາອູດຫລັງຈາກໄປເບິ່ງເຂົາຄຶງພຣະເຢຊູທີ່ໄມ້ກາງແຂນ.

ຄຳວ່າສາວົກສອງຄົນນີ້ບໍ່ໝາຍຄວາມວ່າສາວົກໃນພວກສິບສອງຄົນ ແຕ່ແມ່ນສາວົກທີ່ເຊື່ອແລະຕິດຕາມ

ພຣະເຢຊູທ່າງໆ ແລະພຣະຄັມພີບໍ່ໄດ້ບອກວ່າທັງສອງເປັນຜົວເມັຽກັນ ແຕ່ໃນ Comprehensive Commentary ບອກວ່າທັງສອງເປັນຜົວເມັຽກັນ, ທັງສອງພາກັນຍ່າງໃນລະຍະທາງຣະຫວ່າງເຢຣູຊາເລັມ ແລະບ້ານເອມາອູດນັ້ນປະມານ 7 ເຖິງ 15 ໄມ ອີງຕາມສາສນາສາດແຕ່ລະຄົນປະມານບໍ່ທໍ່ກັນ, ດັ່ງນັ້ນຈຶ່ງ ນັບໄດ້ວ່າເປັນເວລາຫລາຍຊົ່ວໂມງສົມຄວນໃນການເດີນທາງ ເພາະຖນົນຫົນທາງໃນສັຍບູຮານນັ້ນບໍ່ຄືສັມັຍ ນີ້. ວັນນັ້ນເປັນວັນອາທິດຊຶ່ງເປັນວັນຄືນພຣະຊົນ ທັງສອງໄດ້ຍ່າງແລະສົນທະນາກັນເຣື່ອງສິ່ງທີ່ເກີດກັບ ພຣະເຢຊູ. ໃນຂະນະທີ່ເຂົາສົນທະນາກັນຢູ່ນັ້ນພຣະເຢຊູໄດ້ສະເດັດເຂົ້າມາໃກ້ເຂົາ ແລະເດີນທາງຮ່ວມກັບ ເຂົາ (ຂໍ້ 13-15). ເມື່ອເບິ່ງແລ້ວເປັນພາບພິດວ່າ ຖ້າຄຣິສຕຽນພົບກັນສົມຄວນຈະລົມກັນເຣື່ອງ ພຣະເຢຊູ ແລະພຣະອົງກໍຈະຫຍັບເຂົ້າມາໃກ້ແລະສະຖິດກັບເຮົາດ້ວຍ, ຈິງຢູ່ພຣະເຈົ້າຊົງຢູ່ກັບເຮົາສເມີ ແຕ່ເຮົາຄວນ ເຂົ້າໃຈວ່າ ພຣະເຈົ້າຊົງເປັນພຣະວິນຍານ ດັ່ງນັ້ນເມື່ອເຮົາກະທຳບາບພຣະເຈົ້າຈະບໍ່ຢູ່ນຳບາບນັ້ນ ເມື່ອເຮົາ ບໍ່ເຮັດບາບພຣະເຈົ້າກໍຈະຊົງຢູ່ນຳ. ລູກາບອກວ່າ " *ແຕ່ຕາຂອງເຂົາໄດ້ຖືກຊົງບັງລັບໄວ້ ເພື່ອບໍ່ໃຫ້ເຂົາຮູ້ຈັກ ພຣະອົງ* " (ຂໍ້ 16). ຫລາຍເທື່ອເຮົາກໍບໍ່ຮູ້ວ່າພຣະເຈົ້າຊົງຢູ່ກັບເຮົາ ເພາະເຮົາບໍ່ສາມາດເບິ່ງເຫັນພຣະອົງ ດ້ວຍສາຍຕາຂອງເຮົາໄດ້.

ພຣະເຢຊູຖາມສາວົກທັງສອງວ່າ " *ເມື່ອມາຕາມທາງພວກທ່ານໄຕ່ຖາມກັນເຖິງເຣື່ອງໃດ" ແລະເຂົາໄດ້ຢຸດ ຢືນຢູ່ດ້ວຍໜ້າໂສກເສົ້າ* " (ຂໍ້ 17). ເມື່ອເຂົາໄດ້ຍິນພຣະອົງຖາມ ເຂົາກໍສະແດງອາການໂສກເສົ້າ ອາດເປັນ ເພາະເຂົາຈື່ຈຳເຫດການທີ່ເຂົາເຫັນພວກທະຫານກະທຳກັບພຣະເຢຊູທີ່ໄມ້ກາງແຂນ ຫລືເຂົາອາດໂສກເສົ້າ ເສັຽໃຈທີ່ຜູ້ຖາມບໍ່ຮູ້ອັນໃດເລີຍ ເໝືອນດັ່ງຄົນທັງຫລາຍໃນໂລກນີ້ບໍ່ຮູ້ວ່າພຣະເຢຊູທົນທຸກທໍຣະມານຈົນເຖິງ ແກ່ຄວາມຕາຍເພື່ອທຸກຄົນທີ່ຍອມເຊື່ອພຣະອົງ ເມື່ອເປັນເຊັ່ນນັ້ນສາວົກທັງສອງຈຶ່ງຕອບພຣະເຢຊູວ່າ " *ໃນ ບັນດາແຂກເມືອງທີ່ມາອາສັຍຢູ່ໃນກຸງເຢຣູຊາເລັມ ມີແຕ່ທ່ານຜູ້ດຽວຫລື ທີ່ບໍ່ຮູ້ເຫດການຊຶ່ງເກີດຂຶ້ນທີ່ນັ້ນລະ ຫວ່າງວັນເຫລົ່ານີ້* " (ຂໍ້ 18). ແລ້ວສາວົກທັງສອງຍັງບອກພຣະເຢຊູວ່າ " *ຄືເຂົາບໍ່ໄດ້ເຫັນສົບຂອງທ່ານ ຈຶ່ງ ມາບອກວ່າໄດ້ເຫັນນິມິດເປັນເທວະດາ ແລະເທວະດາໄດ້ບອກວ່າທ່ານມີຊີວິດຢູ່* " (ຂໍ້ 23). ເບິ່ງແລ້ວຄ້າຍຄື ນິທານຊຽງໝ້ຽງ ເພາະເຂົາເວົ້າເຣື່ອງພຣະເຢຊູໃຫ້ພຣະເຢຊູຟັງ, ດ້ວຍເຫດນີ້ພຣະເຢຊູຈຶ່ງກ່າວກັບເຂົາອີກວ່າ " *ໂອ ຄົນໂງ່, ຜູ້ມີໃຈເສີຍຊ້າໃນການເຊື່ອບັນດາຖ້ອຍຄຳ ຊຶ່ງພວກຜູ້ປະກາດພຣະທັມໄດ້ກ່າວໄວ້ນັ້ນຈຳເປັນ ທີ່ພຣະຄຣິດຈະຕ້ອງທົນທຸກທໍຣະມານຢ່າງນັ້ນ ແລ້ວເຂົ້າໄປໃນຣັສມີຂອງພຣະອົງ ບໍ່ແມ່ນຫລື* "(ຂໍ້ 25-26 ) ແປວ່າຄຳປະກາດຂອງຜູ້ປະກາດພຣະທັມທີ່ທ່ານເຄີຍໄດ້ຍິນ ເປັນຫຍັງຈຶ່ງບໍ່ເຊື່ອ ແລະບໍ່ເຂົ້າໃຈ.

## 3. <u>ຊົມຊື່ນຍິນດີເມື່ອຮູ້ເຣື່ອງ</u>: (ລູກາ 24: 28-35)

ເມື່ອມາຮອດບ້ານເອມາອູດຊຶ່ງເປັນບ້ານຂອງສາວົກທັງສອງແລ້ວ ພຣະເຢຊູກໍເຮັດຄືວ່າຈະຜ່ານກາຍໄປໃນ ເວລາຄ້ອຍຄ່ຳແລ້ວ, ສ່ວນສາວົກທັງສອງໄດ້ເຊີນພຣະອົງນອນພັກເຊົາເອົາແຮງທີ່ບ້ານຂອງເຂົາ "*ເຊີນທ່ານ ມາພັກເຊົາຢູ່ກັບເຮົາ ເພາະວ່າເວລາກໍຈວນຈະຄ່ຳແລ້ວ ແລະວັນກໍລ່ວງໄປຫລາຍແລ້ວ*" (ຂໍ້ 29). ແລ້ວພຣະ ອົງກໍຊົງຮັບຄຳເຊີນຂອງເຂົາໂດຍເຂົ້າໄປໃນເຮືອນກັບເຂົາ.

ຕອນນີ້ຂ້າພະເຈົ້າອາດພາບເຫັນວ່າ ພຣະເຈົ້າຊົງສະຖິດຢູ່ທຸກບ້ານເຮືອນກໍຈິງ, ຊົງຢູ່ໃກ້ກັບຄົນເຮົາທຸກຄົນກໍ

ຈິງ, ແຕ່ສິ່ງສຳຄັນນັ້ນແມ່ນເຮົາໄດ້ເຊີນພຣະອົງເຂົ້າມາໃນໃຈຂອງເຮົາຫລືບໍ່? ລາງເທື່ອເຮົາມາໂບດຫລາຍປີແລ້ວ ແຕ່ບໍ່ເຄີຍເຊີນພຣະເຢຊູເຂົ້າໃນໃຈຈົນເຖິງວັນນີ້, ຄິດວ່າວັນນີ້ທ່ານຄວນເຊີນພຣະອົງເຂົ້າໃນໃຈເໝືອນດັ່ງສາວົກທັງສອງເຊີນພຣະອົງໃນບົດຮຽນນີ້. ມາເບິ່ງເຣື່ອງຂອງສາວົກທັງສອງລອງເບິ່ງວ່າມີຫຍັງເກີດຂຶ້ນເມື່ອພຣະເຢຊູເຂົ້າໄປໃນເຮືອນເຂົາ.

ແນ່ນອນເມື່ອມີແຂກພັກເຊົາໃນບ້ານເຮືອນຈະຕ້ອງມີພາເຂົ້າແລງ ດັ່ງສາວົກທັງສອງໄດ້ຈັດພາເຂົ້າແລງຕ້ອນຮັບພຣະເຢຊູ, ແລງວັນນັ້ນໃນຂະນະທີ່ພຣະເຢຊູຊົງຮ່ວມຮັປທານອາຫານນຳເຂົານັ້ນພຣະອົງໄດ້ເປີດເຜີຍພຣະອົງເອງໃຫ້ເຂົາຮູ້ວ່າພຣະອົງແມ່ນພຣະເຢຊູຄຣິດຜູ້ທີ່ເຂົາເວົ້າເຖິງຕລອດທາງ. ໃນຂະນະທີ່ຮ່ວມກັນກິນເຂົ້າຢູ່ນັ້ນ " *ພຣະອົງຊົງຈັບເອົາເຂົ້າຈີ່ມາໂມທະນາພຣະຄຸນ ແລ້ວຊົງຫັກຍື່ນໃຫ້ເຂົາ ແລະຕາຂອງເຂົາກໍຖືກຊົງເປີດອອກ* " (ຂໍ້ 30). ການຫັກເຂົ້າຈີ່ແລ້ວແບ່ງໃຫ້ຜູ້ອື່ນຕໍ່ໆກັນໄປນັ້ນ ບໍ່ແມ່ນໜ້າທີ່ຂອງແຂກ ແຕ່ແມ່ນໜ້າທີ່ຂອງເຈົ້າບ້ານ, ພຣະເຢຊູໄດ້ຫັກເຂົ້າຈີ່ ແລ້ວຍື່ນໃຫ້ເຂົານັ້ນໝາຍເຖິງພຣະເຢຊູຊົງເປັນເຈົ້າຂອງໂລກຈັກກະວານ. ໃນເວລານັ້ນພຣະເຢຊູຊົງຈັບເອົາເຂົ້າຈີ່ມາແລ້ວອ້ອນວອນຂອບພຣະຄຸນພຣະເຈົ້າ ຊຶ່ງເປັນແບບຢ່າງດຽວກັນທີ່ພຣະອົງຊົງກິນສິນມະຫາສນິດຮ່ວມກັບສາວົກໃນ ມັດທາຍ 26:26, ດ້ວຍເຫດການນີ້ແຫລະຈຶ່ງເຮັດໃຫ້ຕາຂອງສາວົກຖືກເປີດອອກໂດຍຣິດອຳນາດຂອງພຣະເຈົ້າເພື່ອສຳແດງໃຫ້ເຂົາທັງສອງຮູ້ວ່າແມ່ນພຣະເຢຊູ ພຣະອົງຄືນມາຈາກຕາຍແລ້ວແລະມາຮ່ວມກິນເຂົ້າແລງທີ່ບ້ານເຮືອນຂອງເຂົາ.

ຂໍ້ 31 ບອກວ່າ " *ພຣະອົງກໍຊົງຫາຍໄປຈາກເຂົາ* " ຄຳວ່າຫາຍໄປຈາກເຂົາ ພຣະຄັມພີກໍບໍ່ໄດ້ບອກວ່າຫາຍໄປແບບໃດ ແລະກໍບໍ່ຄ່ອຍມີໃຜເວົ້າເຣື່ອງນີ້ ເພາະບໍ່ແມ່ນເປົ້າໝາຍຈະເວົ້າເຣື່ອງຫາຍ, ແຕ່ແມ່ນເປົ້າໝາຍເພື່ອບອກໃຫ້ສາວົກໄດ້ຮູ້ວ່າພຣະເຢຊູຊົງຄືນມາຈາກຕາຍແລ້ວ, ເພາະພຣະອົງໄດ້ຍ່າງສົນທະນາກັບເຂົາ, ກິນເຂົ້າຮ່ວມກັບເຂົານັ້ນ ມີຈຸດປະສົງຢາກບອກວ່າພຣະເຢຊູຊົງຄືນມາເປັນຄົນແທ້ໆ. ເມື່ອສາວົກທັງສອງໄດ້ຮັບຊາບຢ່າງຮຽບຮ້ອຍແລ້ວເຂົາກໍບໍ່ໄດ້ລໍຊ້າຈຶ່ງພາກັນລຸກຂຶ້ນຢ່າງກັບຄືນໄປກຸງເຢຣູຊາເລັມໃນຄ່ຳຄືນນັ້ນເລີຍ (ຂໍ້ 32) ເພື່ອໄປເລົ່າເຣື່ອງທັງໝົດໃຫ້ສາວົກສິບເອັດຄົນຟັງ. ນີ້ແຫລະຄົນທີ່ໄດ້ຍິນຂ່າວປະເສີດເຣື່ອງຂອງພຣະເຢຊູແທ້ໆ ຈະບໍ່ລໍຊ້າໃຫ້ເຖິງວັນໜ້າເພື່ອຈະໄປບອກຂ່າວດີ.

**ຄຳຖາມ:**

1. ແມ່ນໃຜເປັນຜູ້ຂໍເອົາພຣະສົບພຣະເຢຊູໄປບັນຈຸໄວ້ໃນອຸບໂມງຂອງລາວ?
2. ກ້ອນຫີນທີ່ອັດປາກອຸບໂມງຖືກກິ້ງອອກດ້ວຍຈຸດປະສົງອັນໃດ?
3. ພວກໃດໄປຍັງອຸບໂມງແຕ່ເຊົ້າມືດ
4. ເມື່ອສາວົກສອງຄົນຮູ້ວ່າພຣະເຢຊູຄືນມາແທ້ແລ້ວເຂົາເຮັດຫຍັງ?

*ຫວ*